# ອັກຂະຫລະລາວ

| ຈຸດຜະລິດສຽງ / ວິທີຜັນສຽງ | | | ຮີມສົບ | | ລີ້ນ | | | | ຂ້ອງຄໍ |
|---|---|---|---|---|---|---|---|---|---|
| | | | ຄູ່ | ແຂ້ວເທິງ | ປາຍລີ້ນ | | ກາງລີ້ນ | ກົກລີ້ນ | |
| | | | | | ແຂ້ວ | ເຫືອກ | | | |
| ອັດ | ຜົ່ວ | ບໍ່ກ້ອງ | ph | | | th | | kh | |
| | ບໍ່ຜົ່ວ | ບໍ່ກ້ອງ | p | | | | ch | k | |
| | | ກ້ອງ | b | | | d | | | |
| | ສຽງອອກທາງດັງ | | m | | | n | ñ | ŋ | |
| ຖູ | ບໍ່ກ້ອງ | | | f | | | s | | h |
| | ກ້ອງ | | | v | | | y | | |
| | ຂ້າງລີ້ນ(ກ້ອງ) | | | | | l | | | |
| ສຽງສັ່ນ | | | | | | r | | | |
| ເຄິ່ງສະຫຼະ ເຄິ່ງພະຍັນຊະນະ | | | w | | | | i | | ? |

ພາກວິຊາ ພາສາລາວ - ສື່ສານມວນຊົນ

2005

# ອັກຂະຫລະລາວ

ສຳລັບ ນັກສຶກສາ ປີທີ II

ພາກວິຊາ ພາສາລາວ - ສື່ສານມວນຊົນ

ຄະນະອັກສອນສາດ ມ.ຊ

ຮຽບຮຽງໂດຍ:

ອ.ຈ, ຄຳຮຸ່ງ ແສນມະນີ

ກວດແກ້ໂດຍ:

ຄະນາຈານໜ່ວຍງານ ພາສາລາວ

ພາກວິຊາ ພາສາລາວ - ສື່ສານມວນຊົນ

ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ

2005

# ອັກຂະຫຼະລາວ

## ສັງເຂບຄວາມເປັນມາຂອງອັກສອນລາວ

ພາສາລາວເປັນພາສາໜຶ່ງທີ່ເກົ່າແກ່ ມີປະຫວັດຄວາມເປັນມາຢ່າງລະອຽດລະອຽງວແລະຍາວນານ. ແຕ່ເນື່ອງຈາກວ່າ ໝາກຜົນການຄົ້ນຄວ້າກ່ຽວກັບປະຫວັດຄວາມເປັນມາຂອງພາສາລາວເຮົາ ກໍຍັງບໍ່ທັນມີຫຼາຍ. ໃນຈຳນວນທີ່ມີນັ້ນ ກໍມີແນວຄວາມຄິດ ທັດສະນະແຕກຕ່າງກັນອອກໄປ. ສະນັ້ນ, ໃນພາກນີ້ ເພື່ອຄວາມສະດວກ ແລະເພື່ອເປັນບ່ອນອີງ ໃນການສຶກສາຄົ້ນຄວ້າອັກຂະຫຼະລາວ. ພວກເຮົາໄດ້ເລືອກເອົາບົດຄົ້ນຄວ້າຂອງທ່ານ ທຸມພັນ ລັດຕະນະວົງ (ຫົວໜ້າບັນນາທິການ ວິທະຍາສານ ມໍລະດົກລ້ານຊ້າງ; ສະຖາບັນຄົ້ນຄວ້າວັດທະນະທຳ ກະຊວງຖະແຫຼງຂ່າວ ແລະວັດທະນະທຳ) ໄດ້ລົງພິມໃນວິທະຍາສານ ມໍລະດົກລ້ານຊ້າງ ປີທີ 1 ສະບັບທີ 2 ມີນາ ປີ 1996 ລາຍລະອຽດດັ່ງນີ້:

### I. ກຸ່ມຊົນອ້າຍລາວ ຫຼືລາວ-ໄຕ

#### 1. ມະໂນພາບລວມ

ກຸ່ມຊົນລາວ ຫລື ທີ່ເວົ້າແບບນຶ່ງວ່າ ຊົນເຜົ່າ ລາວ-ໄຕ ເປັນກຸ່ມຊົນໃຫຍ່ກຸ່ມນຶ່ງ ເຊິ່ງມາຈາກຊົນຊາດ " ອ້າຍລາວ " ຫລື ງາຍລາວ ກະແຈກກະຈາຍກັນຢູ່ໃນເຂດແດນ ອັນໄພສານ ຕັ້ງແຕ່ໄກວເຈົາ, ກວາງຊີ, ກວາງຕຸ້ງ ຂອງຈີນ ແລະພາກເໜືອຫວຽດ ນາມ; ທາງດ້ານຕາເວັນອອກ ຈົນຮອດແຄວ້ນອັດສຳຂອງອິນເດຍ; ທາງດ້ານຕາເວັນຕົກຕັ້ງແຕ່ແຂວງຢຸນນານຂອງຈີນ, ພາກເໜືອຂອງພະມ້າລົງໄປຈົນຮອດພາກເໜືອຂອງກຳພູຊາແລະຕອນໃຕ້ຂອງພາກໃຕ້ປະເທດໄທໂດຍພາຍໃຕ້ຊື່ກຸ່ມຍ່ອຍຕ່າງໆ ທີ່ແຕກຕ່າງກັນໄປເກືອບນັບບໍ່ຖ້ວນ; ຈົນມີບາງກຸ່ມ ຂາດສາຍຕິດຕໍ່ພົວພັນ ຫລືກາຍເປັນປໍລະປັກກັນແລະອາຄາດບາດໝາງກັນກໍມີ. ອະດີດຕະການຫລາຍພັນປີນັ້ນ ບໍ່ໄດ້ມີສິ່ງຢັ້ງຢືນແນ່ນອນວ່າ ກຸ່ມຊົນນີ້ມີຕົ້ນກຳເນີດ, ມີທີ່ຢູ່ອາໄສ ຫລື ມາຈາກດິນດອນຕອນໃດ? ແລະ ເມື່ອໃດ? ແຕ່ສິ່ງທີ່ພໍແນ່ນອນແດ່ ກໍຈະເຫັນໄດ້ແກ່ອານາຈັກ ທີ່ຕັ້ງຢູ່ພາກຕາເວັນຕົກ ຂອງແຂວງຢູນນານ ປະເທດຈີນ. ກ່ອນໜ້າຄິດຕະສັງກາດ 200-300 ປີ ໂດຍກວມເອົາສີ່ຫົວເມືອງໃຫຍ່ຂອງຈີນປັດຈຸບັນ ຄື ເປົາຊານ, ຕາຫລີ, ຢຸນທົງ ແລະ ຢົງພິງ[1] ວິວັດທະນາການອັນລະອຽງວ ແລະໂຊກຊົນຂອງປະຫວັດສາດ,ສະພາວະສົງຄາມລ່າດິນແດນ, ການປະຫັດປະຫານລະຫວ່າງກຸ່ມຊົນກັນເອງ, ຂົຍຸກພະຍຸລະບາດ, ໄພທຳມະຊາດ. ທັງໝົດເຫລົ່ານີ້ ເປັນສາເຫດຕົ້ນຕໍບັງຄັບໃຫ້ຊົນຊາດອ້າຍລາວ ຫຼືກຸ່ມ ຊົນລາວ -ໄຕທະຍອຍກັນອົບພະຍົບ ຈາກຖິ່ນຖານດັ້ງເດີມຂອງຕົນໄປສູ່ແຫ່ງທີ່ປອດໄພ ແລະບ່ອນດິນດຳນ້ຳຊຸ່ມເຊິ່ງບໍ່ຕ່າງຫຍັງກັບສາເຫດການອົບພະຍົບ, ເຄື່ອນຍ້າຍ ຖິ່ນຖານຂອງເຜົ່າຕ່າງໆໃນໂລກເລີຍ. ຕາມຂໍ້ມູນທາງປະຫວັດສາດ ຕັ້ງແຕ່ການສ້າງຕັ້ງ ອານາຈັກອ້າຍລາວເປັນຕົ້ນມາ ໄດ້ເກີດມີສົງຄາມ ແລະການປາບປາມ ບັ້ນໃຫຍ່ຫລາຍບັ້ນ (6 -7 ບັ້ນ)ໃນສະໄໝການແຜ່ອິດທິພົນຂອງສັກດີນາຫານ. ຊົນຊາດອ້າຍລາວ ອັນເປັນບັນພະຊົນຂອງກຸ່ມຊົນລາວ-ໄຕ ກຸ່ມຕ່າງໆ ເມື່ອແຕກກົ່ງງ່າ ແລະດຳລົງຊີວິດຫ່າງເຫີນຈາກກັນອອກໄປແລ້ວ ກໍມີຊື່ກຸ່ມຍ່ອຍຂອງຕົນອອກໄປ ແລະວິວັດທະນາການດ້ານສິລະປະ, ວັດທະນະທຳ, ຮີດຄອງປະເພນີຂອງຕົນ ແຕກຕ່າງອອກໄປ ໂດຍ

---

[1]. ອານາຈັກອ້າຍລາວນັ້ນ ປາກົດວ່າມີຢູ່ຫລາຍແຫ່ງ.

ການປະສົມປະສານຂອງການຮັບເອົາອິດທິພົນວັດທະນະທຳ ຈາກທ້ອງຖິ່ນທີ່ຕົນອາໄສຢູ່. ກຸ່ມຊົນຕ່າງໆ ເຫລົ່ານີ້ມັກຈະເອົາຊື່ຫົວໜ້າກຸ່ມຂອງຕົນ ຫລື ຫ້ວຍນ້ຳລຳເຊ; ພູຜາປ່າດົງ ຫລື ເອກະລັກສະເພາະໃດນຶ່ງ ຂອງຕົນມາເປັນຊື່ຂອງກຸ່ມ ຫລື ບໍ່ກໍຮັບເອົາຊື່ທີ່ຊາດອື່ນຮຽກຕົນ. ຕົວຢ່າງ " ພວກນຸ່ງ " ທີ່ພາກເໜືອ ຫວຽດນາມແມ່ນ ມາຈາກຊື່ຫົວໜ້າກຸ່ມຂອງຕົນທີ່ວ່າ " ນຸ່ງຈີເກົາ "; ກຸ່ມເຜົ່າຈ້ວງ ກໍມາຈາກຊື່ຂອງແສນ ເມືອງສະໄໝອານາຈັກນ່ານເຈົ້າ; " ເຜົ່າສານ " ກໍມາຈາກຊື່ພູ ເປັນພາສາຈີນຄື ອ້າຍລາວ (ອ້າຍລາວພູ ຫລື ພູເຂົາອ້າຍລາວ) ດັ່ງນີ້ເປັນຕົ້ນ. ອານາຈັກນ່ານເຈົ້າໄດ້ຮັບການສະຖາປານາຂຶ້ນ ໃນສະຕະວັດທີ VII ຂອງຄິດຕະສັງກາດ ພ້ອມກັນປາກົດຕົວຂຶ້ນເປັນຄັ້ງທຳອິດຂອງຄຳວ່າ ໄຕ ( 𝓉 )[2] ເຊິ່ງເປັນກຽດຕິ ນາມກະສັດ ເຊັ່ນ ໄຕມົງ, ໄຕຈາງຫໍ, ໄຕແຖນຣົງ, ໄຕຍິນໝົ້ງ ເຫລົ່ານີ້ເປັນຕົ້ນ. ໃນການສະຖາປະນາ ອານາຈັກນານເຈົ່າ ດັ່ງກ່າວມານັ້ນ ຜູ້ທີ່ມີບົດບາດສຳຄັນສົມຄວນ ກໍຄືງຈະໄດ້ແກ່ ຊົນຊາດອ້າຍລາວ ຫລື ກຸ່ມຊົນລາວ-ໄຕນັ້ນເອງ. ເພາະເປັນຊົນຊາດສຳຄັນ ແລະໃຫຍ່ສົມຄວນໃນຍ່ານນັ້ນ. ຈາກຈຸດພິເສດ ທີ່ກຸ່ມຊົນ ລາວ-ໄຕ ກໍຄືກຸ່ມຊົນເຜົ່າຕ່າງໆ ມັກຮຽກຊື່ພວກເຜົ່າຂອງຕົນເອງ ຕາມຊື່ຂອງພະເຈົ້າແຜ່ນດິນ ຫລື ຜູ້ເປັນຫົວໜ້າກຸ່ມຂອງຕົນ ເຊັ່ນ ພວກໄຕມົ້ງ ແປວ່າ ພວກຄົນ ຫລື ກຸ່ມຄົນ ທີ່ຢູ່ພາຍໃຕ້ການປົກຄອງ ຂອງໄຕມົ້ງ ຫລື ພະເຈົ້າມົ້ງ; ຄຳວ່າ "ໄຕ" ຈຶ່ງຄ່ອຍໆກາຍມາເປັນຄຳເຄີຍຊົນ ຕິດປາກຂອງຜູ້ຄົນ ໃນ ການຮຽກຊື່ກຸ່ມຊົນຕົນເອງ. ຈາກນັ້ນມາ ຄຳວ່າ "ໄຕ" ກໍກາຍມາເປັນສາມັນຍະນາມວັດທະນະທຳ ແປວ່າ ຄົນ, ປະຊາຊົນ, ພົນລະເມືອງ, ຊາວ ເຊັ່ນ ໄທບ້ານນອກ, ໄທຫຼວງພະບາງ, ໄທອູ, ໄທຂອງ, ໄທລາວ... ຈາກນັ້ນມາອີກ ຄຳວ່າ "ໄຕ" ຈຶ່ງຄ່ອຍຍຶດຖານະ ແລະຕຳແໜ່ງຄວາມໝາຍໃໝ່ ອັນເນື່ອງມາຈາກການ ແຍກເອົາມາເປັນຊື່ຊາດ ແລະ ສັນຊາດຂອງຕົນກໍມີ. ຕົວຢ່າງອັນມາກມາຍຈາກເອກະສານທາງປະຫວັດ ສາດສະແດງໃຫ້ເຫັນວ່າ ກຸ່ມຊົນທີ່ຮຽກຕົນເອງ ຫລື ຖືກຮຽກວ່າ "ໄຕ" ຫລື ໄທນັ້ນທີ່ຈິງແລ້ວ ມີຊື່ເດີມວ່າ "ລາວ" ຫລື ມີວິວັດທະນາການມາຈາກ ອ້າຍລາວທັງນັ້ນ ເຊັ່ນ ກ່ອນສະຕະວັດ ທີ VI ພວກໄຕຕ່າງໆ ໃນພາກເໜືອຫວຽດນາມຍັງຮຽກຕົນເອງວ່າ ລາວ ຫລື ເມິງລາວ. ພວກລື້ ຖືກຮຽກວ່າ ຈິວຫລຽວ ແປວ່າ ລາວນ້ອຍ. ພວກສານຖືກຮຽກວ່າລາວສານ ຫລື ລາວມ່ຽນ ແປວ່າ ລາວເທິງພູ ຫລື ລາວພະມ້າ. ພວກ ຍວນ ຫລື ພວກລ້ານນາ ກໍຮຽກຕົນເອງວ່າ ລາວ ຫລື ລາວຈົກ... ສ່ວນລາວລ້ານຊ້າງໃນປັດຈຸບັນ ຍັງຮັກ ສາຊື່ເດີມຂອງຕົນເອງໄວ້ຢູ່ ເຊິ່ງຊາວຫວຽດນາມ ຫລື ຊາວກຳປູຊາ ຮຽກຊື່ວ່າ ອ້າຍແລວ ຫລື ອ້າຍລາວ. ກຸ່ມຊົນລາວ-ໄຕຫລື ຊົນຊາດອ້າຍລາວໄດ້ແຕກກິ່ງງ່າສາຂາອອກໄປ ເປັນຫລາຍກຸ່ມ ຫລາຍພວກ. ບາງ ພວກຍັງຮັກສາຄຳວ່າ "ລາວ" ໄວ້ໃນຮູບໃດນຶ່ງ; ບາງພວກກໍໃຊ້ຄຳວ່າ "ໄຕ" ຫລື ໄທນຳໜ້າ; ບາງພວກກໍ ມີຊື່ໂດດດ່ຽວເຊັ່ນ :

- ລາວ (ທີ່ປະເທດລາວ, ພາກອີສານຂອງໄທ, ລ້ານນາ, ຊຽງແຕງກຳປູເຈຍ, ຫວຽດນາມ)
- ໝູ່ລາວ, ເກົາລາວ, ຖູ່ລາວ ຫລື ໂຖ (ເຂດໄກວເຈົາ, ກວາງຊີຂອງຈີນ ແລະພາກເໜືອຫວຽດນາມ)
- ໄທ (ປະເທດໄທສະຫຍາມໃນເມື່ອກ່ອນ)
- ໄຕດຳ, ໄຕແດງ, ໄຕຂາວ, ໄຕເໜືອ, ຜູ້ໄຕ ຫລື ຜູ້ໄທ (ລາວທາງພາກເໜືອ ຫວຽດນາມ ແລະຈີນ)

---

2 . ພາສາຈີນເດີມອອກສຽງ"ຕົາ", ພາສາຈີນໃໝ່ອອກສຽງ"ໄຕ", ພາສາຈີນກວາງຕຸ້ງອອກສຽງ"ໄຕ" ຫລື "ໄທ", ພາສາ ຫວຽດອອກສຽງ"ດ້າຍ" ມີຄວາມໝາຍວ່າ: ໃຫຍ່, ຫຼວງ, ພະຍາ, ລາຊາ

- ຈ້ວງ, ນຸ່ງ, ຢໍ້, ຍັ້ງ (ທີ່ກວາງຊີຂອງຈີນ, ພາກເໜືອຫວຽດນາມ ແລະລາວ)
- ລື້, ໄຕໂຂງ, ຢ້າ (ທີ່ລາວ ແລະແຂວງຢຸນນານຂອງຈີນ)
- ງຽວ, ສານ ແລະເຂີນ (ທີ່ພະມ້າ)
- ຄຳຕີ, ອາຫົມ (ທີ່ອິນເດຍ)

ນອກຈາກຊື່ຕ່າງໆເຫລົ່ານີ້ແລ້ວ ຍັງມີຊື່ຍ່ອຍອີກມາກມາຍກ່າຍກອງ ຈົນເຮັດໃຫ້ສັບສົນ ເຊັ່ນ ໄປ່ມິນ, ໂປ້ເຢີນ, ຕີຢາງເກ້ວ, ປິດສິ້ວ, ຈ້າເຢີນ, ນົງເຢີນ... ເຊິ່ງໄດ້ກາຍ ເປັນພາສາຊົນຊາດອື່ນໄປ.

2. ແຜນທີ່ສະແດງເຖິງກຸ່ມຊົນຕ່າງໆ



3. ສັງຄົມ ແລະວັດທະນາທຳຂອງກຸ່ມຊົນ ລາວ-ໄຕ

ມັນເປັນສິ່ງແນ່ນອນແລ້ວວ່າ ເຜົ່າຊົນນຶ່ງໆກໍາເນີດຂຶ້ນພ້ອມໆກັບວັດທະນະທຳທີ່ເປັນຂອງຕົນເອງ. ວັດທະນະທຳດັ່ງກ່າວນັ້ນ ເມື່ອຜ່ານຂະບວນວິວັດປະຫວັດສາດອັນຍາວໄກ ແລະ ສະຫລັບສັບຊ້ອນຫລາຍຍຸກຫລາຍສະໄໝ, ຫລາຍກາລະເທສະ ແລະກໍໄດ້ຮັບການກໍ່ເສີມເຕີມຕໍ່ ຈາກການແລກປ່ຽນທາງດ້ານວັດທະນາທຳ ໂດຍທຳມະຊາດລະຫວ່າງກຸ່ມຊົນຕ່າງໆ ທີ່ຢູ່ຮ່ວມກັນ ຫລື ຮອບຕົວ; ຈາກອິດທິພົນທາງວັດທະນະທຳຂອງຊາດຕ່າງໆ ທີ່ມີຄວາມຈະເລີນກ່ອນແລ້ວນັ້ນ ກໍຈະເຮັດໃຫ້ວັດທະນະທຳຂອງເຜົ່າຊົນໜຶ່ງໆເພີ່ມສີສັນ, ເພີ່ມຄວາມອຸດົມຮັ່ງມີຂຶ້ນເປັນທຳມະດາ.

ໃນກໍລະນີວັດທະນາທຳຂອງເຜົ່າອ້າຍລາວ ຫຼື ປັດຈຸບັນຮຽກວ່າກຸ່ມຊົນລາວ-ໄຕ ນີ້ ກໍນອນຢູ່ໃນຂະບວນວິວັດພາຍໃຕ້ກົດເກນລວມຄືກັນນັ້ນເອງ. ຊົນເຜົ່າອ້າຍລາວ ຫລື ກຸ່ມຊົນ ລາວ-ໄຕເຖິງຈະອົບພະຍົບໄປຕັ້ງຖິ່ນຖານ ຫລື ດຳລົງຊີວິດຢູ່ສະຖານທີ່ແຫ່ງໃດ ກໍຈະຍັງຮັກສາເອກະລັກ ຫລື ມູນເຊື້ອວັດທະນະທຳອັນເປັນພື້ນຖານ ຂອງຕົນໄວ້ຈະແມ່ນວາດການກິນຢູ່, ທຳມາຫາກິນ, ການນຸ່ງຖື, ພາສາປາກເວົ້າ, ນິໄສໃຈຄໍ ແລະ ອື່ນໆກໍເຊັ່ນກັນ. ຕັ້ງແຕ່ການແຍກກຸ່ມ, ແຍກພວກກັນມາເປັນເວລາດົນນານຂາດການພົວພັນຕິດຕໍ່ກັນ, ການແຍກຊື່ເຜົ່າ, ຊື່ເຈົ້າກົກເຈົ້າເຫລົ່າການຕົກຢູ່ພາຍໃຕ້ເຂດດິນແດນ ແລະເຂດອິດທິພົນທາງດ້ານວັດທະນະທຳ. ການປະປົນກັນລະຫວ່າງຕ່າງເຜົ່າ ຕ່າງວັດທະນະທຳຢ່າງຫລາກຫລາຍນັ້ນ ເຮັດໃຫ້ກຸ່ມຍ່ອຍຂອງຊົນເຜົ່າລາວ-ໄຕ ມີສີສັນ ແລະ ຈຸດພິເສດທາງດ້ານວັດທະນະທຳ ແບບສະຫລັບສັບຊ້ອນ, ຫລາກຫລາຍ. ຖ້າເບິ່ງແບບຜິວເຜີນແມ່ນບໍ່ສາມາດເຂົ້າໃຈຫຍັງໄດ້ເລີຍ.

4. ການໃຊ້ພາສາໃນກຸ່ມຊົນ ລາວ-ໄຕ

ກຸ່ມຊົນລາວ-ໄຕ ອັນມາຈາກກຸ່ມຊົນອ້າຍລາວນັ້ນ ມີພື້ນຖານພາສາປາກເວົ້າ ເປັນຂອງຕົນເອງອັນສະແດງເຖິງເອກະລັກ, ຄວາມເປັນເຜົ່າພັນ ຫລື ຊາດພັນອັນສົມບູນເປັນຂອງຕົນເອງ. ພື້ນຖານພາສາປາກເວົ້ານັ້ນ ສະແດງເຖິງຄຳເວົ້າທຳມະດາສາມັນ ເຊັ່ນ ນົກ, ໝູ, ປູ, ປາ, ດິນ, ນ້ຳ, ລົມ, ໄຟ ຫລື ເຮືອນຊານບ້ານຊ່ອງ ດັ່ງນີ້ເປັນຕົ້ນ ແຕ່ການເວລາ, ສະພາບແວດລ້ອມ ກໍຄືການແຍກເຜົ່າພັນ,ການຜົດຜັ່ນກັນລະຫວ່າງກຸ່ມຊົນຍ່ອຍຕ່າງໆ ເຊິ່ງເປັນເລື່ອງທຳມະຊາດວິໄສ ດັ່ງຈະເຫັນໄດ້ ຈາກສຳນຽງຕ່າງໆໃນລາວ. ນອກຈາກນັ້ນ, ມັນຍັງໄດ້ຮັບການກໍ່ເສີມເຕີມຕໍ່ຈາກພາສາຂອງເຜົ່າຊົນຕ່າງໆ ໃນເຂດແຄວ້ນທີ່ອາໄສຢູ່ຮ່ວມກັນ ແລະອິດທິພົນຈາກພາສາຊາດອື່ນໆ ທີ່ມີຄວາມສີວິໄລກວ່າ; ເຮັດໃຫ້ພາສາດັ່ງກ່າວເພີ່ມຄວາມອຸດົມຮັ່ງມີຂຶ້ນເລື້ອຍໆ. ຕົວຢ່າງປະຈັກໃນເລື່ອງນີ້ກໍຄືຈະເຫັນໄດ້ຈາກສັບ, ສຳນວນຄຳເວົ້າໃນພາສາເຜົ່າຕ່າງໆຂອງທ້ອງຖິ່ນ. ມີພາສາຕະກຸນມອນຂະແມ ປະປົນຢູ່ກັບພາສາດັ້ງເດີມຂ ອງລາວ ໂດຍບໍ່ນັບພາສາບາລີ ແລະສັນສະກິດ ທີ່ມາເສີມພາສາລາວໃນຍຸກຫລັງໆ ອັນໄດ້ກໍ່ໃຫ້ເກີດ ມີບາດລ້ຽວແຫ່ງການປ່ຽນແປງທາງດ້ານພາສາ ພ້ອມໆກັບການ ປ່ຽນແປງໃຫຍ່ໆ ທາງດ້ານວັດທະນະທຳຂະນົບປະເພນີ ແລະການເຊື່ອຖື. ເຂົ້າໃຈກັນວ່າ ກ່ອນທີ່ກຸ່ມຊົນລາວ-ໄຕ ໄດ້ນຳໃຊ້ຕົວອັກສອນເຄື່ອງໝາຍຂອງຈີນ ເປັນພາຫະນະໃນການບັນທຶກ ພາສາປາກເວົ້າຂອງຕົນ ແລະ ການຕິດຕໍ່ສື່ສານກັບກຸ່ມຊົນອື່ນໆ.

ຂະບວນວິວັດ ແຫ່ງການເຄື່ອນຍ້າຍຂອງເຜົ່າພັນອ້າຍລາວ ກະຈາຍກັນໄປສູ່ສາລະທິດ ເປັນຕົ້ນແມ່ນດິນແດນຕອນໃຕ້ນັ້ນ ນອກຈາກຈະແມ່ນວິວັດແຫ່ງການຕໍ່ສູ້ປົດປ່ອຍຕົນເອງ ຂອງກຸ່ມຊົນນີ້ ອອກຈາກແອກຄອບຄອງ ຂອງຈັກກະພັດແລະສັກດີນາຈີນແລ້ວ ມັນຍັງແມ່ນຂະບວນວິວັດປົດປ່ອຍຕົນເອງ

ອອກຈາກອິດທິພົນທາງດ້ານວັດທະນາທຳຂອງຈີນອີກດ້ວຍ. ເພື່ອຫັນມາຮັບເອົາວັດທະນາທຳ ທີ່ມາຈາກອິນເດຍ ເຊິ່ງແມ່ນວັດທະນາທຳ ທີ່ສົ່ງເສີມໃຫ້ມີມະນຸດສະທຳ, ມີສິນທຳ, ມີຄວາມເປັນທຳ, ມີຄວາມອະໂຫສິກຳ, ຮັກຄວາມສະຫງົບ ແລະດັບກິເຫລດຕັນຫາ ທັງປວງ.

"ສື "ຫລື ໜັງສືໃນພາສາລາວ ຫລື ໃນກຸ່ມຊົນ ລາວ-ໄຕນັ້ນ ມີຂໍ້ມູນມາຈາກພາສາຈີນ ທີ່ເວົ້າວ່າ "ຈື້" (chữ). ການທີ່ກຸ່ມຊົນນີ້ມີຊື່ຮຽກຕົວໜັງສືຮ່ວມກັບພາສາຈີນນັ້ນ ກໍສະແດງວ່າ ກຸ່ມຊົນນີ້ ຮູ້ໂຕໜັງສືຈີນ ແລະເຄີຍໃຊ້ຕົວໜັງສືຈີນມາກ່ອນແລ້ວ. ຊາວຫວຽດນາມທີ່ເປັນຊົນເຜົ່າໃກ້ຄຽງ ກັບຊົນເຜົ່າລາວ-ໄຕ ກໍຮຽກຕົວໜັງສືວ່າ "ຈື້"ຄືກັນແລະກໍຍັງໄດ້ນຳໃຊ້ຕົວອັກສອນຂອງຈີນ ດັດມາເປັນຕົວອັກສອນ "ຈື້ຫານນົມ" (chữ hán nôm) ເຊັ່ນກັນ ເມື່ອຫັນມາຮັບເອົາອິດທິພົນ ທາງວັດທະນາທຳຂອງອິນເດຍ

ໂດຍສະເພາະແມ່ນຜ່ານທາງສາສະໜາແລ້ວກຸ່ມຊົນລາວ-ໄຕ ກໍຄ່ອຍໆປະລະຕົວອັກສອນເຄື່ອງໝາຍຂອງຈີນ ແລ້ວຫັນມາຮັບ ແລະ ດັດເອົາຕົວອັກສອນ ທີ່ມີອັກຂະຫລະວິທີຂອງອິນເດຍມາໃຊ້. ນີ້ກໍເປັນຂະບວນວິວັດທີ່ສະຫລັບສັບຊ້ອນ ແລະ ຄົງຈະເປັນໄປແບບກະແຈກກະຈາຍ. ໃນເບື້ອງຕົ້ນ ຕ່າງກຸ່ມຍ່ອຍຕ່າງກໍຮັບເອົາມາໃຊ້ພໍໃຜພໍລາວ ຕາມເງື່ອນໄຂ ແລະ ຕາມຄວາມເໝາະສົມໃນເວລານັ້ນ; ຕໍ່ມາກໍໄດ້ປະສົມປະສານກັບອີກ ຈົນກາຍມາເປັນຕົວອັກສອນມາດຕະຖານປັດຈຸບັນຂອງບາງກຸ່ມຍ່ອຍ.

*** ເຫດຜົນໃນການຮັບເອົາໜັງສືອິນດຽມາໃຊ້ນີ້ ກໍມີຢູ່ດ້ວຍກັນຫລາຍປະການ ເຊັ່ນ ປະການສຳຄັນທຳອິດ ກໍແມ່ນສາສະໜາທີ່ເຂົ້າມາໃນອາຊີ-ອາຄະເນເລີ່ມແຕ່ສະຕະວັດຕົ້ນຂອງຄິດຕະສັງກາດເປັນຕົ້ນມາ; ປະການທີ່ສອງ ກໍແມ່ນມອງເຫັນວ່າ ການໃຊ້ໜັງສືແບບມີອັກຂະຫລະວິທີນີ້ມີລັກສະນະກ້າວໜ້າກວ່າ ເພາະເຮັດໃຫ້ໜັງສືດັ່ງກ່າວນັ້ນ ງ່າຍດາຍຂຶ້ນຫລາຍ ເຊິ່ງອັກຂະຫລະເຫລົ່ານີ້ ມີອັກຂະຫລະຈຳນວນຈຳກັດ ແຕ່ສາມາດບັນທຶກ ຄຳສັບຕ່າງໆໄດ້ຈຳນວນມາກມາຍ; ໂດຍຫລຸດຜ່ອນຄວາມລຳບາກໃນການຫາ ແລະ ຈື່ເຄື່ອງໝາຍທີ່ມີ ແລະ ຕ້ອງມີຢ່າງອັກໂຂ ເພື່ອຈະສາມາດບັນທຶກພາສາປາກເວົ້າໃຫ້ຄົບຖ້ວນໄດ້; ປະການທີ່ສາມ ກໍອາດແມ່ນເຫດຜົນທາງການເມືອງແລະທາງປັດສະຍາ ທີ່ໄດ້ກ່າວມາຂ້າງເທິງ.

ຈຸດພິເສດ ຂອງຕົວອັກສອນເຄື່ອງໝາຍຕະກຸນຈີນ ກໍຄືການໃຊ້ເຄື່ອງໝາຍ ສະແດງເຖິງວັດຖຸອັນນຶ່ງ ຫລື ຈິນຕະນາການນຶ່ງ ເຊັ່ນ ມີເຄື່ອງໝາຍສຳລັບ ຄົນ, ສັດ, ດິນ,ນ້ຳ, ລົມ, ໄຟ, ຄວາມສຸກທຸກ ແລະອື່ນໆ ດັ່ງນີ້ເປັນຕົ້ນ. ໂດຍບໍ່ໄດ້ໃຊ້ອັກຂະຫລະວິທີ ມາເປັນຫລັກໃນການຟ້ອງສຽງ ຫລື ບັນທຶກສຳນຽງພາສາປາກເວົ້າເລີຍ. ເມື່ອເປັນເຊັ່ນນັ້ນ ຕ້ອງມີຢູ່ຢ່າງມະຫາສານ ອັນສ້າງຄວາມລຳບາກໃຫ້ແກ່ການຈົດຈື່ຂອງຄົນ. ແຕ່ຕົວອັກສອນປະເພດນີ້ ກໍມີຜູ້ຄົນໃຊ້ຢ່າງຫລວງຫລາຍ ເຊັ່ນ ຊາວຈີນ, ມົງໂກນ, ຍີ່ປຸ່ນ, ເກົາຫລີ ແລະຊົນເຜົ່າສ່ວນໜ້ອຍຕ່າງໆໃນຈັກກະພົບຈີນ. ແຕ່ກ່ອນຍັງມີ ຫວຽດນາມ ແລະຊົນເຜົ່າອ້າຍລາວ ຫລື ກຸ່ມຊົນ ລາວ-ໄຕນຳດ້ວຍ. ກະສັດ ໂກະລໍຟົງ ແຫ່ງອານາຈັກ ນ່ານເຈົາ ໃນຊຸມປີ ຄິດຕະສັງກາດ 760 ເຊິ່ງບໍ່ແມ່ນເຊື້ອຊາດຫານ ກໍໃຊ້ຕົວອັກສອນເຄື່ອງໝາຍຂອງຈີນ ເພື່ອບັນທຶກເຫດການໃນລາຊະສຳນັກຂອງພະອົງ ອັນສະແດງວ່າ ພົນລະເມືອງຂອງອານາຈັກນ່ານເຈົາ ທີ່ປະກອບດ້ວຍຕົ້ນຕະກຸນເຊື້ອຊາດອ້າຍລາວ, ຕະກຸນຕິເບດ - ພະມ້າ, ແລະ ຈີນ - ຕິເບດ ໃນອານາຈັກ ດັ່ງກ່າວໄດ້ສຳຜັດ ແລະໃຊ້ຕົວອັກສອນເຄື່ອງໝາຍຂອງຈີນມາກ່ອນແລ້ວ.

## II. ໜັງສືກຸ່ຍເຈົ່າ,ຫຼັກຖານຂອງການປະລະການໃຊ້ອັກສອນເຄື່ອງໝາຍ ຂອງຈີນແລ້ວຫັນມາຮັບເອົາໜັງສືທີ່ມີອັກຂະຫລະວິທີແບບອິນເດຍ

### 1. ກຸ່ຍເຈົ່າ

ກຸ່ຍເຈົ່າເປັນທີ່ຊຸມຊົນ ຫລື ເມືອງນ້ອຍເມືອງນຶ່ງ ທີ່ຂຶ້ນກັບແຂວງເງະອານ ປະເທດຫວຽດນາມ. ປັດຈຸບັນມີຊື່ຮຽກ ອີກຊື່ນຶ່ງວ່າ ພູກຸ່ຍ. ເມື່ອເບິ່ງຕາມແຜ່ນທີ່ແລ້ວ ພວກເຮົາຈະເຫັນວ່າກຸ່ຍເຈົາຢູ່ລະດັບເສັ້ນຂະໜານຕັ້ງ ລະດັບດຽວກັນ ກັບເມືອງຊຽງຂວາງຂອງລາວ ຄື 19 ອົງສາຈຸດ 4. ກຸ່ມຊົນລາວ-ໄຕ ທີ່ອາໄສຢູ່ໃນກຸ່ຍເຈົາ ກໍຄືແຂວງນີ້ມີຊື່ຮຽກວ່າ ຜູ້ໄຕ ຫລື ໄທແດງ (ພາສາເກົ່າຂອງຫວຽດນາມ ຍັງເວົ້າວ່າແມ່ນພວກອ້າຍລາວ) . ສັນນິຖານກັນວ່າ ຄົນຈຳພວກນີ້ຕັ້ງແຕ່ເດີມຕັ້ງຢູ່ເມືອງປະກັນ ເຂດກາວບັ່ງ ເຊິ່ງເອກະສານເກົ່າແກ່ຂອງຈີນຮຽກວ່າ ເມິງລາວ; ຄົນຈຳພວກນີ້ ມີຊື່ຮຽກຢ່າງອື່ນອີກ ພວກຈວງ, ພວກນຸ່ງ (ນຸ່ງເປັນ) ແລະໂຖລາວ ຫລືໂຖ (ພາສາຫວຽດນາມ). ຂໍ້ມູນບາງຢ່າງກ່ຽວກັບເລື່ອງນີ້ຈະໄດ້ນຳມາເວົ້າຕື່ມໃນຕອນຕໍ່ໆໄປ.

**2. ໜັງສືກຸ່ຍເຈົ່າ:** ເປັນໜັງສືປະເພດແປກປະຫລາດປະເພດນຶ່ງ ໂດຍໃຊ້ຕົວອັກສອນ ທີ່ມີອັກຂະຫລະວິທີແບບປະຖົມປະຖານ ອັນແຜ່ງມາຈາກຮາກເຫງົ້າຕົວອັກສອນປັນລະວະ ຂອງອິນເດຍ ແຕ່ຂຽນດ້ວຍຟອຍຈີນ ແລະ ເຕັກນິກຂອງການຮຽງຕົວອັກສອນເຄື່ອງໝາຍຂອງຈີນ ຄື ຂຽນແຕ່ເທິງລົງລຸ່ມ ແລະແຕ່ຂວາຫາຊ້າຍ. ✗

ກ່ຽວກັບຕົວອັກສອນປະເພດນີ້ ກໍຄືໂດຍທົ່ວໄປຂອງກຸ່ມຊົນ ລາວ - ໄຕ ໃນເຂດຕົງແກງນັ້ນ; ທ່ານ ຊ້ອກເຊແດັສ ໃຫ້ຄວາມເຫັນວ່າ ຖ້າສັງເກດລັກສະນະຕົວອັກສອນຂອງພວກໄຕ ໃນຕົງແກງແລ້ວປາກົດວ່າ ພວກເຂົາເອົາມາຈາກ ຕົວອັກສອນລາວລ້ານຊ້າງ,ແຕ່ຮູບແບບຜັງນໄປ ແລະ ຂີ້ຮ້າຍລົງຫຼາຍ[3] ແຕ່ ທ່ານ ລຸຍຟີໂນ ນັກປາດຝຣັ່ງ ອີກຜູ້ນຶ່ງ ພັດໃຫ້ທັດສະນະວ່າ ພວກໄຕທີ່ຕົງແກງ ມີຕົວອັກສອນປະເພດນຶ່ງ ທີ່ຕ່າງຈາກຕົວອັກສອນຂອງສະຫຍາມ ແລະລາວຢ່າງຂາດຕົວ. ກ່ອນອື່ນໝົດ ຮູບລັກສະນະຂອງມັນ ມີຄວາມຄາດເຄື່ອນຢ່າງເຫັນໄດ້ແຈ້ງ ເຊິ່ງອາດຈະເນື່ອງມາຈາກການໃຊ້ຟອຍຈີນ ອັນພາໃຫ້ຂຽນເສັ້ນກົ່ງ ແລະ ຂອດຕ່າງໆໃນຕົວອັກສອນອິນເດຽໄດ້ຍາກ; ແຕ່ຂະນະດຽວກັນນັ້ນ ກໍສາມາດເວົ້າໄດ້ອີກຢ່າງນຶ່ງວ່າ ມີການໃຊ້ຕົວໜັງສືປະເພດນີ້ ມາແຕ່ດົນນານແລ້ວ. ນອກຈາກນັ້ນ ຕົວໜັງສືປະເພດນີ້ ຍັງບໍ່ທັນເຖິລຳດັບການຈັດວາງ ຕາມແບບປະເພນີ ຂອງພະຍັນຊະນະອິນເດຍດ້ວຍ. ຕົວອັກສອນນີ້ ປາກົດວ່າ ຂຽນຍັ່ງຍາຍກັນຢ່າງບໍ່ມີຫລັກ, ບໍ່ມີລະບຽບຈັດວາງແຕ່ຢ່າງໃດ.

ຈະບໍ່ເປັນທຳມະດາທີ່ສຸດ ຖ້າຈະບໍ່ເຊື່ອວ່າ ພະຍັນຊະນະທີ່ບໍ່ເຂົ້າຫລັກເກນດັ່ງກ່າວນັ້ນ ແມ່ນປາກົດການສະແດງເຖິງຄວາມພະຍາຍາມຄັ້ງທຳອິດ ທີ່ຈະໃຊ້ໜັງສືຂອງອິນເດຍ ບັນທຶກພາສາທີ່ມີສຽງວັນນະຍຸດ.[4]

---

[3] . ຕຳນານອັກສອນໄທ ຂອງ ຊ້ອກ ເຊ ແດັດ ສະບັບພາສາໄທ ໂດຍອົງການຄ້າ ຄຸຣຸສະພາສຶກສາພັນພານິດ ພ.ສ 2526 ໜ້າ 26.

[4] FRANC - ASIE page 986 - 987

ທັດສະນະຂອງອາຈານສອງທ່ານ ດັ່ງກ່າວມາເທິງນັ້ນ ຕ່າງກໍມີເຫດຜົນພໍໃຜພໍລາວ ຈະເປັນໄປໄດ້ບໍ່ວ່າ ພວກເຮົາຄວນຈະພິນິດເບິ່ງ ເນື້ອແທ້ຂອງບັນຫາໃຫ້ເລິກກວ່ານັ້ນ. ການມອງເບິ່ງເນື້ອແທ້ ຂອງບັນຫາທີ່ວ່າມານັ້ນ. ຂ້າພະເຈົ້າຢາກເລີ່ມຈາກຂໍ້ສັນນິຖານທີ່ວ່າ ຕົວໜັງສືກຸ່ຍເຈີາ ແມ່ນແບບສະບັບຂອງຍຸກແຫ່ງການຂ້າມຜ່ານ ຈາກການໃຊ້ຕົວອັກສອນເຄື່ອງໝາຍຂອງຈີນ ມາເປັນຕົວອັກສອນ ທີ່ມີອັກຂະຫລະວິທີອິນເດຍຂອງກຸ່ມຊົນລາວ-ໄຕ ສາຂານຶ່ງ.

2.1. ການຮຽກຊື່ ໜັງສື ຂອງກຸ່ມຊົນລາວ-ໄຕ

ຄຳວ່າ " ໜັງສື " ນີ້ມາຈາກຄຳວ່າ ໜັງ+ ສື; **ໜັງ** ແມ່ນຄຳສາມັນນາມ ໃນພາສາຕະກຸນລາວ-ໄຕ ແປວ່າ ເປືອກທີ່ຫຸ້ມຫໍ່ເນື້ອ ແລະ ກະດູກຂອງຄົນ ຫລື ຂອງສັດທາງດ້ານນອກ, ມີລັກສະນະເປັນແຜ່ນຫຍາບ, ທົນທານ ແລະໝັ້ນໜຽວພໍສົມຄວນ. ຄົນບູຮານມັກຈະເອົາໜັງສັດ ມາເປັນວັດສະດຸໃນການຂຽນໜັງສື ຢ່າງແພ່ຫລາຍ. **"ສື "** ມາຈາກພາສາຈີນ **ຈື້ສື້** ແປວ່າ ໜັງສື, ຄຳວ່າ **ໜັງສື** ນະທີ່ນີ້ ບໍ່ໄດ້ໝາຍເຖິງຕົວອັກສອນຕາມຄວາມໝາຍໃນປັດຈຸບັນ, ແຕ່ຫາກໝາຍເຖິງໜັງສືຜູກ, ໜັງສືພັ້ນ ຫລື ສະໝຸດບັນທຶກເລື່ອງລາວ, ຕຳລາ ຫລື ຕຳນານຕ່າງໆ ໃນສະໄໝກ່ອນ. ພວກເຮົາອາດຈະເຂົ້າໃຈໜັງສືນັ້ນ ດ້ວຍວິທີນຶ່ງຄື ແມ່ນການບັນທຶກເລື່ອງລາວ, ພື້ນແຜ່ນ, ຕຳລາ, ຕຳນານ.....ເປັນຕົ້ນ.

ການທີ່ກຸ່ມຊົນ ລາວ-ໄຕໃຊ້ ຫລື ຢືມຄຳວ່າ **ຈື້** ຫລື **ສື້** ຈາກພາສາຈີນມາໃຊ້ ຈຶ່ງເຖິງດຽວນີ້ສະແດງວ່າ ກຸ່ມຊົນກຸ່ມນີ້ ເຄີຍໄດ້ຮູ້ກັບ **ຈື້** ພາສາຈີນມາກ່ອນແລ້ວ ແລະໄດ້ໃຊ້ **ຈື້** ມາເປັນພາຫະນະສື່ສານຂອງຕົນມາກ່ອນແລ້ວ.ຕົວຢ່າງສີລາຈາລຶກຂອງຊາວໄປອີ້ (pai is)[5] ທີ່ເຂດຕ້າຫລີ້ ກໍປະຈັກພໍໃນບັນຫານີ້.

ອີກປະການໜຶ່ງ ຄົນຫວຽດນາມສະໄໝເກົ່າ ທີ່ເປັນເຜົ່າຊົນໃກ້ຄຽງກຸ່ມຊົນ ລາວ-ໄຕ ກໍຮຽກຊື່ຕົວອັກສອນວ່າ " ຈື້ " (chữ) ຕາມຈີນ ແລະກໍໄດ້ໃຊ້ຕົວອັກສອນເຄື່ອງໝາຍຈີນ (Hán Nôm) (ຫ້ານໂນມ) ເປັນພາຫະນະສື່ສານຂອງຕົນເອງເຊັ່ນກັນ.

2.2. ການໃຊ້ຟອຍຂຽນແຕ່ເທິງລົງລຸ່ມ ແລະ ແຕ່ຂວາຫາຊ້າຍ ການຂຽນແບບນີ້ ບໍ່ເປັນເລື່ອງບັງເອີນແຕ່ຢ່າງໃດເລີຍ. ນອກຈາກຈະສະແດງໃຫ້ເຫັນວ່າ ຜູ້ຂຽນເຄີຍຊິນກັບການໃຊ້ໄມ້ຟອຍມາກ່ອນ ແລະພ້ອມກັບຍັງເຄີຍຊິນ ກັບການຂຽນໜັງສືຈີນມາກ່ອນແລ້ວ. ປາກົດການນີ້ ຍິ່ງບອກແຈ້ງວ່າ ນັກປາດຜູ້ປະດິດຕົວໜັງສືກຸ່ຍເຈົ່ານີ້ ເຄີຍໃຊ້ຕົວອັກສອນຈີນມາກ່ອນແລ້ວແລະພະຍາຍາມຈະປະລະການໃຊ້ຕົວອັກສອນເຄື່ອງໝາຍດັ່ງກ່າວ ທີ່ລຳບາກຫລາຍ ໂດຍຫັນມາເລີ່ມໃຊ້ຕົວອັກສອນທີ່ມີອັກຂະຫລະວິທີຂອງອິນເດຍ.

II I



[5] ໄປອີ້ ແມ່ນຊື່ຮຽກພາສາຈີນ ເຜົ່າຊົນຕະກຸນ ລາວ-ໄຕ ສະໄໝໜຶ່ງ ແລະຍັງຮຽກອີກຊົນເຜົ່າອື່ນດ້ວຍ.

IV

III

VI V



2.3. ຄຳວ່າ **"ເມືອງ"** (◎ ) ໃນບົດຕົວຢ່າງ

ຄຳນີ້ເປັນຕົວອັກສອນເຄື່ອງໝາຍຈະແຈ້ງ ແປວ່າ ພະລາຊະວັງ ມີກຳແພງອ້ອມ ອັນໝາຍເຖິງ ນະຄອນ ຫລື ເມືອງ. ນີ້ກໍສະແດງໃຫ້ເຫັນວ່າ ຜູ້ຂຽນ ຫລື ຜູ້ແຕ່ງໜັງສືນີ້ ຍັງອອກບໍ່ພົ້ນຈາກອິດທິພົນ ຂອງຕົວອັກສອນເຄື່ອງໝາຍແບບຈີນ. ມັນຍັງສະແດງໃຫ້ເຫັນວ່າ ໃນຄວາມພະຍາຍາມນຳໃຊ້ຕົວອັກສອນທີ່ມີອັກຂະຫລະວິທີນັ້ນ ໃນເບື້ອງຕົ້ນນັກປາດຜູ້ປະດິດແຕ່ງອັກຂະຫລະວິທີ ຍັງປະສົບກັບຄວາມຫາຍະນະບາງປະການ ເປັນຕົ້ນແມ່ນ ສະຫລະປະສົມທີ່ມີຕົວສະກົດສັບຊ້ອນ. ດັ່ງນັ້ນເພື່ອຖົມຂຸມຄວາມບົກພ່ອງໃນສະຫລະ "ເຶອງ" ທີ່ຍັງຄິດຄົ້ນບໍ່ທັນໄດ້ ຜູ້ແຕ່ງຈຶ່ງຫັນມາໃຊ້ຕົວອັກສອນເຄື່ອງໝາຍ (◎ = ເມືອງ) ແທນ.

2.4. ລັກສະນະເສັ້ນຂອງຕົວອັກສອນ:

ຄວາມຕາມມີ ຕາມເກີດຂອງການໃຊ້ອັກຂະຫລະ ຕະຫລອດເຖິງການຈັດວາງລະບຽບການ ຢ່າງປາສະຈາກກົດເກນອັນຈະແຈ້ງນັ້ນ ສະແດງເຖິງຄວາມເກົ່າແກ່ຂອງການແປປ່ຽນຕົວອັກສອນປັນລະວະມາເປັນຕົວອັກສອນຂອງຕົນເອງໂດຍກົງ ໂດຍບໍ່ທັນໄດ້ຜ່ານມືກາງໃດໆທັງໝົດ.






ເມື່ອພວກເຮົາເອົາຮູບລັກສະນະ ຂອງຕົວອັກສອນປັນລະວະ ແລະ ຕົວອັກສອນກຸ່ຍເຈົ່າ ມາແລໃສ່ກັນ ໂດຍທີ່ບໍ່ຈຳເປັນອະທິບາຍວິວັດທະນາການຂອງເສັ້ນກໍ່ງຢ່າງຍືດຍາວເລີຍ ພວກເຮົາກໍຄົງເຫັນໂລດວ່າ ມັນແມ່ນວິວັດທະນາການໂດຍກົງ ຈາກຕົວອັກສອນປັນລະວະ ມາເປັນຕົວອັກສອນກຸ່ຍເຈົ່າ ເຊິ່ງກົງກັນຂ້າມກັບຄຳເຫັນຂອງ ອາຈານ ເຊແດັດ ທີ່ເວົ້າວ່າ ພັດທະນາການມາຈາກຕົວອັກສອນລ້ານຊ້າງ[6]. ການທີ່ຕົວອັກສອນກຸ່ຍເຈົ່າ ພັດທະນາມາຈາກຕົວອັກສອນປັນລະວະໂດຍກົງນັ້ນ ກໍສະແດງເຖິງຄວາມເກົ່າແກ່ຂອງຕົວອັກສອນນີ້ດ້ວຍເຊັ່ນກັນ. ອີກດ້ານນຶ່ງ ຖ້າພວກເຮົາຈະພິຈາລະນາເບິ່ງຮູບສະຫລະຂອງກຸຍເຈົ່າ ພວກເຮົາກໍຈະເຫັນເຖິງ ຄວາມບໍ່ມີກົດເກນ ໃນການບັນຍັດ ແລະ ການຂີດຂຽນແນ່ນອນ. ມັນມີລັກສະນະ ຕາມມີຕາມເກີດຫຼາຍກວ່ານີ້ ກໍສະແດງເຖິງລັກສະນະເກົ່າແກ່ ຂອງຕົວໜັງສືເຊັ່ນກັນ.

### ສະຫຼະກຸ່ຍເຈົ່າ



---

[6]. ຕົວອັກສອນລ້ານຊ້າງໜ້າຈະເອົາມາຈາກອັກສອນກຸ່ຍເຈົ່າຫລາຍກວ່າ ( ທຸມພັນ ລັດຕະນະວົງ)



ພວກເຮົາອາດຈະຕັ້ງຄຳຖາມຕາມຂຶ້ນມາວ່າ ຫາກວ່າພວກກຸ່ຍເຈົ້າແຜງຕົວໜັງສືຂອງພວກເຂົາມາຈາກໜັງສືປັນລະວະໂດຍກົງແລ້ວ ເລື່ອງນີ້ ເກີດຂຶ້ນມາໄດ້ແນວໃດ? ແລະ ເວລາໃດ? ພວກເຮົາອາດຈະພິຈາລະນາໄດ້ດ້ວຍຫລັກຖານ ການເຜີຍແຜ່ສາສະໜາ ຫລື ວັດທະນາທຳຂອງອິນເດຍ ເຂົ້າມາທາງພາກເໜືອຂອງຫວຽດນາມ ເຊິ່ງແຕ່ກ່ອນຮຽກວ່າ ແກວຈີ (keo chi Giao Chi) ຫລື ນ່ານເຢ້ (Nan Yues). ເອກະສານທີ່ພວກເຮົາເຫັນວ່າ ເກົ່າແກ່ທີ່ສຸດ ກໍຈະແມ່ນເອກະສານ " ອານາປານສະຕິສູດ " ຂຽນໂດຍ ຕິຊນັທ ຮັນທ໌ ແປເປັນພາສາໄທ ໂດຍ ປະຊາ ທຸຕານຸວັນ[7] ໜັງສືຫົວນີ້ ມີຂໍ້ຄວາມຂຽນໄວ້ວ່າ "ເຮົາເຂົ້າໃຈວ່າ ຕົວຄຳພີດັ້ງເດີມທີ່ເປັນພາສາສັນສະກິດ ຫລື ປາກຣິດ ເຊິ່ງເປັນຕົ້ນສະບັບສຳລັບພາສາຈີນນັ້ນໄດ້ຫາຍໄປແລ້ວ..." ມະຫາອານາປານສະຕິສູດນັ້ນ ໃນຄຳພີລະບຸວ່າ ອັນຈີເກົາເປັນຜູ້ແປ. ທ່ານເປັນຊາວປາເທຍ (Pathia) ຢູ່ທິດຕາເວັນອອກສຽງໃຕ້ ຂອງທະເລ ກັສປຽນ ພ.ສ 290 ແລະ ຖືກເປີເຊຍຍຶດໄດ້ ພ.ສ 769 ໄດ້ເດີນທາງມາປະເທດຈີນ ໃນທ້າຍລາຊະວົງຫານ (HAN) ໂດຍມີອາຈານ ຕັ່ງໂຮຍ ຂຽນຄຳນຳ.

ເຊັນ-ຮຸຍ ເປັນລູກສິດຂອງ ອາຈານ ອັນຈີເກົາ ເດີນທາງມາຈາກເມືອງລໍຢາງ (Lo Yang) ມາຍັງແກວຈີ (Keo Chi) ໂດຍມີສິດຕາມມາສອງຄົນຄື ກັນລິນ ແລະ ປີເຢ. ຄະນະນີ້ ອາດຈະນຳເອົາຕົ້ນສະບັບອານາປານສະຕິສູດ ຕິດມານຳ. ອັດຖະກະຖາ[8] ແລະຄຳນຳຂຽນໂດຍ ຕັ່ງໂຮຍ ໃນແກວຈີ (ຫວຽດນາມ)ກ່ອນ ພ.ສ 772 ແລະກ່ອນຄ.ສ 229. ຕັ່ງໂຮຍ ເກີດໃນຫວຽດນາມ ພໍ່ແມ່ເປັນພໍ່ຄ້າມາຈາກຊອກ-ເດຍ ເດີນທາງຜ່ານຫວຽດນາມ ແລະຕັ້ງຫຼັກແຫຼ່ງຢູ່ທີ່ນັ້ນ. ຕັ່ງ-ໂຮຍ ບວດເປັນສົງ ແລະສຶກສາສັນສະກິດ ແລະ ຈີນ ທີ່ຫວຽດນາມ ກ່ອນທີ່ຈະເດີນທາງໄປແຄວ້ນ ວູ " Wu " ໃນພາກໃຕ້ຂອງຈີນ ປີ ພ.ສ 795 (ຄ.ສ 252) ເພື່ອເຜີຍແຜ່ທຳມະ".

ທ່ານເຄີຍສອນທຳມະ ທີ່ຫວຽດນາມ ແລະໄດ້ລິດຈະນາ ແປຜົນງານມາຢ່າງຫລວງຫລາຍເປັນພາສາຈີນ.

ທ່ານ ອ.ຈ ບົກຈານີນ (A.Bokchanine) ໄດ້ຂຽນບົດຄວາມລົງໃນໜັງສື "La chine et ses Voisins " ພິມຈຳໜ່າຍໂດຍສຳນັກພິມ Prog ປີ 1981 ໂດຍໃຫ້ຂໍ້ມູນໄວ້ໃນໜ້າທີ 126 ວ່າ "ເລີ່ມແຕ່

---

7 . The Sutra on the full Awareness of Breathing with commentary by Thich nha Hanh. ສຳນັກພິມອັກສອນສາດ Bang Kok

8 . ການອະທິບາຍຂໍ້ຄວາມ, ເນື້ອໃນ

ສະຕະວັດທີ II (ຄ.ສ) ອິດທິພົນທາງດ້ານວັດທະນະທຳ ແລະ ທາງການເມືອງຂອງອິນເດຍ ໄດ້ມີການເພີ່ມທະວີຂຶ້ນ ໂດຍສະເພາະແມ່ນ ຢູ່ບັນດາປະເທດທະເລໃຕ້ ໄດ້ມີພວກຍ້າຍຖິ່ນຖານມາຕັ້ງຫລັກແຫລ່ງໃໝ່ຈຳນວນຫລວງຫລາຍ. ຕາມຂໍ້ມູນບາງກະແສ ໃນສະຕະວັດທີ II ມີຄອບຄົວອິນເດຍເກືອບ 20.000 ຄົວ ໄດ້ມາຕັ້ງຫລັກປັກຖານທີ່ເກາະປາວາ.

ໃນຂະນະດຽວກັນນັ້ນ ກໍເລີ່ມມີການແຜ່ເຂົ້າມາ ຂອງພຸດທະສາສະໜາ ໃນອາຊີອາຄະເນເຊິ່ງໄດ້ຕັ້ງຫລັກແໜ້ນແກ່ນທີ່ປະເທດພະມ້າ ແລະໃນພາກເໜືອຂອງຫວຽດນາມ ເລີ່ມຕັ້ງແຕ່ສະຕະວັດທີ I (ຄິດຕະສັງກາດ) ເປັນຕົ້ນມາ". ຂໍ້ມູນດັ່ງກ່າວນີ້ ພຽງພໍສຳລັບການຢັ້ງຢືນ ໃຫ້ພວກເຮົາເຊື່ອໄດ້ວ່າການຮັບເອົາວັດທະນະທຳອິນເດຍຂອງກຸ່ມຊົນເຜົ່າຕ່າງໆ ທີ່ພາກເໜືອຫວຽດນາມນັ້ນ ມີມາແຕ່ດົນນານ. ພວກເຮົາຄວນໄດ້ແນ່ໃຈອີກວ່າ ແບບສະບັບຂອງໜັງສືກຸ່ຍເຈົ້ານັ້ນ ເປັນແບບສະບັບຕົ້ນເດີມທີ່ເກົ່າແກ່ແຫລ່ງນຶ່ງ ແຫ່ງການດັດເອົາຕົວອັກສອນປັນລະວະຂອງອິນເດຍມາໃຊ້ໂດຍກົງ ຂອງກຸ່ມຊົນລາວ-ໄຕ.

ຕົວໜັງສືກຸ່ຍເຈົ້ານີ້ ກຳເນີດເມື່ອໃດ ແລະບ່ອນໃດແທ້ ບັນຫານີ້ຍັງຍາກ ທີ່ຈະຕັດຕວງຢ່າງແມ່ນຢຳ ເພາະຂໍ້ມູນທາງປະຫວັດສາດນັ້ນ ຍັງບໍ່ທັນແຈ້ງຂາວ. ປັດຈຸບັນ ສິ່ງທີ່ພໍເວົ້າໄດ້ ກໍບໍ່ນອກເໜືອຈາກຄຳວ່າ "ອາດ" ເປັນສ່ວນຫລາຍ. ຫາກພວກເຮົາຕາມຮອຍປະຫວັດສາດໄປອີກຈັກໜ້ອຍ ບາງທີເລື່ອງລາວຂອງມັນ "ອາດຈະ" ຄ່ອຍໆແຈ້ງຂາວອອກມາແດ່ ກໍເປັນໄດ້.

ໜັງສືຂຸນບູລົມ ໄດ້ເວົ້າເຖິງການທີ່ພະອົງ ໄດ້ສົ່ງລູກຊາຍໄປກິນທົ່ວເມືອງຕ່າງໆ ໃນນັ້ນມີເມືອງປະກັນ[9] ນັ້ນແມ່ນເມືອງ ບັກ-ກ້ານ (ໃນພາສາຫວຽດນາມ) ເຊິ່ງຕັ້ງຢູ່ພາກຕາເວັນຕົກສຽງໃຕ້ຂອງກາວບັ່ງ ແລະ ໜັງສື "Seven hundred year of the thai writing" M. Jumsai (chalermnitpress, 1983) ໄດ້ບອກໄວ້ວ່າ ນະທີ່ນັ້ນ ເຄີຍມີອານາຈັກບາທຶກ (Bathu'c) ດັ່ງນີ້ "ພວກຜູ້ໄທທີ່ອາໄສຢູ່ຕາມລຳແມ່ນ້ຳດຳ ມີເຊື້ອສາຍມາຈາກອານາຈັກບາທຶກ (ກາວບັ່ງ). ພວກເຂົາເຫລົ່ານັ້ນ ລອດຕາຍມາຈາກການເຂັ່ນຂ້າໂດຍເຈົ້າຜູ້ປົກຄອງເຂົາ ແລະໃນລະຫວ່າງທ້າຍຂອງສະຕະວັດທີ xv (ຄສ) ຄື ໃນລາຊະການຂອງເຈົ້າ ໂພທິສະຣາຊ ຂອງລາວ ພວກເຂົາໄດ້ພາກັນມາຂໍການຄຸ້ມຄອງຈາກພະອົງ. ກະສັດຂອງລາວໄດ້ຕົກລົງພະໄທ ມອບດິນແດນທີ່ເຊນ້ອຍໃຫ້ພວກເຂົາ. ພວກເຂົາໄດ້ອົບພະຍົບມາທາງຄຳມ່ວນ ແລະມະຫາໄຊ. ຈາກນັ້ນ ກໍຕັດສິນໃຈປັກຫລັກຢູ່ພະບຸນ, ພາຍຫລັງມາ ພວກເຂົາກໍເຄື່ອນລົງມາທາງເຊໂປນ ໄດ້ສ້າງເມືອງພະລານ ແລະຕໍ່ມາອີກກໍໄດ້ເຄື່ອນລົງມາທາງແມ່ນ້ຳຂອງ.

ທ່ານ ພັນໂທ ໂມຣິສ ອາບາດີ (Ltd col. Maurice Abadie) ນັກຄົ້ນຄວ້າຝຣັ່ງ ໄດ້ຂຽນໄວ້ວ່າກ່ອນຄິດຕະການ ໃນດິນແດນແຫ່ງຕົງແກງນັ້ນ ມີສອງອານາຈັກ " ວັນລາງ" (van Lang)ເຊິ່ງແມ່ນພວກຢ່າວ (ແກວ ຫລື ຫວຽດນາມໃນປັດຈຸບັນ) ແລະອີກລາຊະອານາຈັກນຶ່ງ ຄື ບ່າ-ທຶກ (Ba Thu'c) ບໍລິເວນເມືອງ ກາວບັ່ງ ເຊິ່ງແມ່ນບໍລິເວນຂອງອານາຈັກ ກຸ່ມຊົນ ລາວ-ໄຕ.

ໃນປີ 252 ກ່ອນຄິດຕະການ ສອງອານາຈັກນີ້ໄດ້ລົບເລວກັນ ແລະໄດ້ໂຮມເຂົ້າເປັນອານາຈັກດຽວ ພາຍໃຕ້ຊື່ວ່າ "ອາວຫຼາກ" (AU LAC) ເຊິ່ງມີນະຄອນຫຼວງຕັ້ງຢູ່ ບັກ-ນິ່ງ (Bac Ning).

ໃນບົດຄວາມຂອງທ່ານ ທີ່ມີຫົວຂໍ້ວ່າ "ໄຕໜັງສືລາວ (Les ecritures Lao)" ທີ່ພິມລົງໜັງສື "ຝຣັ່ງ-ອາຊີ (France Asie)" ທ່ານ ລຸຍຟີໂນ (Louis Finot) ຂຽນໄວ້ຕອນນຶ່ງວ່າ ໃນຈຳພວກຕົວໜັງ

---

[9]. ເມືອງປະກັນນັ້ນ ປາກົດວ່າມີ 2 ແຫ່ງ ແລະແຫ່ງທີສອງແມ່ນເມືອງຊຽງຂວາງ ໃນປັດຈຸບັນ.

ສີຕິງແກງນັ້ນ ຕ້ອງກວມທັງສອງປະເພດຕົວອັກສອນ ທີ່ໃຊ້ກັນຢູ່ໂດຍພວກໄຕທີ່ ເຫງະອານ ເຊິ່ງຄືງມາຈາກ ກາວບັ່ງ : ປະເພດນຶ່ງຮູ້ກັນພາຍໃຕ້ຊື່ " ລຽບນ້ຳ " ( ຊຶ່ງພົບຢູ່ຕາມແມ່ນ້ຳສີງດາ ແລະເຂດພູເຕືອງເຢືອງ. ປະເພດທີ່ສອງໃຊ້ກັນຢູ່ເຂດພູກຸ່ຍເຈົາ. ການທີ່ສອງປະເພດຕົວອັກສອນໃກ້ຄຽງກັນນີ້ ກໍປາກົດວ່າມີກົກເຄົ້າມາຈາກບ່ອນດຽວກັນ ແຕ່ມີຄວາມແຕກຕ່າງກັນບາງເລັກນ້ອຍ ໃນຮູບຂອງຕົວອັກສອນ ໃນການປະກອບພະຍັນຊະນະ ແລະ ໃນທິດຂອງແຖວຂຽນນັ້ນ ສະແດງໃຫ້ເຫັນເຖິງ ລັກສະນະສະເພາະຂອງກຸ່ມພວກໄຕຢ່າງເຫັນໄດ້ແຈ້ງ ຫາກວ່າ ຂໍ້ມູນ ແລະເຫດຜົນຕ່າງໆເຫຼົ່ານີ້ ມີສ່ວນເປັນຈິງ. ຂ້າພະເຈົ້າກໍພໍສັນນິຖານໄດ້ວ່າ ໜັງສືກຸ່ຍເຈົານັ້ນ ໜ້າຈະກຳເນີດເກີດຂຶ້ນ ໃນເຂດທີ່ເປັນສູນກາງຂອງກຸ່ມຊົນລາວ-ໄຕກຸ່ມນຶ່ງມາກ່ອນນັ້ນ ຄື ເຂດເມືອງປະກັນ ຫລື ບາທົກ ທີ່ແຂວງກາວບັ່ງຂອງຫວຽດນາມ ແລະລົງມາຢູ່ເຂດ ເຫງະອານ (ຫວຽດນາມໃນປັດຈຸບັນ) ກໍເນື່ອງມາຈາກການເຄື່ອນຍ້າຍ ແລະອົບພະຍົບຂອງຜູ້ຄົນ.

## III ໜັງສືກຸ່ຍເຈົາວິວັດມາເປັນໜັງສືຫາງໝູ ຂອງກຸ່ມຊົນລາວ-ໄຕ ທີ່ພາກເໜືອ ຫວຽດນາມ ແລະລ້ານຊ້າງ

ຫາກຄຳສັນນິຖານທີ່ວ່າ ຕົວອັກສອນກຸ່ຍເຈົາ ເປັນແບບສະບັບຂັ້ນຕົ້ນທີ່ສຸດຂອງການຫັນມາໃຊ້ຕົວອັກສອນທີ່ມີອັກຂະຫລະວິທີແບບອິນເດຍ ໂດຍກຸ່ມຊົນລາວ-ໄຕກຸ່ມນຶ່ງແລ້ວ ແນ່ນອນທີ່ສຸດ ຕົວອັກສອນດັ່ງກ່າວຕ້ອງມີການສືບທອດ, ມີວິວັດທະນາການ ແລະມີການຂະຫຍາຍຕົວ. ການສືບທອດ ແລະຂະຫຍາຍໂຕນັ້ນ ນອກຈາກຈະປະຕິບັດໃນກຸ່ມຊົນ ທີ່ເປັນຜູ້ປະດິດຄິດແຕ່ງມັນອອກມາແລ້ວແນ່ນອນຍັງປະຕິບັດໃນກຸ່ມຊົນໃກ້ຄຽງ ຜູ້ມີຄວາມສຳພັນທາງດ້ານວັດທະນະທຳນຳກັນ ແລະດຳລົງຢູ່ໃນເຂດແຄວ້ນໃກ້ຄຽງກ່ອນເພິ່ນ. ທ່ານ ລຸຍຟີໂນ ໄດ້ໃຫ້ຂໍ້ສັງເກດໄວ້ແລ້ວວ່າ ໜັງສື " ລຽບນ້ຳ" ມີຄວາມໃກ້ຄຽງກັບໜັງສືກຸ່ຍເຈົາຫລາຍທີ່ສຸດ ແລະໜ້າຈະມາຈາກກົກເຄົ້າອັນດຽວກັນ.] ຂ້າພະເຈົ້າເຫັນວ່າ ຂໍ້ສັງເກດຂອງທ່ານນັ້ນບໍ່ຜິດເລີຍ ທັງມີຄວາມສຳຄັນຊ່ວຍໃຫ້ພວກເຮົາເຫັນວິວັດທະນາການ [ຈາກຕົວອັກສອນກຸ່ຍເຈົາມາເປັນຕົວອັກສອນປະເພດຕ່າງໆ ຂອງກຸ່ມຊົນ ລາວ-ໄຕໃນພາກເໜືອຫວຽດນາມ ແລະ ລາວ ເຊັ່ນລຽບນ້ຳ, ເງ້ຍໂຫລະ, ອີງທິວ, ຫາງໝູ (ຕົວອັກສອນທີ່ຮຽກວ່າ ໂຕໄທດຳ) ຫາກຕົວໜັງສືກຸ່ຍເຈົາວິວັດໂດຍກົງມາຈາກປັນລະວະແລ້ວ ໜັງສືລຽບນ້ຳ ແລະ ໜັງສືປະເພດອື່ນໆ ທີ່ເວົ້າມາຂ້າງເທິງນັ້ນ ນັບວ່າເປັນລູກ ແລະຫລານໃນໄສ້ຂອງໜັງສືກຸ່ຍເຈົາທັງນັ້ນ. (ເປັນລູກ ແລະ ຫລານໃນທີ່ນີ້ ໝາຍເຖິງການສືບທອດ, ປັບປຸງ ແລະ ດັດແປງມາຈາກຕົວໜັງສືແມ່ ໃຫ້ທັນສະໄໝ, ເໝາະສົມ ແລະ ຄ່ອງໂຕຂຶ້ນກວ່າເກົ່າ).] ເມື່ອເອົາຕົວໜັງສືລຽບນ້ຳ ແລະ ຕົວໜັງສືປະເພດຕ່າງໆມາແລໃສ່ກັນກັບຕົວໜັງສືກຸ່ຍເຈົາແລ້ວພວກເຮົາກໍຈະພົບວ່າ ໜັງສືເຫລົ່ານັ້ນ ນອກຈາກຈະມີເອກະລັກພິເສດພໍໃຜພໍມັນແລ້ວ ຍັງເຫັນວ່າ ມີລະດັບການຂະຫຍາຍຕົວສູງ ໃນລະດັບແຕກຕ່າງກັນຢ່າງຈະແຈ້ງ.. ພວກເຮົາສາມາດໃຫ້ຂໍ້ສັງເກດ ກ່ຽວກັບຂັ້ນຕອນສູງ ຂອງວິວັດທະນາການໄດ້ ດັ່ງນີ້ :

1.) ຂຽນເປັນແຖວ ແຕ່ຊ້າຍຫາຂວາ ແລະຈາກເທິງລົງລຸ່ມ ເຊິ່ງມັນໝາຍເຖິງຂັ້ນຕອນ ຕັດຂາດຈາກວິທີການຂຽນແບບຈີນ ທີ່ໜັງສືກຸ່ຍເຈົາຍັງໃຊ້ຢູ່ຄື ຂຽນແຕ່ເທິງລົງລຸ່ມ ແລະແຕ່ຂວາຫາຊ້າຍ.

2.) ການໃຊ້ພະຍັນຊະນະນັ້ນ ເຖິງວ່າຈະຮຽງກັນໄປແບບປະຖົມປະຖານ ໂດຍປາສະຈາກຫລັກເກນຢ່າງສົມເຫດ ສົມຜົນກໍຕາມ, ແຕ່ມີຄວາມພະຍາຍາມເລີ່ມໃຊ້ກົດເກນໃນການກຳນົດຕົວອັກສອນວັນນະຍຸດເຂົ້າມາໃຊ້ເພື່ອໃຫ້ສອດຄ່ອງກັບສຳນຽງຕ່ຳສູງຂອງພາສາ ທີ່ມີສຳນຽງວັນນະຍຸດ

ຫຼື ສຽງຕ່ຳສູງ.

(ອັກສອນວັນນະຍຸດ)



ຕົວໜັງສືທີ່ຍົກມານີ້ ສະແດງເຖິງຂັ້ນຕອນສູງຂອງວິວັດທະນາການ ຖ້າທຽບໃສ່ຕົວກຸ່ຍເຈົາ. ແຕ່ກໍຍັງລະດັບຕ່ຳຢູ່ ຖ້າທຽບກັບຕົວໜັງສືທີ່ໃຊ້ວັນນະຍຸດຂອງລ້ານຊ້າງ,ລ້ານນາ ແລະ ສຸໂຂໄທອັນພາໃຫ້ສັນນິຖານໄດ້ອີກ ວ່າ ໜັງສືລາວເຮົາກວ່າຈະວິວັດມາເຖິງຂັ້ນຕອນນີ້ ແນ່ນອນຕ້ອງໄດ້ຜ່ານຂັ້ນຕອນການໃຊ້ຕົວອັກສອນວັນນະຍຸດ ເຊິ່ງແຕ່ເກົ່າໃຊ້ສອງລະບົບຕົວອັກສອນເທົ່ານັ້ນ ຄື ອັກສອນຕ່ຳ ແລະ ອັກສອນສູງ.

3). ວິວັດທະນາການຈາກການຂຽນ ຫລື ເສັ້ນໂຄ້ງຂອງຕົວອັກສອນ :

ພວກເຮົາອາດຈະຍົກເອົາຕົວອັກສອນບາງຕົວ ທີ່ຍັງຄົງມີພິລຸດຈະແຈ້ງມາຊີ້ແຈງ ເຖິງແບບຢ່າງຂອງວິວັດທະນາການ ຈາກການຂຽນກໍຄືການປັບປຸງເສັ້ນໂຄ້ງ ຂອງຕົວອັກສອນ. ຕົວຢ່າງ: ການຂຽນຕົວ ( ) ກຸ່ຍເຈົາ ຈະປະຕິບັດດ້ວຍສອງຈັງວະຂອງການຂີດ ຄື ຂີດເສັ້ນທາງເທິງ ແລ້ວໂຄ້ງລົງທາງທ້າຍໜ້ອຍນຶ່ງ ເປັນຈັງວະທີນຶ່ງ ແລ້ວທັນມາຂີດເສັ້ນຕັ້ງລົງກ້ອງເສັ້ນກິ່ງ ທາງເທິງ ( ). ການຂຽນຕົວອັກສອນສອງຈັງວະແບບນີ້ ຂັດກັນກັບທ່າອ່ຽງຂອງການຂຽນໂດຍທຳມະຊາດຄື ພະຍາຍາມຂີດເສັ້ນທັງໝົດໃຫ້ໄດ້ຈັງວະດຽວ ຫລືຕິດລຽນກັນເທົ່ານັ້ນ. ຄວາມພະຍາຍາມອັນນີ້ ຈະເຫັນໃນໂຕ "ກ" ຂອງໜັງສືລຽບນ້ຳ ຄື ( ) ອັນມາຈາກການປ່ຽນແປງວິທີຂີດເສັ້ນ ເຊິ່ງແທນທີ່ຈະຂີດເສັ້ນໂຄ້ງທາງເບື້ອງເທິງ ເລີຍທັນມາຂີດສ່ວນນຶ່ງຂອງເບື້ອງເທິງ (1) ແລ້ວທັນມາເປັນເສັ້ນຕັ້ງເບື້ອງລຸ່ມ (2) ແລ້ວຈຶ່ງໂງ່ງຮອຍໄມ້ຟອຍຂຶ້ນເມືອຂີດທາງເສັ້ນ (1) ເບື້ອງເທິງໂດຍຖິ້ມ ສ່ວນກິ່ງຕອນທ້າຍນັ້ນໄປສ່ວນນຶ່ງ... ວິວັດທະນາການໃນຂັ້ນຕໍ່ມາຄົງຈະເປັນໂຕ "ກ" ຂອງໜັງສືທາງໝູ (ໄຕດຳ) ແລະ ອິງຣວ່າ ທີ່ມີຮູບປະພັນເສັ້ນໂຄ້ງກ້າວໜ້າກວ່າເກົ່າ ເຊັ່ນ (ໄຕດຳ) (ອິງຣ່ວາ) ໂຕ "ກ" ຂອງໄຕດຳນັ້ນ ເຫັນໄດ້ວ່າມີການປັບປຸງເສັ້ນໃຫ້ດີຂຶ້ນຈັກໜ້ອຍ ຖ້າທຽບໃສ່ໜັງສືລຽບນ້ຳ. ສ່ວນໂຕ "ກ" ຂອງ ອິງຣວ່າ ນັ້ນ ໄດ້ມີການປັບປຸງຮູບຕົວອັກສອນໃຫ້ກະທັດຮັດກວ່າເກົ່າ ຄື ຖິ້ມສ່ວນກົກໃຫ້ເຫລືອ ແຕ່ສ່ວນທ້າຍເທົ່ານັ້ນ.

ຕົວອັກສອນທາງໜູຕົວອື່ນໆກໍມີພິລຸດ ຫຼື ຮ່ອງຮອຍຂອງຂັ້ນຕອນວິວັດທະນາການ ຄ້າຍໆກັບໂຕ "ກ" ທີ່ໄດ້ຍົກໃຫ້ເຫັນໄປແລ້ວ ເຊິ່ງທັງໝົດນີ້   ເຮັດໃຫ້ພວກເຮົາເຊື່ອວ່າ ຕົວໜັງສືປະເພດຕ່າງໆນັ້ນລ້ວນແລ້ວແຕ່ມີວິວັດທະນາການມາຈາກໜັງສືກຸ່ຍເຈົ່າທັງນັ້ນ. ມີຮ່ອງຮອຍສະແດງໃຫ້ເຫັນວ່າ ວິວັດທະນາການທີ່ກ່າວມານັ້ນ ແມ່ນວິວັດທະນາການອັນດົນນານພໍສົມຄວນ. ສິ່ງຢັ້ງຢືນປະຈັກໃນເລື່ອງນີ້ ກໍແມ່ນໂຕອັກສອນທີ່ໄດ້ສະຫລັກແລະຫລໍ່ໄວ້ນຳເຄື່ອງທອງສະໄໝເກົ່າທີ່ມີອາຍຸບໍ່ຕ່ຳກວ່າສອງພັນປີມາແລ້ວ.

ຕາລາງປຽບທຽບໜັງສືປັນລະວະ, ກຸ່ຍເຈົາ, ລຽບນຳ້, ທາງໜູ (ໄຕດຳ), ອຶ້ງຮ່ວາ
ແລະລາວໃນປັດຈຸບັນ



ຕົວຢ່າງ ໂຕອັກສອນບູຮານຂອງກຸ່ມຊົນລາວ-ໄຕ ພາກເໜືອຫວຽດນາມ



## IV. ມີຄວາມເປັນໄປໄດ້ບໍ ທີ່ຕົວອັກສອນລາວບູຮານ ມີສ່ວນຖອດ ຫລື ຂະຫຍາຍມາຈາກຕົວອັກສອນທາງໜູ

ທ່ານ ໄອ-ໂມ-ເຢ (Aymonier) ໄດ້ໃຫ້ທັດສະນະໄວ້ຢູ່ປື້ມຂອງທ່ານ " ເລີ ກຳໂບດ " (Le cambodge), III, 702-703) ວ່າ " ໜັງສືໄທນັ້ນ ໄດ້ກຳເນີດຂຶ້ນມາແລ້ວ ຢູ່ໃນແຄວ້ນຕ່າງໆຂອງລາວ ກ່ອນສະຕະວັດທ XII. ສ່ວນບິດບາດຂອງ ຣາມຄຳແຫງນັ້ນພຽງແຕ່ມາດັດແປງອັນທີ່ຈຳເປັນເພື່ອໃຫ້ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງພາສາສະຫຍາມຊື່ໆ".

ສ່ວນທ່ານ ລຸຍຟີໂນ ນັ້ນ ເນື່ອງຈາກບໍ່ທັນພົບຫລັກຖານທາງສີລາເລກຂອງລາວ ທີ່ເກົ່າແກ່ກວ່າສີລາເລກ ຂອງຂຸນຣາມຄຳແຫງ ຈຶ່ງຢັ້ງຢືນວ່າ ແບບສະບັບຂອງຕົວອັກສອນຂຸນຣາມຄຳແຫງນັ້ນເປັນ " ອະນຸສາວະລີ " ຫລັກທຳອິດແຫ່ງຕົ້ນກຳເນີດຂອງໜັງສືໄທສະຫຍາມ ແລະລາວ.

ເລື່ອງສີລາຈາລຶກ ຂອງຂຸນ ຣາມຄຳແຫງນັ້ນ ແຕ່ກ່ອນໃຜໆກໍເຊື່ອວ່າ ມີຈິງ ແລະ ຣາມຄຳແຫງ ກໍມີຕົນມີໂຕອີຫລີ. ບັນດານັກປະຫວັດສາດ, ນັກອັກສອນສາດ ທັງຫລາຍໃນໂລກຕ່າງກໍໄດ້ທຸ່ມເທເຫື່ອແຮງເພື່ອຈະໄດ້ມີທັດສະນະ ແລະອອກບົດວິທະຍານິພົນ ກ່ຽວກັບເນື້ອໃນ ໃຈຄວາມຂອງສີລາລຶກ ແລະຄວາມຍິ່ງໃຫຍ່ຂອງ ຂຸນຣາມຄຳແຫງ ເຊິ່ງເປັນຜູ້ສ້າງອານາຈັກອັນກວ້າງໃຫຍ່ໄພສານ ແລະ ໃຫ້ກຳເນີດແກ່ ຕົວອັກສອນສະຫຍາມ ແລະລາວ. ມາຮອດດຽວນີ້ບັນດານັກປາດ, ນັກຄົ້ນຄວ້າທັງຄົນໄທເອງ ແລະຕ່າງປະເທດບໍ່ພຽງແຕ່ຕັ້ງຂໍ້ສົງໄສຂຶ້ນເທົ່ານັ້ນ, ແຕ່ຍັງຊີ້ແຈງບົ່ງບອກວ່າ ສີລາຈາລຶກຂອງ ຂຸນຣາມຄຳແຫງນັ້ນ ແມ່ນລາຊະການທີ 4 ຂອງໄທເປັນຜູ້ເສກສັນປັ້ນແຕ່ງຂຶ້ນມາ. ດຣ ພີຣິຍະ ໄກຣລິກ ໄດ້ຂຽນປື້ມເຫລັ້ມນຶ່ງໃຫ້ຊື່ວ່າ " ຈາລຶກພໍ່ຂຸນຣາມຄຳແຫງ ການວິເຄາະເຊີງປະຫວັດສາດສິລະປະ" ເປັນພາສາໄທ ໂດຍໄດ້ວິເຄາະວິໄຈຫາຫລັກຖານຂໍ້ມູນໃນດ້ານຕ່າງໆມາອ້າງອີງແລ້ວ ໃຫ້ຂໍ້ສະຫລຸບວ່າ " ຈາລຶກພໍ່ຂຸນຣາມຄຳແຫງ ໜ້າຈະທຳຂຶ້ນໃນສະໄໝລັດຕະນະໂກສິນ ຊ່ວງລາຊະການທີ 3 ເຖິງຕົ້ນລາຊະການທີ 4 " ໄລຍະນີ້ໜ້າຈະເປັນໃນລະຫວ່າງຊຸມປີ 1840 ຫາຕົ້ນຊຸມປີ 1850). ພິເສດ ທ່ານ ເຈຍຈັນພົງ ໃນກອງໂບຮານຄະດີ ກົມສິລະປະກຳໄທ ໄດ້ຂຽນບົດຄວາມອອກໃນວາລະສານສິລະປະວັດທະນະທຳ ສະບັບທີ 7 ປີທີ 10 ໜ້າ 84 ວ່າ " ຕົວອັກສອນຄືວິວັດທະນາການ, ອັນໃດທີ່ຢູ່ໃນສາຍວິວັດທະນາການແລ້ວ ຈະຫາກົກເຄົ້າບໍ່ໄດ້ ເທົ່ານີ້ກໍພຽງພໍ ທີ່ຜູ້ຂຽນຈະຍອມຮັບເລື່ອງ ພໍ່ຂຸນຣາມຄຳແຫງ ປະດິດຕົວອັກສອນໄທຂຶ້ນ ເປັນຄັ້ງທຳອິດຕາມຮູບລັກສະນະ ແລະ ອັກຂະຫລະວິທີໃນສີລາຈາລຶກຫລັກນຶ່ງ." ×

ດຣ. ມີແກນ ວິເກີຣີ (Dr Michel VIKERY) ໄດ້ສະເໜີບົດຄວາມຕໍ່ກອງປະຊຸມໄທສຶກສາ ທີ່ແຄນເບີລາ ປີ 1987 ໂດຍສະແດງຄວາມແນ່ໃຈວ່າ ຈາລຶກຂອງ ພໍ່ຂຸນຣາມຄຳແຫງ ເປັນການຈາລຶກທີ່ແຕ່ງຂຶ້ນສະໄໝຫລັງ ທ່ານຈະເຊື່ອເຊັ່ນນີ້ ຈົນກວ່າຈະມີຫລັກຖານອື່ນຢືນຢັນວ່າ ບໍ່ເປັນເຊັ່ນນັ້ນ. ມີຄວາມເປັນໄປໄດ້ຂ້ອນຂ້າງແນ່ນອນທີ່ສຸດວ່າ ອັນທີ່ເອີ້ນວ່າ ສີລາຈາລຶກຂອງຂຸນຣາມຄຳແຫງນັ້ນ ແມ່ນສິ່ງທີ່ເສກສັນປັ້ນແຕ່ງຂຶ້ນພາຍຫຼັງ ແລະຂຸນຣາມຄຳແຫງເອງ ກໍແມ່ນຕົວລະຄອນນິລະມິດ ໃຫ້ມາເປັນພະເອກໃນເວທີລະຄອນແຫ່ງເມືອງສຸໂຂໄທ.

ຖ້າເປັນເຊັ່ນນັ້ນ ຄຳຖາມກໍຕາມມາວ່າ ລາຊະການທີ 4 ຂອງໄທເຮັດສີລາຈາລຶກນັ້ນຂຶ້ນມາເພື່ອຫຍັງ? ຄຳຕອບນັ້ນຄົງຢູ່ໃນຈິນຕະນາການ, ອຸດົມການ ຫລື ຈຸດປະສົງທາງການເມືອງຫລາຍກວ່າ ເຊັ່ນ:

- ເອົາສາກລະຄອນບົດນີ້ ເສກສັນຄວາມຍິ່ງໃຫຍ່ຂອງດິນແດນສຸໂຂໄທ ເຊິ່ງເວົ້າວ່າ ກວມເອົາ

ທາງ ຊາວອູ , ຊາວຂອງ ເມືອງຊວາ ແຂວງຫລວງພະບາງ ແລະວຽງຈັນ, ວຽງຄຳ [10] ແລະຄວາມຍິ່ງໃຫຍ່ຂອງຂຸນຣາມຄຳແຫງ ເຊິ່ງມີນາມນິລະມິດນັ້ນວ່າ ເປັນບິດາພາສາໄທ ແລະລາວໃນປັດຈຸບັນ.

- ໃນໜັງສື ສິລາຈາລຶກອີສານ ຂອງ ທະວັດ ປຸນໂນທົກ ຮອງສາສະດາຈານ ຄະນະມະນຸດສາດມະຫາວິທະຍາໄລຣາມຄຳແຫງໄດ້ຢືນຢັນເຖິງການທີ່ລາວມີຕົວໜັງສືກ່ອນສະໄໝສຸໂຂໄທ ຫລື ສະໄໝຣາມຄຳແຫງວ່າ " ທາງດ້ານອັກສອນສາດນັ້ນ ຈາກການສຶກສາສິລາຈາລຶກພົບວ່າ ກຸ່ມ ໄທຍ - ລາວ [11] ໄດ້ຮັບວັດທະນະທຳການຂຽນໜັງສື ຕັ້ງແຕ່ສະໄໝຊຸມຊົນເປັນອານາຈັກຢູ່ຕອນເໜືອບໍລິເວນລຸ່ມແມ່ນ້ຳອູ, ນ້ຳຂອງ (ຊຽງດົງ, ຊຽງທອງ ຫລື ຫລວງພະບາງ) ຄັນເມື່ອເຄື່ອນຍ້າຍມາທາງໃຕ້ ( ບໍລິເວນພາກອີສານ) ໃນລັກສະນະຂະຫຍາຍຊຸມຊົນ ມາຢູ່ຮວມກັນກັບຊົນພື້ນເມືອງເດີມ ກໍໄດ້ນຳເອົາຮູບແບບຕົວອັກສອນ ຂອງກຸ່ມໄທຍ-ລາວມາໃຊ້ນຳອີກດ້ວຍ ..."

ພວກເຮົາລອງມາພິສູດເບິ່ງວ່າ ມັນມີຄວາມສາມາດເປັນໄປໄດ້ບໍ່ວ່າ ຕົວໜັງສືທາງໜູນັ້ນ ເປັນໜັງສືທີ່ໃຊ້ກັນກ່ອນເພິ່ນ ຢູ່ທີ່ອານາຈັກລາວລ້ານຊ້າງ ແລະ ມີຄວາມເປັນໄປໄດ້ອີກບໍ່ວ່າ ຕົວອັກສອນທາງໜູ ມີສ່ວນປະສົມປະສານຊ່ວຍປະກອບຕົວອັກສອນລາວບູຮານແບບປັດຈຸບັນນີ້ຂຶ້ນມາ? ທັງສອງຢ່າງນີ້ ຂ້າພະເຈົ້າ (ທຸມພັນ ຣັດຕະນະວົງ) ເຫັນວ່າ ມັນມີຄວາມເປັນໄປໄດ້ດ້ວຍເຫດຜົນດັ່ງນີ້:

1). ອາຍຸການຂອງໜັງສືທາງໜູນັ້ນ ເກົ່າແກ່ພໍ ແລະແຜ່ຂະຫຍາຍໃນໝູ່ປະຊາຊົນຕະກຸນ ລາວ-ໄຕທີ່ອາໄສຢູ່ພາກເໜືອຫວຽດນາມໃນປັດຈຸບັນ ແລະພາກຕາເວັນອອກສຽງເໜືອຂອງລາວ ໃນຕົ້ນຄິດຕະສັງກາດ.

2). ຂຸນບູລົມເຊິ່ງສັນນິຖານໂດຍທົ່ວໄປວ່າ ເປັນມະຫາລາດ ມີສູນກາງຕັ້ງຢູ່ເມືອງແຖງ ໄດ້ສົ່ງລູກຊາຍທັງ 7 ໄປກິນຫົວເມືອງຕ່າງໆ ໃນນັ້ນນັບທັງລ້ານນາ, ລ້ານຊ້າງ, ລ້ານເພຍ ". ຫາກວ່າຂໍ້ມູນຂອງຕຳນານນີ້ມີຈິງ ພວກເຮົາກໍພໍຈະຮູ້ໄດ້ວ່າ ໄດ້ມີການສົ່ງລີພົນ ຂ້ອຍຂ້າມ້າຕ່າງ ແລະປະຊາຊົນພົນລະເຮືອນຂະບວນໃຫຍ່ ຂະບວນນຶ່ງ ມານຳຂຸນລໍ ເພື່ອຕັ້ງຫລັກປັກແຫລ່ງໃນດິນແດນລ້ານຊ້າງ . ພົ້ນ ທ້າວຮຸ່ງທ້າວເຈືອງ ອັນເປັນພົ້ນແອ້ມປະຫວັດສາດນັ້ນ ຍັງໄດ້ສະທ້ອນໃຫ້ເຫັນການພົວພັນ ແລະ ການສູ້ຮົບຕົບຕີກັນລະຫວ່າງອານາຈັກລາວຕອນເໜືອ ກັບເມືອງປະກັນ (Bac Can ) ພາກເໜືອຫວຽດນາມ) ພ້ອມທັງມີການຈັບສະເລີຍສົ່ງລົງມາເປັນການໃຫຍ່ນຳດ້ວຍເຊິ່ງກໍນັບວ່າ ເປັນຂະບວນຄົນມາຕັ້ງຫລັກປັກຖານໃນອານາຈັກລາວ ອີກຂະບວນໃຫຍ່ນຶ່ງ.

໓). ເມື່ອອານາຈັກລາວພາກເໜືອຂອງຂຸນລໍ ຫລື ຕະກຸນລາວທາງພາກເໜືອມີຄວາມເຂັ້ມແຂງແລະຢູ່ເຢັນເປັນສຸກພໍສົມຄວນ ປາກົດການໂດຍທຳມະຊາດອັນນຶ່ງ ກໍແມ່ນ ການອົບພະຍົບຍ້າຍຖິ່ນຖານເຂົ້າມາຢູ່ອາໄສ. ຈາກຮ່ອງຮອຍ ແລະຂໍ້ມູນຕ່າງໆຫລາຍຢ່າງ ພວກເຮົາກໍພໍສະຫລຸບໄດ້ວ່າ ໄດ້ມີການຍົກຍ້າຍຖິ່ນຖານຂອງກຸ່ມຊົນລາວ-ໄຕ ຈາກພາກເໜືອຫວຽດນາມ

---

10 . ຊື່ ວຽງຈັນ, ວຽງຄຳ ກຳເນີດເກີດຂຶ້ນ ໂດຍ ພະເຈົ້າ ໂພທິສະລາດ (ຄ.ສ 1547) ເຫດໃດ ຈຶ່ງມີຢູ່ໃນສິລາຈາລຶກ ຂອງ ຂຸນຣາມຄຳແຫ່ງ ເຊິ່ງກ່ອນໜ້ານັ້ນ ຕັ້ງ 4- 500 ປີ.

11 . ອາຈານ ທະວັດ ປຸນໂນທົກ ຂຽນແຈ້ງວ່າ "ໄທຍ-ລາວ" ເຊິ່ງໝາຍເຖິງ ໄທສະຫຍາມ,ສ່ວນ "ໄທ" ໝາຍເຖິງ "ໄຕ ຫຼື ໄທ "

ເຂົ້າມາລາວເປັນ ຫລາຍຄັ້ງ, ກະແສການອົບພະຍົບນີ້ ສືບຕໍ່ມີມາຈົນເຖິງຍຸກຫລັງໆ ທີ່ເນື່ອງມາ ຈາກສາເຫດແຕກຕ່າງກັນ.

**ແຜນທີ່ສັ້ນທາງອົບພະຍົບ**




ສາຍນ້ຳອູ: ສາຍທາງປະຫວັດສາດ ແຫ່ງການເຄື່ອນຍ້າຍຖິ່ນຖານ ຂອງພວກລາວ ເດີມສາຍນຶ່ງ ຈາກແກວຈີ ມາສູ່ດິນແດນຫລວງພະບາງ. ທ່ານປາວີ ກໍໄດ້ໃຊ້ເສັ້ນທາງນີ້ ເພື່ອເດີນທາງແຕ່ຫລວງພະບາງ ສູ່ເມືອງແຖງ.

ສາມເຫດຜົນທີ່ເວົ້າມາຂ້າງເທິງນັ້ນ ເປັນຂໍ້ພິສູດວ່າ ຕົວໜັງສືທາງໜູນັ້ນ ໄດ້ແຜ່ຜາຍມາສູ່ອານາຈັກລາວຕອນເໜືອ ກ່ອນຈະມີຕົວໜັງສືຮູບແບບໃດໆ ມາປະສົມປະສານ. ເປັນທີ່ໜ້າສັງເກດຄຳວ່າ "ໜັງສືທາງໜູ" ນັ້ນແມ່ນບູຮານເຂດພາກເໜືອຂອງລາວເປັນຜູ້ຕັ້ງ ບໍ່ແມ່ນພວກໄຕແຕ່ຢ່າງໃດເລີຍ ອັນເຮັດໃຫ້ສັນນິຖານໄດ້ວ່າ ຕົວໜັງສືດັ່ງກ່າວກໍໃຊ້ກັນຢູ່ໃນລາວເຊັ່ນກັນ.

4). ເຫດຜົນອັນສຸດທ້າຍ ອັນຂ້ອນຂ້າງແໜ້ນສົມຄວນຄື ອັກສອນວັນນະຍຸດ ແລະ ສະຫຼະ " ໄx "

- ອັກສອນວັນນະຍຸດ: ຄືອັກສອນທີ່ມີສຽງຕ່ຳ, ສຽງກາງ ແລະ ສຽງສູງ ໃນຕົວຂອງມັນ ເມື່ອປະກອບກັບສະຫລະແລ້ວ ກໍຈະອ່ານອອກເປັນສຽງວັນນະຍຸດ ຕ່ຳສູງໄດ້.ໃນສະໄໝທີ່ໜັງສືຕະກຸນ ລາວ-ໄຕ ຫລາຍແບບຕ່າງໆ ຍັງບໍ່ທັນໃຊ້ໄມ້ວັນນະຍຸດ ມາເປັນພາຫະນະພັນສຽງນັ້ນກຸ່ມຊົນພວກນີ້ໃຊ້ອັກສອນວັນນະຍຸດແທນ.

ຕົວຢ່າງ:

| | |
|---|---|
| ສຽງກາງ: | ກ ຈ ດ ຕ ບ ປ ຢ ອ |
| ສຽງສູງ: | ຂ ສ ຖ ຜ ຝ ຫ x x x x x x |
| ສຽງຕ່ຳ: | ຄ ຊ ທ ພ ຟ ຮ ງ ນ ມ ຍ ລ ວ |

ການທີ່ມີສາມປະເພດສຽງເທົ່ານີ້ ນັບວ່າ ບໍ່ພໍສຳລັບບັນທຶກສຽງ ສຳນຽງຂອງກຸ່ມຊົນລາວ-ໄຕ; ເພາະວ່າມີສຳນຽງຢູ່ດ້ວຍກັນເຖິງ 5 - 6 ສຳນຽງ ເຊິ່ງແຕ່ລະຕົວພະຍັນຊະນະກໍຕ້ອງການອອກສຽງໃຫ້ໄດ້ຕາມສຳນຽງທີ່ມີຢູ່. ເພື່ອຈະແກ້ໄຂຂໍ້ບົກພ່ອງໃນອັກຂະຫລະວິທີຂອງກຸ່ມຊົນນີ້ ເພິ່ນຈຶ່ງຜະລິດພະຍັນຊະນະປະສົມຂຶ້ນມາເສີມ ເພື່ອໃຫ້ສາມາດອອກສຽງສູງໄດ້.

| ຕົວຢ່າງ: | | | | | |
|---|---|---|---|---|---|
| | ຫ | + | ງ | = | ຫງ |
| | ຫ | + | ຍ | = | ຫຍ |
| | ຫ | + | ນ | = | ຫນ (ໜ) |
| | ຫ | + | ມ | = | ຫມ (ໝ) |
| | ຫ | + | ລ | = | ຫລ (ຫຼ) |
| | ຫ | + | ວ | = | ຫວ |

ການຄົ້ນຄິດອັກສອນນີ້ຂຶ້ນມາເສີມ ກໍຍັງບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງສຳນຽງ. ດັ່ງນັ້ນ ມາຮອດເວລາອັນແນ່ນອນນຶ່ງ ຈຶ່ງເກີດມີການປະດິດເຄື່ອງໝາຍວັນນະຍຸດຂຶ້ນມາໃຊ້ຕື່ມ ຄື X່ X້ X໊ X໋.

ການຄິດຄົ້ນເຄື່ອງໝາຍວັນນະຍຸດມາເສີມນັ້ນຫລັງເຮັດໃຫ້ພະຍັນຊະນະວັນນະຍຸດທັງຫລາຍ ນັບທັງພະຍັນຊະນະປະສົມນັ້ນ ກາຍເປັນສິ່ງເຫລືອເຟືອໄປ ຖ້າເບິ່ງໃນແງ່ຕັກກະວິທະຍາ. ແນວໃດກໍດີ ບັນຫາສຳຄັນ ໃນນີ້ແມ່ນການຄົ້ນຄິດຕົວອັກສອນວັນນະຍຸດ ຫລື ພະຍັນຊະນະປະສົມໃຫ້ມີສຽງວັນນະຍຸດ ເປັນຕົ້ນແມ່ນເອົາຕົວ " ຫ " ນຳໜ້າເພື່ອປະສົມກັບພະຍັນຊະນະອື່ນ ເພື່ອໃຫ້ອອກມາເປັນສຽງວັນນະຍຸດໃດນຶ່ງ. ຂ້າພະເຈົ້າສັງເກດເຫັນວ່າ ທີ່ໃຊ້ແຜ່ຫລາຍກວ່າເພິ່ນ ແລະປະສົມຢ່າງບໍ່ເລືອກພະຍັນຊະນະແມ່ນຕົວໜັງສືຫາງໜູ. ປາກົດການອັນນີ້ ຈ ະບໍ່ເປັນການສໍ່ສະແດງໃຫ້ເຫັນບໍ່ວ່າ ພະຍັນຊະນະປະສົມຂອງກຸ່ມຊົນລາວລ້ານຊ້າງຕອນເໜືອ ເຊິ່ງມີຢູ່ໃນຈຳນວນຈຳກັດນັ້ນ ແລະເບົາບາງກວ່ານັ້ນ ເກີດມາຈາກການເລືອກເຟັ້ນ ຢອນເອົາມາຈາກຕົວອັກສອນຫາງໜູ ທີ່ໃຊ້ອັກສອນວັນນະຍຸດສຽງຕ່ຳ ຄຽງຄູ່ກັນທຸກຕົວເລີຍ ເຊິ່ງມີບາງຢ່າງເຫລືອເຟືອ ແລະບໍ່ຈຳເປັນ.

+ **ສະຫຼະ ໃx:**

ສາສະດາຈານ ກຳທອນ ສະຖິຣະກຸນ ເຈົ້າຂອງຜົນງານ "ລາຍສືໄທ 700 ປີ " ພິມຄັ້ງທີ 3 ເປັນພາສາໄທ ໂດຍອີງການຄ້າຂອງ ຄຸຣຸສະພາ ພ.ສ 2530 ທີ່ບາງກອກ ໄດ້ຂຽນໄວ້ໜ້າ 100 ວ່າ " ເປັນຫຍັງເຮົາຈຶ່ງສ້າງຮູບແບບຂອງການອອກສຽງຢ່າງດຽວກັນຫລາຍຢ່າງ ກໍຍັງບໍ່ມີຜູ້ອະທິບາຍ, ເປັນຫຍັງສະຫລະໄອໄມ້ມ້ວນ ຈຶ່ງມີທີ່ໃຊ້ຢູ່ ພຽງ 20 ຄຳ ເທົ່ານັ້ນ".

ສ່ວນ ອາຈານ ປະເສີດ ພະນະຄອນ ໄດ້ໃຫ້ຄວາມເຫັນໄວ້ວ່າ " ຖ້າເຮົາຕັດສະຫລະໄອໄມ້ມ້ວນອອກ ໃຊ້ສະຫລະໄອໄມ້ມາຍຢ່າງດຽວ ກໍບໍ່ໜ້າຈະເຮັດໃຫ້ການຂຽນໜັງສືໄທ ເກີດຄວາມຜິດພາດໄດ້, ຖ້າເຮົາມີສະຫຫລະໄອຢ່າງດຽວ ໂດຍຕັດສະຫລະໄອໄມ້ມາຍອອກກໍເຮັດໃຫ້ການຂຽນໜັງສືສະດວກຂຶ້ນຫລາຍ ".

ຂ້າພະເຈົ້າເຫັນວ່າ ຄວາມສົນໃຈຂອງສອງອາຈານໃຫຍ່ນີ້ ມີຄວາມສຳຄັນຫລາຍ ແລະ ກໍພໍດີຖືກກັບບັນຫານີ້. ສະຫລະ “ໃx” ແມ່ນເລື່ອງເລັກໆນ້ອຍ ເຊິ່ງນັກຄົ້ນຄວ້າຫລາຍທ່ານ ບໍ່ໄດ້ໃຫ້ຄວາມສົນໃຈເລີຍ. ແຕ່ບັນຫານີ້ເອງ ທີ່ມີຄວາມສຳຄັນອັນຍິ່ງຍອດ ໃນການຈະເບິ່ງຮາກເຫງົ້າ ຂອງຕົວໜັງສືໄທ ນຽງສຽງເວົ້າຂອງພາສາໄທມີສຽງໄອຕົວດຽວ ເປັນຫຍັງຈຶ່ງມີສະຫລະໄອໄວ້ ເຖິງສອງຮູບ (ໃx, ໄx ) ໂດຍບໍ່ນັບສະຫລະ ັຍ ເຊິ່ງມາຈາກແບບປະສົມສະຫລະ ຂອງອິນເດຍໂດຍແທ້ ? ໃນເມື່ອໃນແຄວັນສຸໂຂໄທ ບໍ່ມີຄົນເວົ້າໄອສອງສຽງ. ເປັນຫຍັງ " ພໍ່ຂຸນຣາມຄຳແຫງ " ຜູ້ເຊິ່ງຖືກຂະໜານນາມໄວ້ວ່າ ເປັນຜູ້ປະດິດຕົວໜັງສືໄທ ຈຶ່ງຮ່າວວ່າປະດິດຕົວໜັງສືທີ່ບໍ່ມີຢູ່ໃນສຳນຽງສຽງເວົ້າຂອງຕົນ ແລະກໍບໍ່ມີປະໂຫຍດຫຍັງຂຶ້ນມາ; ທາງໃນກົງກັນຂ້າມເຮັດໃຫ້ກີດຂວາງ ແລະສັບສົນໃນພາສາຊື່ໆ. ຕາມທຳມະດາແລ້ວຊາດນຶ່ງໆ ເມື່ອປະດິດ ພະຍັນຊະນະ ແລະສະຫລະຂຶ້ນມາ ເພື່ອປະກອບເປັນພາສາຂຽນຂອງຕົນ. ກ່ອນອື່ນຕ້ອງຄຳນຶງເຖິງສຽງຂອງຕົວອັກສອນ ແລະສຳນຽງສຽງເວົ້າຂອງຊາດຕົນສາກ່ອນ. ການປະດິດຕົວອັກສອນ ແລະ ສະຫລະນັ້ນ ຕ້ອງໃຫ້ພໍດີກັບຄວາມຈຳເປັນ ທີ່ສຽງຂອງຕົວອັກສອນ ແລະສຳນຽງຂອງພາສາຕົນມີຢູ່. ນີ້ ເປັນຄວາມພະຍາຍາມຂອງບັນດານັກປາດສະໄໝດຶກດຳບັນ ບໍ່ມີຈັກເທື່ອເລີຍ ທີ່ວ່າຈະຮ່າວປະດິດໄປຕາມວາດຕາມເຊີງ ຢ່າງຂາດສຳປະຊັນຍະ ຫລື ປະດິດສິ່ງ ທີ່ສຳນຽງສຽງເວົ້າໃນພາສາຕົນເອງບໍ່ມີ ຫລືຖ້າຫາກຮ່າວປະດິດໄປ ກໍບໍ່ແມ່ນເລື່ອງເປົ່າດາຍ ຕາມມີຕາມເກີດແຕ່ປະການໃດ, ທຸກໆສະຫລະ ທີ່ໄດ້ຮັບການປະດິດຄິດແຕ່ງຂຶ້ນມານັ້ນ ມີສຳນຽງຮອງຮັບຢູ່ຢ່າງຄົບຖ້ວນ ແລະ ສະຫລະໄອນີ້ແນ່ນອນວ່າ ຕ້ອງກຳເນີດເກີດຂຶ້ນຢູ່ໃນຊຸມຊົນ ທີ່ມີສຽງສະເພາະຂອງມັນ (ນອກຈາກສະຫລະ ໄX). ຫາກຊຸມຊົນໃດບໍ່ມີສຽງສະຫລະ "ໃx" ແລ້ວສະແດງວ່າ ຊຸມຊົນນັ້ນຢືມແບບຂອງຜູ້ອື່ນມາໃຊ້ເຊິ່ງກໍສະແດງໃຫ້ເຫັນອີກ ວ່າຊຸມຊົນນັ້ນບໍ່ໄດ້ປະດິດມັນຂຶ້ນມາໃຊ້ເອງ. ເມື່ອຊຸມຊົນນັ້ນບໍ່ໄດ້ປະດິດສະຫລະ “ໃx” ຂຶ້ນມາໃຊ້ເອງ ກໍສະແດງວ່າ ບໍ່ໄດ້ປະດິດທົ່ວທັງລະບົບສະຫລະ ກໍຄືພະຍັນຊະນະທັງໝົດເລີຍ. ພຽງແຕ່ຢືມຂອງທີ່ປະດິດແລ້ວຈາກຄົນອື່ນມາໃຊ້ເທົ່ານັ້ນ.

ພວກເຮົາລອງມາພິສູດເບິ່ງດູວ່າ ຊຸມຊົນຜູທີ່ອອກສຽງ “ ໃx ” ສະເພາະ ໂດຍບໍ່ໄດ້ຊໍ້າກັບສຽງສະຫລະອື່ນ ມີຢູ່ບ່ອນໃດແດ່ ແລະ ກ່ອນອື່ນພວກເຮົາຕ້ອງຮູ້ວ່າ ສຽງແທ້ຂອງສະຫລະ ໃx ເປັນແນວໃດ ?

ໃX = Xະ + Xໍ (a + ü = a ü )

ໄX = Xະ + Xິ (a + I = ai )

ສະຫລະ ໃX ແລະ ໄX ມີສອງສຽງແຕກຕ່າງກັນຢ່າງຈະແຈ້ງ ແລະສຽງ " ໃX " ກໍບໍ່ຊ້ຳກັບສຽງສະຫລະອື່ນ. ກຸ່ມຊົນ ລາວ-ໄຕທີ່ອອກສຽງ "ໃX" ເທົ່າທີ່ພົບໄດ້ໃນປັດຈຸບັນ ກໍມີ ຊາວຫລວງພະບາ, ໄຕດຳ, ຊາວນຸ່ງ, ໄທຈົ້ວງ ແລະຊາວໄຕ້ໂຂງ ຂອງເມືອງເມົາໂຫລງ. ສ່ວນເຫລືອນັ້ນ ອອກສຽງ "ໃX" ໃນທຳນອງແຕກຕ່າງກັນ, ແຕ່ກໍໃຊ້ສະຫລະ "ໃX" ຢູ່ເຊັ່ນດຽວກັນ ເຊັ່ນ:

| | | | | | |
|---|---|---|---|---|---|
| - ວຽງຈັນ | ອອກເປັນສຽງ ໄx | = | ai | | |
| - ພາກໃຕ້ລາວ | ອອກເປັນສຽງ ໄx | = | ai | | |
| - ພາກອີສານໄທ | ອອກເປັນສຽງ ໄx | = | ai | | |
| - ໄທສະຫຍາມ | ອອກເປັນສຽງ ໄx | = | ai | | |
| - ພວກສຸໂຂໄທ | ອອກເປັນສຽງ ໄx | = | ai | | |
| - ລ້ານນາ | ອອກເປັນສຽງ ໄx | = | ai | ແລະ | aü |
| - ລື້ | ອອກເປັນສຽງ ໄx | = | ai | ແລະ | aü |
| - ຊຽງຂວາງ | ອອກເປັນສຽງ ເXີ | = | ɤ | | |
| - ໄຕແດງ, ໄຕຂາວ | ອອກເປັນສຽງ ເXີ | = | ɤ | | |

ໃນເມື່ອກຸ່ມຊົນ ລາວ-ໄຕ 3 ຈຳພວກອອກສຳນຽງ ໃx ເປັນສຳນຽງສະເພາະແລ້ວ ຈະບໍ່ສາມາດເວົ້າໄດ້ບໍ່ວ່າ ແມ່ນນຶ່ງໃນຈຳນວນກຸ່ມຊົນນີ້ ເປັນຜູ້ປະດິດສະຫລະທີ່ມີທັງສະຫລະ ໄx ແລະ ໃx ເພື່ອຕອບສະໜອງກັບສຳນຽງທີ່ຕົນມີຢູ່ ? ສຳລັບກຸ່ມໄຕ້ໂຂງ (ເມືອງເມົາໂຫລງ) ນັ້ນ ມີລະບົບຕົວອັກສອນແງ່ນຶ່ງຕ່າງຫາກ ເຊິ່ງໄກຈາກແບບສະບັບ ຂອງລ້ານຊ້າງ, ລ້ານນາ ແລະ ສຸໂຂໄທ ຈຶ່ງບໍ່ສາມາດເປັນຜູ້ປະດິດສະຫລະ ໃx ໃນຮູບແບບນີ້ໄດ້. ທີ່ຍັງເຫລືອ ກໍຄືງຈະເປັນຊາວຫລວງພະບາງ ແລະພວກໄຕດຳ.

ຄຳທີ່ໃຊ້ສະຫລະ ໃx ແລະ ອອກສຽງ ( aü ) ຂ ອງຫລວງພະບາງ ແລະໄຕດຳ ທີ່ມີຢູ່ດ້ວຍກັນປະມານ 20 ກວ່າຄຳ ຄື :

| | | | |
|---|---|---|---|
| 1 | ໃກ້ | = | ມໍ່ |
| 2 | ໃຄ | = | ຂີ້ງໃຄ |
| 3. | ໃຄ່ | = | ພອງແຫ້ງ |
| 4 | ໃງ່ | = | ຝຸ່ນ, ຂີ້ຝຸ່ນ |
| 5 | ໃຈ | = | ຫົວໃຈ |
| 6 | ໃຈ້ | = | ປີໃຈ້ |
| 7 | ໃສ | = | ແຈ້ງ, ປອດ, ຢູ່ໃສ |
| 8 | ໃສ່ | = | ເອົາໃສ່ |
| 9 | ໃສ້ | = | ປີໃສ້ (ຊື່ປີລາວບູຮານ) |
| 10 | ໃຊ່ | = | ບໍ່ໃຊ່ແມ່ນ, ບໍ່ແມ່ນ |
| 11 | ໃຍ | = | ເສັ້ນ, ໃຍ |
| 12 | ໃຫຍ່ | = | ໃຫຍ່ໂຕ |
| 13 | ໃດ | = | ແນວໃດ ?, ອັນໃດ ? |

14 ໃຕ = ກະເພາະອາຫານສັດປີກ
15 ໃຕ້ = ທິດໃຕ້
16 ໃນ = ຂ້າງໃນ
17 ໃບ = ໃບໄມ້
18 ໃບ້ = ໂງ່ງ່າວ
19 ໃຜ = ແມ່ນໃຜ
20 ໃພ້ = ລູກໃພ້
21 ໃຫ້ = ເອົາໃຫ້
22 ໃຣ່ = ໃຣ່ນາ
23 ໃໝ = ປັບໃໝ
24 ໃໝ່ = ປີໃໝ່
25 ໃຫຼ = ນອນໃຫຼ

ດັ່ງນັ້ນ, ມັນບໍ່ເປັນໜ້າສົງໄສຫຍັງອີກແລ້ວ ໃນຂໍ້ທີ່ວ່າ ສະຫລະ ໃX ນັ້ນ ມີກົກເຄົ້າມາຈາກຝັ່ງຊ້າຍຂອງແມ່ນ້ຳຂອງ ແລະ ຮູບແບບຂອງພະຍັນຊະນະ ກໍຄືສະຫລະທີ່ໃຊ້ກັນຢູ່ນດິນແດນເມືອງຊວາ ລ້ານຊ້າງ ເຊິ່ງສືບທອດ ແລະ ພັດທະນາມາຈາກ ໜັງສືທາງໝູ ທີ່ພັດທະນາມາຈາກໜັງສືກຸ່ຍເຈົານັ້ນເອງ.

## V. ສະຫຼຸບ

ໜັງສືກຸ່ຍເຈົ່ານັ້ນ ແມ່ນສັນຍະລັກແຫ່ງການຂ້າມຜ່ານ ຈາກການໃຊ້ໜັງສືເຄື່ອງໝາຍຂອງຈີນມາສູ່ການນຳໃຊ້ຕົວອັກສອນ ທີ່ມີອັກຂະຫລະວິທີຈາກອິນເດຍ. ໜັງສືດັ່ງກ່າວ ແຜງມາຈາກໜັງສືປັນລະວະໂດຍກົງນັ້ນ ມີຮູບແບບປະຖົມປະຖານໃນການປະກອບເປັນພະຍັນຊະນະ ແລະສະຫລະອັນສະແດງເຖິງຄວາມເກົ່າແກ່ແລະລັກສະນະເຄົ້າເດີມຂອງແບບຕົວໜັງສືຂອງກຸ່ມຊົນລາວ-ໄຕທີ່ພາກເໜືອຫວຽດນາມ ເປັນໜັງສື ທີ່ໄດ້ຮັບການສືບທອດປັບປຸງ ແລະຂະຫຍາຍຕົວເລື້ອຍມາ ຈົນສາມາດກາຍເປັນພາຫະນະບັນທຶກພາສາປາກເວົ້າໄດ້ໃນລະດັບອັນແນ່ນອນ. ປັດຈຸບັນ ເຖິງແມ່ນວ່າການນຳໃຊ້ຕົວຈິງຂອງໜັງສືທາງໝູໃນພາກເໜືອຂອງລາວສະໄໝບູຮານ ຍັງບໍ່ທັນພົບກໍດີ, ແຕ່ຂ້າພະເຈົ້າເຊື່ອວ່າ ດິນແດນບູຮານທີ່ເປັນປະເທດລາວຕອນເໜືອຄົງໄດ້ນຳເອົາຕົວໜັງສືທາງໝູມາໃຊ້ກ່ອນອັກສອນອື່ນໆ ຫລືຄຽງຄູ່ກັບຕົວອັກສອນອື່ນໆ ອັນໄດ້ກາຍມາເປັນພື້ນຖານ ໃນການສ້າງລະບົບໜັງສືສະໄໝໃໝ່ຂອງລາວແລະຂອງໄທໃນຂັ້ນຕໍ່ມາ. ເຫດທີ່ປາສະຈາກຂໍ້ມູນເປັນຫລັກຖານຮູປະທຳແນ່ນອນນັ້ນ, ຂ້າພະເຈົ້າເຊື່ອວ່າ ສິ່ງສຳຄັນທີ່ສຸດ ກໍຄົງໄດ້ແກ່ ໜັງສືປະເພດນີ້ ບໍ່ໄດ້ໃຊ້ເຂົ້າໃນການບັນທຶກພິທີກຳທາງສາສະໜາຕ່າງໆ; ຈຶ່ງບໍ່ໄດ້ສະຫລັກໄວ້ເທິງແຜ່ນຫີນ ຫລື ວັດຖຸທີ່ແຂງທົນ ຈົນເຫລືອມາເຖິງມືພວກເຮົາໃນປັດຈຸບັນ. ແຕ່ເຖິງຢ່າງໃດກໍດີ ຫລາຍສິ່ງຫລາຍຢ່າງຍັງຖືກລີ້ລັບ ແລະ ສະຫລັບຊັບຊ້ອນ ກະທັ້ງຂໍ້ມູນທີ່ເປັນຕົນເປັນໂຕຂຶ້ນມາ. ຕົວຢ່າງ ສີລາຈາລຶກ " ຂຸນຣາມຄຳແຫງ" ເຊິ່ງໃຜໆກໍຖືວ່າ ເປັນຫລັກຖານແບບກຳບັ້ນຕີດິນບໍ່ຜິດ, ແຕ່ກໍຍັງມີພິລຸດຫລາຍຢ່າງ ພາໃຫ້ຕັ້ງຂໍ້ສົງໄສຂຶ້ນມາ ຈົນມາເຖິງບັດນີ້. ຄວາມສົງໄສນັ້ນ ແຜ່ລາມອອກໄປກາຍເປັນການພິສູດຫລັກຖານຄວາມປອມແປງຂອງວັດຖຸເຍື່ອງນັ້ນ. ແນ່ນອນຄວາມຈິງໃນດ້ານເຄົ້າມູນ

ຂອງໜັງສືນັ້ນ ເປັນເລື່ອງບໍ່ງ່າຍປານໃດ ໃນການທີ່ຈະຄົ້ນຫາຄວາມຈິງ, ແຕ່ຄືງຈະບໍ່ເປັນເລື່ອງເຫລືອບ່າກວ່າແຮງ ຂອງບັນດານັກວິທະຍາສາດ ຜູ້ທີ່ມີຄວາມປີຊາສາມາດທັງຫລາຍ. ອີກຢ່າງນຶ່ງ ການເວລາຍັງຈະໃຫ້ການພິສູດຕໍ່ໄປເຖິງຄວາມຈິງຕ່າງໆ ທີ່ປັດຈຸບັນຍັງບໍ່ສາມາດຢັ້ງຢືນໄດ້ຢ່າງແນ່ນອນ.

# ພາກທີ II

# ການປົກປັກຮັກສາຄວາມປອດໃສຂອງພາສາລາວ

## I . ສະພາບຂອງພາສາລາວຕັ້ງແຕ່ສະໄໝອານາຈັກລ້ານຊ້າງ ເສຍເອກະລາດມາ ເຖິງປັດຈຸບັນ

ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ ພາສານັ້ນແມ່ນປາກົດການອັນນຶ່ງ ຂອງສັງຄົມ ກຳເນີດ ແລະຂະຫຍາຍຕົວພ້ອມກັບສັງຄົມ. ສັງຄົມມີຄວາມກ້າວໜ້າ ຫລືຊຸດໂຊມ ພາສາກໍຈະກ້າວໜ້າ ຫລື ຊຸດໂຊມໄປຕາມສັງຄົມ. ເມື່ອອານາຈັກລ້ານຊ້າງຖືກສິ່ງຄາມຮຸກຮານທຳລາຍ, ສູນເສຍຄວາມເປັນເອກະລາດແລ້ວ ແນ່ນອນວ່າ ພາສາອັນເປັນຜະລິດຕະພັນຂອງສັງຄົມ; ທັງເປັນເອກະລັກແຫ່ງຄວາມເປັນເອກະລາດແລະຄວາມຈະເລີນຂອງຊາດນັ້ນ ກໍຄອຍຫລົ້ມຈົມໄປຕາມ.

ຕັ້ງແຕ່ປີ ຄ.ສ 1779 ເປັນຕົ້ນມາເມື່ອອານາຈັກລ້ານຊ້າງຖືກຮຸກຮານແລະຍຶດຄອງ. ນະຄອນຫລວງອັນເປັນສູນກາງວັດທະນະທຳ ແລະ ການເມືອງຂອງປະເທດ ຖືກທຳລາຍເຜົາຜານ ຈົນເປັນເມືອງຮ້າງວ່າງເປົ່າແລ້ວ, ພາສາຂອງຊາດ ກໍຄ່ອຍປະລົບເຄາະຮ້າຍອັນໜັກໜ່ວງເຊັ່ນກັນ. ພາສາໃນຍຸກນັ້ນ ບໍ່ສະເພາະແຕ່ບໍ່ຂະຫຍາຍຕົວ ແຕ່ຫາກຍັງຄ່ອຍໆກຸດຫຼຸ່ນໄປນຳ; ອິດທິພົນດ້ານພາສາ ກໍຄືວັດທະນະທຳຂອງປະເທດປົກຄອງ ກໍຄ່ອຍໆເຊື່ອມເຂົ້າມາຄວບງຳເທື່ອລະເລັກລະນ້ອຍ.

ຈາກນັ້ນ ເມື່ອຝຣັ່ງເຂົ້າມາ ແລະຫລັງຈາກທີ່ປະເທດລ້ານຊ້າງຖືກແບ່ງອອກເປັນສອງຕອນ. ຕອນນຶ່ງຂຶ້ນກັບ ຝຣັງ ແລະອີກຕອນນຶ່ງຂຶ້ນກັບສະຫຍາມແລ້ວ ຊາຕາກຳຂອງພາສາລາວ ຍິ່ງຮ້າຍແຮງລົງຢ່າງໜ້າສັງເວດ. ຕອນທີ່ເປັນເມືອງຂຶ້ນຂອງຝຣັ່ງນັ້ນ ພາສາລາວໄດ້ຫລຸດບົດບາດລົງ ກາຍເປັນພາສາສຳຮອງ ແລະກາຍເປັນພາສາຕ່ຳຕ້ອຍໄປ. ຜູ້ຮູ້ພາສາຝຣັ່ງແດ່ ກໍປະໝາດຜູ້ບໍ່ຮູ້ພາສາຝຣັ່ງ ຫລື ປະໝາດຜູ້ຮຽນຝ່າຍທຳມະ. ປັນຍາຊົນສະໄໝນັ້ນ ແມ່ນຜູ້ທີ່ໄດ້ຮຽນຈົບໂຮງຮຽນຝຣັງ; ພວກເຂົາເຫລົ່ານັ້ນ ມີທ່າອ່ຽງໄປທາງທິດຕາເວັນຕົກ ແລະຢາກຈະໃຊ້ຕົວອັກສອນລາແຕງແທນຕົວອັກສອນລາວ.

ສ່ວນທີ່ຕົກເປັນດິນແດນສ່ວນນຶ່ງຂອງສະຫຍາມນັ້ນ ແມ່ນຖືກຕັດຂາດຈາກລະບົບການຮຽນພາສາລາວທັງໝົດ. ໃນໂຮງຮຽນ ຕະຫລອດເຖິງສຳນຽງສຽງຟ້ອງ ກໍຖືກທັບເປັນໄທສະຫຍາມທັງໝົດ. ການປະພຶດດັ່ງກ່າວນີ້ ມີຜົນຕາມມາຄື ເຮັດໃຫ້ພາສາລາວກາຍເປັນພາສາ ທີ່ຊອດກະຈາກັບພາສາໄທ ເຊິ່ງຕໍ່ມາກໍສົ່ງຜົນສະທ້ອນເຖິງຝັ່ງຊ້າຍຂອງລາວໃນປັດຈຸບັນ.

ຕໍ່ໜ້າສະພາບການດັ່ງກ່າວ ເລີ່ມແຕ່ປີ 1937 ເປັນຕົ້ນມາ ບັນດາຜູ້ຊົງຄຸນວຸດທິ ທີ່ຮັກຊາດຈຳນວນນຶ່ງ ໄດ້ທຳການຕໍ່ສູ້ທວງໃຫ້ພາສາລາວ ກາຍມາມີບົດບາດໃນສັງຄົມລາວຄືນໃໝ່. ບັນດາທ່ານເຫລົ່ານັ້ນ ໄດ້ຄົ້ນຄວ້າວາງຫລັກການພາສາລາວ ແລະແບບຮຽນພາສາລາວອອກ ເຊິ່ງເປັນຂັ້ນຕອນທີ່ພາສາລາວຟື້ນຊີບຄືນມາ. ຈຸດພິເສດຂອງພາສາລາວໃນເວລານັ້ນ ແມ່ນໃຫ້ສະກົດຕາມເຄົ້າໃນຂອບເຂດທີ່ພະຍັນຊະນະ ແລະສະຫລະຂອງພາສາລາວພໍເຮັດໄດ້ ແລະໃຊ້ຕົວສະກົດເຟື້ອງສະກົດ.

ມາເຖິງຊຸມປີ 60 ກໍໄດ້ມີການປັບປຸງອັກສອນລາວຄືນໃໝ່ ໂດຍກົມວັນນະຄະດີ. ຈຸດພິເສດໃນການປັບປຸງນັ້ນ ແມ່ນລຶບລ້າງພະຍັນຊະນະເຟື້ອງ ເພື່ອເຮັດໃຫ້ ອັກຂະຫລະລາວງ່າຍຂຶ້ນ. ແຕ່ໃນຂັ້ນນີ້ເອງ ພັດເກີດມີສອງທັດສະນະແຕກຕ່າງກັນ ກາຍເປັນສອງທ່າອ່ຽງ ຫລື ສອງທັດສະນະທີ່ບໍ່ລົງຮອຍ

ກັນ ຄື:

+ ທັດສະນະຮັກສາການສະກົດຕາມເຄົ້າ ໄວ້ບາງບ່ອນທີ່ຈຳເປັນ.

+ ທັດສະນະສະກົດຕາມສຽງ ແຕ່ຕ້ອງຮຽນຮູ້ເຄົ້າ ແລະຮັກສາເຄົ້າໄວ້, ຮັກສາອັກສອນຄວບ ແລະ ການສະກົດກາງຄຳ.

ນອກຈາກສອງທັດສະນະນີ້ແລ້ວ ກໍຍັງມີທັດສະນະຕ່າງໆອີກ ເຊັ່ນ ໃນເລື່ອງສຳນຽງ ແລະ ການຂຽນທັບສັບທາງດ້ານວິທະຍາສາດ-ເຕັກນິກນັ້ນ, ບາງທັດສະນະໃຫ້ຄຳເຫັນວ່າ ຄວນອີງຕາມສຳນຽງພາສາຝຣັ່ງ, ແຕ່ບາງທັດສະນະພັດວ່າ ຄ ວນອີງຕາມສຳນຽງພາສາອັງກິດ ແລະ ບາງທັດສະນະພັດເວົ້າວ່າ ອີງຕາມສຳນຽງພາສາຫຍັງກໍໄດ້ ແຕ່ຕ້ອງຜັນໃຫ້ສຳນຽງລາວ. ນອກນັ້ນ ຍັງມີທັດສະນະຕໍ່ກັບເລື່ອງການສະກົດຄຳຕາມເຄົ້າສັບ ທີ່ມາຈາກ ພາສາປາລີ-ສັນສະກິດວ່າ ບໍ່ຄວນສະກົດຕາມເຄົ້າສັບເລີຍ ຄວນສະກົດແບບພາສາລາວເດີມລ້ວນໆ ແລະ ບໍ່ຄວນຮຽນຮູ້ເລື່ອງ ເຄົ້າສັບເລີຍ.

ຈາກຄວາມວຸ່ນວາຍດັ່ງກ່າວນັ້ນ ເຮັດໃຫ້ພາສາລາວເກີດຄວາມສັບສົນ ອັນເນື່ອງມາຈາກຄວາມບໍ່ເປັນເອກະພາບກັນ, ບໍ່ຮູ້ວ່າຈະອີງໃສ່ທັດສະນະໃດດີ, ກາຍເປັນພາສາບໍ່ມີຫລັກການ, ຊອດກະຈາເຊິ່ງບໍ່ສາມາດເປັນຕົວແທນໃຫ້ແກ່ພາສາແຫ່ງຊາດເອກະພາບໄດ້.

ຕໍ່ມາໃນໄລຍະຕໍ່ສູ້ປົດປ່ອຍຊາດນັ້ນ ທາງຝ່າຍປະຕິວັດ ຫລື ຝ່າຍແນວລາວຮັກຊາດໃນສະໄໝນັ້ນໄດ້ມີການປັບປຸງຫລັກພາສາລາວຄືນໃໝ່ ເຊິ່ງກະທັດຮັດ, ຊັດເຈນ ແລະງ່າຍດາຍຂຶ້ນກວ່າເດີມ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ແລະ ໃຫ້ແທດເໝາະກັບສະພາບຄວາມເປັນຈິງໃນໄລຍະນັ້ນ ໂດຍສະເພາະແມ່ນເພື່ອໃຫ້ແທດເໝາະກັບລະດັບຄວາມຮູ້ປະຊາຊົນບັນດາເຜົ່າຕ່າງໆ ເພິ່ນໄດ້ແຕ່ງ "ປຶ້ມໄວຍາກອນລາວ" ຂຶ້ນ ໂດຍ ທ່ານ ພູມີ ວົງວິຈິດ ຜູ້ເຊິ່ງເປັນຄະນະກຳມະການສູນກາງແນວລາວຮັກຊາດໃສະໄໝນັ້ນ, ພິມຈຳໜ່າຍໂດຍ ພະແນກສຶກສາສູນກາງ ປີ 1967. ປຶ້ມໄວຍາກອນລາວເຫລັ້ມນີ້ ໄດ້ມີບົດບາດສຳຄັນອັນໃຫຍ່ຫລວງໃນການປັບປຸງພາສາລາວ ໃຫ້ມີລັກສະນະຊາດ, ວິທະຍາສາດ ແລະມະຫາຊົນ.

ຕໍ່ມາໃນປີ 1972 ທັງຝ່າຍລັດຖະບານວຽງຈັນ ໃນສະໄໝນັ້ນ ກໍໄດ້ມີດຳລັດໃຫ້ປັບປຸງ ຫລັກພາສາລາວຄືນໃໝ່ ໂດຍມອບໃຫ້ ລາຊະບັນດິດສະພາລາວ ເປັນຜູ້ຮຽບຮຽງ ເຊິ່ງປະກອບມີສາມ 3 ຄື : ອັກຂະຫລະວິທີ, ວະຈີວິພາກ ແລະວາກະຍະສຳພັນ. ຫາກພວກເຮົາປຽບທຽບໄວຍາກອນລາວຂອງຝ່າຍແນວລາວຮັກຊາດ ທີ່ແຕ່ງໂດຍ ທ່ານ ພູມີ ວົງວິຈິດ ແລະ ສະບັບລາຊະບັນດິດສະພາລາວ ແລ້ວເຫັນວ່າມີຫລາຍຈຸດຄ້າຍຄືກັນ ຈະຕ່າງກັນກໍພຽງແຕ່ຊີ້ເອັ້ນ ບາງຫລັກການ ແລະ ຫລັກການສະກົດຄຳບາງອັນເທົ່ານັ້ນ.

ຫລັງຈາກປະເທດຊາດ ໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ສະຖາປະນາເປັນສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃນປີ 1975 ເປັນຕົ້ນມາ. ໃນລັດຖະທຳມະນູນ ສປປ.ລາວ ໄດ້ກຳນົດເອົາພາສາລາວ ເປັນພາສາປະຈຳຊາດ ແລະ ເປັນພາສາທາງລັດຖະການ ໂດຍປະກາດໃຫ້ໃຊ້ປຶ້ມ "ໄວຍາກອນລາວ " ສະບັບຂອງ ທ່ານ ພູມີ ວົງວິຈິດ ຮຽບຮຽງ ເປັນບ່ອນອີງໃນການຂຽນ ແລະ ສິດສອນພາສາລາວ ໃນທົ່ວປະເທດ ນັບຕັ້ງແຕ່ມື້ປົດປ່ອຍຊາດເປັນຕົ້ນມາ ສັງຄົມລາວມີໂອກາດໄດ້ຮັບການພັດທະນາຢ່າງວ່ອງໄວ ແລະຮອບດ້ານ ພາສາອັນເປັນພາຫະນະອັນດຽວ ໃນການຄົບຄ້າສະມາຄົມຢູ່ໃນສັງຄົມກໍໄດ້ຮັບການພັດທະນາ ແລະຂະຫຍາຍຕົວໄປຕາມທ່ວງທ່າ ການຂະຫຍາຍຕົວຂອງສັງຄົມເຊັ່ນດຽວກັນ. ຕໍ່ມາຮອດຊຸມປີ 90 ເປັນໄລຍະທີ່ມີການປັບປຸງຫລັກສູດການຮຽນ -ການສອນໃໝ່ ຕັ້ງແຕ່ຂັ້ນປະຖົມຈົນຮອດ

1/10/1949 ວັນປະກາດເອກະລາດຂອງຈີນ

ຂັ້ນມັດທະຍົມຕອນປາຍ ໃນທຸກໆສາຂາວິຊາ. ໃນເວລາຂຽນຫລັກສູດພາສາລາວ ໄດ້ເກີດມີຂໍ້ໂຕ້ແຍ່ງຫລາຍເລື່ອງກ່ຽວກັບພາສາລາວເກີດຂຶ້ນ ລະຫວ່າງນັກວິຊາການພາສາລາວຮຸ່ນອະວຸດໂສ ກັບນັກວິຊາການພາສາລາວຮຸ່ນໃໝ່ ກ່ຽວກັບ ຫລັກໄວຍາກອນລາວ ສະບັບຂອງທ່ານ ພູມີ ວົງວິຈິດ ກັບສະບັບລາຊະບັນດິດສະພາລາວ ໃນເລື່ອງການສະກົດຄຳ, ເລື່ອງພະຍັນຊະນະ "ຣ" ເລື່ອງຊື່ເອີ້ນຫລັກໄວຍາກອນບາງຫລັກການ, ເລື່ອງຮູບສະຫລະລາວບາງໂຕ ເປັນຕົ້ນ.

ດ້ວຍເຫດນັ້ນ ຕົກມາຮອດ ປີ 1997 ທາງສະຖາບັນ ຄົ້ນຄວ້າວິທະຍາສາດ ການສຶກສາ ແຫ່ງຊາດ (ສວສ), ຂອງກະຊວງສຶກສາ ຈຶ່ງໄດ້ແຕ່ງຕັ້ງຄະນະວິຊາການຄະນະນຶ່ງຂຶ້ນ ເພື່ອທຳການສຳຫລວດ ລົງເກັບກຳຂໍ້ມູນ ຢູ່ຕາມສະຖາບັນ ຕະຫລອດຮອດທ້ອງຖິ່ນຕ່າງໆ ທົ່ວປະເທດ ກ່ຽວກັບ ຄວາມນິຍົມຊົມຊອບ, ການນຳໃຊ້ ແລະຂໍ້ຄິດເຫັນຕ່າງໆ ໃນເລື່ອງທີ່ນັກວິຊາການພວມຖົກຖຽງກັນຢູ່ໃນຂະນະນັ້ນ. ພາຍຫລັງນຳເອົາຂໍ້ມູນ, ຂໍ້ຄິດເຫັນຕ່າງໆຂອງສັງຄົມ ມາສັງລວມ ວິໄຈຄວາມສົມເຫດສົມຜົນແລ້ວ ນັກວິຊາການຈຶ່ງພ້ອມກັນຮຽບຮຽງປຶ້ມໄວຍາກອນລາວຄືນໃໝ່ ໂດຍພາຍໃຕ້ຫົວຂໍ້ ວ່າ **" ໄວຍາກອນລາວປັດຈຸບັນ "** (ສຳລັບ ໂຮງຮຽນສາມັນສຶກສາ) ພິມຈຳໜ່າຍ ປີ 2000 ,ປະກອບມີ 4 ພາກ ຄື : ອັກຂະຫລະ, ວະຈີວິພາກ, ວາກະຍະສຳພັນ ແລະສັນທະກະວີ.

## II. ໜ້າທີ່ໃນການປົກປັກຮັກສາຄວາມປອດໃສຂອງພາສາລາວ

[ ພາສາແມ່ນມໍລະດົກ ອັນປະເສີດທາງວັດທະນະທຳຂອງຊາດອັນນຶ່ງເຊິ່ງຄົນລາວທຸກຄົນຈະຕ້ອງໄດ້ປົກປັກຮັກສາໄວ້ ໃຫ້ຢູ່ຄຽງຄູ່ກັບຄົນລາວ ແລະ ຊາດລາວຕະຫລອດການະນານ.] ດັ່ງໄດ້ ກ່າວມາແລ້ວວ່າ ຕັ້ງແຕ່ຊຸມປີທີ 30 ເປັນຕົ້ນມາ ພາສາລາວໄດ້ຮັບການພັດທະນາ , ປັບປຸງ ແລະ ປົກປ້ອງຢູ່ຕະຫລອດມາ ບໍ່ວ່າຢູ່ໃນເຂດລາຊະອານາຈັກ ກໍຄືຢູ່ໃນເຂດຂອງຝ່າຍແນວລາວຮັກຊາດໃນສະໄໝນັ້ນ.

[ ນັບຕັ້ງແຕ່ປະເທດຊາດ ໄດ້ຮັບການສະຖາປະນາ ເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ເປັນຕົ້ນມາ ພາສາແຫ່ງຊາດໄດ້ຮັບການເຊີດຊູຂຶ້ນຕື່ມອີກບາດກ້າວນຶ່ງ ໃນກອງປະຊຸມໃຫຍ່ ຜູ້ແທນປະຊາຊົນທົ່ວປະເທດຄັ້ງທີ 1 ເຊິ່ງໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975 ນັ້ນ ໄດ້ລົງມະຕິຢ່າງເປັນເອກະສັນ ໃນການຮັບຮອງເອົາພາສາລາວເປັນພາສາກາງ ແລະ ນຳໃຊ້ທາງລັດຖະການໃນທົ່ວ ສປປ.ລາວ. ເຫດການສຳຄັນທາງປະຫວັດສາດໃນຄັ້ງນີ້ ໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ພາສາລາວໄດ້ມີບົດບາດສຳຄັນ ໃນທາງດ້ານການປາກເວົ້າ, ຕິດຕໍ່ສື່ສານກັນ ລະຫວ່າງປະຊາຊົນບັນດາເຜົ່າໃນລາວ ແລະທັງໃຊ້ເປັນພາສາຂີດຂຽນ, ບັນທຶກມະຕິຄຳສັ່ງ,ລະບຽບກົດໝາຍ ແລະ ເອກະສານສຳຄັນຕ່າງໆຂອງຊາດອີກດ້ວຍ.

ສະນັ້ນ ການປົກປັກຮັກສາຄວາມປອດໃສ, ຄວາມເປັນເອກະພາບ ແລະ ການພັດທະນາພາສາລາວ ໃຫ້ອຸດົມສົມບູນນັ້ນ ມັນເປັນພັນທະ ແລະໜ້າທີ່ຂອງຄົນລາວທຸກຄົນ. ການປົກປັກຮັກສາຄວາມປອດໃສຂອງພາສາລາວ ມັນສະແດງເຖິງ :

- **ຄວາມມີນ້ຳໃຈຮັກຊາດ, ຮັກມູນເຊື້ອອັນດີງາມຂອງຊາດ.**] ຊາດລາວເຮົາເປັນ ຊາດທີ່ເກົ່າແກ່ຊາດນຶ່ງ ຢູ່ໃນພາກພື້ນອາຊີຕາເວັນອອກສຽງໃຕ້, ມີປະຫວັດຄວາມເປັນມາຢ່າງລະອຽດລະອ່ຽວ ແລະຍາວນານ. ທຸກໆບາດລ້ຽວແຫ່ງການປ່ຽນແປງທາງປະຫວັດສາດຂອງຊາດລາວ ມັນໄດ້ປະໄວ້ໃຫ້ພວກເຮົາເຊິ່ງບົດຮຽນ ແລະ ມໍລະດົກອັນລ້ຳຄ່າທາງພູມປັນຍາ ທີ່ສະແດງອອກຜ່ານທາງພາສາຢ່າງມາກມາຍ

ແລະ ສຸດແສນອຸດົມຮັ່ງມີ. ສະນັ້ນ ເຮົາຄົນຮຸ່ນຫລັງ ຄວນຈະຮູ້ທະ ນຸຖະໜອມ ມູນເຊື້ອອັນດີງາມ ທີ່ບັນພະບຸລຸດຂອງພວກເຮົາໄດ້ສ້າງແລະສະສົມມາແລ້ວນັ້ນ ໃຫ້ຢູ່ ຄຽງຄູ່ກັບຄົນລາວ ແລະຊາດລາວຕະຫລອດກາລະນານ; ເຮົາເຮັດໄດ້ເຊັ່ນນີ້ ຈຶ່ງສົມວ່າ ເປັນຜູ້ທີ່ມີນ້ຳໃຈ ຮັກຊາດອັນສູງສົ່ງຢ່າງແທ້ຈິງ.

- **ຄວາມມີສະຕິຊາດອັນສູງສົ່ງ** ສຸພາສິດລາວເຄີຍສັ່ງສອນໄວ້ວ່າ" ພາສາບອກຊາດ ມາລະຍາດບອກຕະກຸນ " . ພາສາຄືນຶ່ງໃນຈຳນວນປັດໄຈທີ່ສຳຄັນ ໃນການປະກອບເປັນຊາດ ທີ່ເອກະ ລາດ, ມີອະທິປະໄຕ, ການສູນເສຍພາສາ ຄືການສູນເສຍຊາດ. ສະນັ້ນ ການປົກຮັກສາ ແລະ ພັດທະນາພາສາຂອງຊາດໃຫ້ປອດໃສ, ມັນສໍ່ສະແດງໃຫ້ເຫັນເຖິງຄວາມມີສະຕິຊາດອັນສູງສົ່ງ. ພວກເຮົາໃຊ້ພາສາແຫ່ງຊາດ ເພື່ອຫລໍ່ລ້ຽງສະຕິແຫ່ງຄວາມເປັນຊາດ, ໃຊ້ພາສາແຫ່ງຊາດເປັນພາຫະນະ ເພື່ອເຕົ້າໂຮມຄວາມສາມັກຄີ, ຄວາມເຂົ້າອົກເຂົ້າໃຈ ແລະຄວາມເປັນເອກະພາບໃນການ ເຄື່ອນໄຫວພາຍໃນຊາດ. ໃນປັດຈຸບັນ ການໃຊ້ພາສາຢູ່ຕາມວາລະສານ, ໜັງສືພິມ, ຕຳລາການຮຽນ-ການສອນ, ໜັງສືເລື່ອງ ຫລື ບົດກອບກອນ, ບົດເພງ ຕ່າງໆ ຍັງປາກົດເຫັນຄວາມຜິດພາດຢູ່ເປັນປະຈຳ ໂດຍສະເພາະ ແມ່ນການສະກົດຄຳທີ່ຜິດໆຖືກໆ, ການໃຊ້ເຄື່ອງໝາຍວັກຕາມອາລົມ, ການໃຊ້ສຳນວນຊອດກະຈາ ຫລື ການໃຊ້ສັບບໍ່ຊັດເຈນ ແລະອື່ນໆ,ຄວາມຜິດພາດເຫລົ່ານີ້ ອາດເນື່ອງມາຈາກຫລາຍສາເຫດ ເຊັ່ນ ຂາດຄວາມຮູ້ພື້ນຖານທາງດ້ານພາສາລາວ, ຂາດຄວາມຮັບຜິດຊອບ, ແຕ່ສິ່ງສຳຄັນກໍຄື ຂາດສະຕິແຫ່ງຄວາມເປັນຊາດ. ສະນັ້ນ ການປົກປັກຮັກສາຄວາມປອດໃສຂອງພາສາລາວ ມັນສໍ່ສະແດງເຖິງຄວາມມີສະຕິຊາດອັນສູງສົ່ງ.

- **ຄວາມມີລະດັບວັດທະນະທຳ.** ພາສາແມ່ນພາກສ່ວນນຶ່ງຂອງວັດທະນະທຳ, ການໃຊ້ພາສາຂອງສັງຄົມ ກໍຄືສ່ວນບຸກຄົນຈະສໍ່ສະແດງໃຫ້ເຫັນເຖິງລະດັບຄວາມຮູ້ຂອງສັງຄົມ ຫລື ບຸກຄົນທີ່ໃຊ້ພາສານັ້ນໆ. ເຮົາສາມາດສັງເກດໄດ້ງ່າຍໆວ່າ ຜູ້ໃດໃຊ້ພາສາ ( ເວົ້າ,ສົນທະນາ ຫລື ປາໄສ) ດ້ວຍຄວາມລະມັດລະວັງ, ຮູ້ໃຊ້ຄຳສັບຖືກຕາມກາລະ ເທສະ ຜູ້ນັ້ນແຫລະ ຄືຜູ້ມີລະດັບຄວາມຮູ້ ສູງທີ່ແທ້ຈິງ, ໃນທາງກົງກັນຂ້າມ ຜູ້ທີ່ຮຽນສູງ ແຕ່ໃຊ້ພາສາບໍ່ເປັນ ກໍເທົ່າກັບວ່າ ບໍ່ມີລະດັບວັດທະນະທຳ. ລະດັບໃນການໃຊ້ພາສາຂອງແຕ່ລະຄົນ ມັນສໍ່ສະແດງໃຫ້ເຫັນເຖິງ ລະດັບວັດທະນະທຳຂອງຄົນໆນັ້ນ. ຢາກຈະພັດທະນາລະດັບວັດທະນະທຳ, ລະດັບຈິນຕະນາການຂອງຄົນເຮົາ ສິ່ງສຳຄັນຈະຕ້ອງພັດທະນາລະດັບຄວາມຮູ້ພາສາໃຫ້ເລິກເຊິ່ງ.ນັບຕັ້ງແຕ່ ມີການປະຕິວັດຊາດ ປະຊາທິປະໄຕ ເປັນຕົ້ນມາ ການນຳເອົາພາສາລາວເຂົ້າສິດສອນຕັ້ງແຕ່ຂັ້ນປະຖົມ ຈົນເຖິງຂັ້ນມະຫາວິທະຍາໄລ ມັນເປັນການພັດທະນາ ແລະຍົກສູງລະດັບຄວາມຮູ້ທາງດ້ານພາສາລາວໃຫ້ແກ່ຖັນແຖວປັນຍາຊົນຄົນລາວກໍຄືປະຊາຊົນບັນດາເຜົ່າທົ່ວປະເທດ ໃຫ້ນັບມື້ສູງຂຶ້ນ. ພາສາເປັນພາຫານະທີ່ສຳຄັນອັນດັບນຶ່ງ ໃນການປະຕິບັດການປະຕິວັດ ທາງດ້ານແນວຄິດ ວັດທະນະທຳຂອງລາວເຮົາ. ສະນັ້ນ ການປົກປັນຮັກສາ ແລະພັດທະນາພາສາລາວ ຈຶ່ງຖືວ່າເປັນການປົກປັກຮັກສາ ແລະພັດທະນາລະດັບວັດທະນະທຳຂອງປະຊາຊົນລາວບັນ ດາເຜົ່ານັ້ນເອງ.

**ຮວມຄວາມແລ້ວ** ການປົກປັກຮັກສາຄວາມປອດໃສຂອງພາສາລາວ ມັນເປັນໜ້າທີ່ຂອງທົ່ວພັກ, ທົ່ວປວງຊົນລາວບັນດາເຜົ່າທຸກຄົນ ຕ້ອງເປັນເຈົ້າການແລະມີຄວາມຮັບຜິດຊອບຮ່ວມກັນ ເພື່ອສະແດງເຖິງຄວາມມີນ້ຳໃຈຮັກຊາດ, ມີສະຕິຊາດ ແລະລະດັບວັດທະນະທຳ ຂອງປວງຊົນລາວທັງຊາດ.

ບາງໜ້າທີ່ລະອຽດໃນການປົກປັກຮັກສາ ແລະພັດທະນາພາສາລາວ ໃນປັດຈຸບັນກໍຄືອະນາຄົດ ມີດັ່ງນີ້:

**+ ທາງດ້ານອັກຂະຫລະ:** ອັກຂະຫລະມັນແມ່ນເປືອກວັດຖຸຂອງພາສາ , ຫາກບໍ່ມີອັກຂະຫລະ ແມ່ນບໍ່ອາດມີພາສາໄດ້. ສະນັ້ນ ການປັບປຸງ ແລະແກ້ໄຂບາງບັນຫາ ທີ່ບໍ່ສອດຄ່ອງຂອງອັກຂະຫລະ ມັນແມ່ນຈຳເປັນອັນທຳອິດ; ເນື່ອງຈາກວ່າອັກຂະຫລະລາວປັດຈຸບັນ ຍັງມີຫລາຍບັນຫາ ທີ່ຈະຕ້ອງໄດ້ ຮັບການແກ້ໄຂໃຫ້ເປັນເອກະພາບກັນ ໂດຍສະເພາະແມ່ນຄວາມເປັນເອກະພາບ ທາງດ້ານການສະກົດ ຄຳ, ເລື່ອງສຽງວັນນະຍຸດ , ການໃຊ້ເຄື່ອງໝາຍວັນນະຍຸດ ແລະ ໂຕອັກສອນບາງໂຕ ທີ່ເຫັນວ່າ ຍັງມີ ຂໍ້ໂຕ້ແຍ່ງ ແລະບໍ່ທັນມີຄວາມເປັນເອກະພາບກັນ ເຫລົ່ານີ້ເປັນຕົ້ນ.

**+ ທາງດ້ານວັດຈະນະ:** ວັດຈະນະປຽບສະເໝືອນຄືວັດສະດຸກໍ່ສ້າງຂອງພາສາ, ບໍ່ມີວັດຈະນະ ກໍ ຈະບໍ່ສາມາດປະກອບສ້າງເປັນປະໂຫຍກ ເພື່ອສະແດງແນວຄິດອາລົມຈິດໄດ້. ວັດຈະນະ ມັນເປັນຫົວ ໜ່ວຍພື້ນຖານຂອງພາສາ. ຄັງສັບຂອງຊາດໃດນຶ່ງ ມັນໄດ້ກຳເນີດ, ສະສົມ ແລະພັດທະນາ ມາພ້ອມກັບ ການກຳເນີດ ແລະພັດທະນາຂອງສັງຄົມ ຫລື ຊາດນັ້ນໆ. ໃນພາສາ ວັດຈະນະເປັນພາກສ່ວນ ທີ່ມີການ ພັດທະນາແລະຂະຫຍາຍຕົວໄວກວ່າພາກສ່ວນອື່ນໆອັນເນື່ອງມາຈາກຄວາມຮຽກຮ້ອງການ ໃນການພັດ ທະນາ ແລະການຂະຫຍາຍຕົວຂອງສັງຄົມ. ພາສາລາວເຮົາປັດຈຸບັນ ພວມໄດ້ຮັບຜົນສະທ້ອນຢ່າງແຂງ ແຮງຈາກການພັດທະນາຂອງ ສັງຄົມ. ບັນດາຂະແໜງການເທັກນິກວິທະຍາສາດ, ວິຊາອາຊີບຕ່າງໆ ພວມໄດ້ຮັບການພັດທະນາ, ບັນຫາດັ່ງກ່າວນີ້ ມັນຮຽກຮ້ອງໃຫ້ມີຄຳສັບໃໝ່ໆຕອບສະໜອງ. ຍ້ອນ ແນວນັ້ນ ດ້ານນຶ່ງພວກເຮົາຄວນຕັ້ງໜ້າປົກປັກຮັກສາມໍລະດົກທາງພາສາ ຫລື ຄັງສັບທີ່ເຮົາມີຢູ່ແລ້ວນັ້ນ ໃຫ້ມີຄວາມປອດໃສ ແລະໝັ້ນຄົງ; ອີກດ້ານນຶ່ງ ຕ້ອງພັດທະນາພາສາສັບຂອງພວກເຮົາ ໃຫ້ມີຄວາມ ອຸດົມສົມບູນຍິ່ງຂຶ້ນ ບົນພື້ນຖານວັດຈະນະພື້ນຖານຂອງພວກເຮົາ ເພື່ອຕອບສະໜອງໄດ້ຕາມຄວາມ ຮຽກ ຮ້ອງຕ້ອງການຂອງພັດທະນາສັງຄົມ ກໍຄືປະເທດຊາດພວກເຮົາ.

**ການປົກປັກຮັກສາຄວາມປອດໃສຂອງວັດຈະນະຈະຕ້ອງ:**

- ໃຊ້ສັບໃຫ້ຊັດເຈນ, ຖືກຕ້ອງຕາມຄວາມໝາຍ ແລະ ແທດເໝາະກັບແວດບົດ.
- ໃຊ້ຄຳໃຫ້ເໝາະກັບ " ວັດທະນະທຳພາສາ ", ເໝາະກັບກາລະເທສະ, ມີຄວາມອ່ອນຊ້ອຍ.
- ຕ້ານການໃຊ້ສັບແບບຊອດກະຈາ, ອວດໂອ້ວ່າໂຕມີຄວາມຮອບຮູ້ກວ້າງຂວາງ..
- ຕ້ານການຢືມຄຳສັບຕ່າງປະເທດເຂົ້າມາໃຊ້ໂດຍບໍ່ມີຄວາມຈຳເປັນ ຫລືແບບຊະຊາຍ, ພວກ ເຮົາຢືມຄຳສັບຕ່າງປະເທດມາໃຊ້ກໍຕໍ່ເມື່ອ ໃນພາສາລາວບໍ່ມີຄຳສັບນັ້ນໆ, ຖ້າບໍ່ໃຊ້ຄຳນັ້ນ ຫລື ສຳນວນນັ້ນຈະບໍ່ຮັບປະກັນຄວາມຊັດເຈນທາງດ້ານຄວາມໝາຍ.

ສ່ວນການພັດທະນາວັດຈະນະໃຫ້ອຸດົມສົມບູນ ແລະ ພຽງພໍກັບຄວາມຕ້ອງການ ຂອງສັງຄົມນັ້ນ ມັນເປັນເລື່ອງທີ່ຈຳເປັນ ແລະຈະຕ້ອງດຳເນີນຢູ່ຕະຫລອດເວລາ, ແຕ່ຕ້ອງບົນພື້ນຖານ ວິທີວິທະຍາ ກ່ຽວ ກັບການປະກອບສ້າງສັບໃໝ່ຢ່າງຖືກຕ້ອງ ( ມີ 7 ວິທີ: ປະສົມຄຳ, ຊ້ຳຄຳ, ສອນ ສຽງ, ຍ້າຍຄວາມໝາຍ, ປ່ຽນຕຳແໜ່ງຄຳ, ກູ້ຢືມ ແລະບັນຍັດສັບໃໝ່), ແຕ່ຕ້ອງຢຶດໝັ້ນ ຫລັກແນວຄິດທິດສະດີທີ່ວ່າ " ມີລັກສະ ນະຊາດ, ວິທະຍາສາດ ແລະມະຫາຊົນ ".

+ ດ້ານໄວຍາກອນ : ແມ່ນພາກສ່ວນທີ່ວ່າດ້ວຍ ລະບຽບການຜູກຄຳ ໃຫ້ເປັນສຳນວນ ຄວາມເວົ້າ, ປະໂຍກ ແລະບົດ. ມີອັກຂະຫລະ, ວັດຈະນະ ແຕ່ບໍ່ມີລະບຽບໃນການໃຊ້ ກໍບໍ່ນັບວ່າ ເປັນພາສາໄດ້. ຖ້າພວກເຮົາເບິ່ງໃນແງ່ ການຄົບຄ້າສະມາຄົມ ຈະເຫັນວ່າ ໄວຍາກອນມີບົດບາດ ສຳຄັນກວ່າໝູ່, ຫາກວ່າ ບໍ່ກຳຫລັກໄວຍາກອນໄດ້ ກໍເທົ່າກັບວ່າບໍ່ຮູ້ພາສາ. ໄວຍາກອນເປັນພາກສ່ວນ ທີ່ປ່ຽນແປງຊ້າກວ່າໝູ່ຖ້າທຽບກັບພາກສ່ວນອື່ນໃນພາສາ; ໄວຍາກອນຄ່ອຍໆປ່ຽນແປງ ເພື່ອເຮັດໃຫ້ລະບຽບ, ຫຼັກການໃນການໃຊ້ສັບພາສາມີຄວາມຊັດເຈນ ແລະຮັດກຸມຍິ່ງຂຶ້ນ.ການປົກປັກຮັກສາຄວາມປອດໃສຂອງໄວຍາກອນ ກ່ອນອື່ນຈະຕ້ອງພະຍາຍາມເວົ້າ ແລະ ຂຽນໃຫ້ຖືກຕ້ອງຕາມຫລັກໄວຍາກອນ. ບັນດາຫລັກໄວຍາກອນ ມັນມີລັກສະນະສັງເຂບ ແລະ ນາມທຳສູງ. ສະນັ້ນ ຢາກເວົ້າ ແລະຂຽນໃຫ້ຖືກຕ້ອງກັບຫລັກໄວຍາກອນຈະຕ້ອງໄດ້ເອົາໃຈໃສ່ສຶກສາຄົ້ນຄວ້າຮ່ຳຮຽນ ຫລັກໄວຍາກອນໃຫ້ໜັກແໜ້ນ, ຊອກໃຫ້ເຫັນເຖິງລັກສະນະ ແລະ ຈຸດພິເສດຂອງໄວຍາກອນລາວຂອງພວກເຮົາ ເພື່ອເສີມຂະຫຍາຍລັກສະນະທີ່ດີ ແລະດັດແກ້ບາງຈຸດ ທີ່ເຫັນວ່າບໍ່ເໝາະສົມ ເພື່ອເຮັດໃຫ້ໄວຍາກອນລາວມີຫລັກການທີ່ຊັດເຈນແລະຮັດກຸມຍິ່ງຂຶ້ນ.

ຄຽງຄູ່ກັບການປົກປັກຮັກສາຄວາມປອດໃສທາງດ້ານ ອັກຂະຫລະ, ວັດຈະນະ ແລະ ໄວຍາກອນຂອງລາວແລ້ວ, ຍັງຈະຕ້ອງໄດ້ຄຳນຶງເຖິງການປົກປັກຮັກສາຄວາມປອດໃສ ທາງດ້ານ ສັນທະສົນຂອງລາວເຮົານຳອີກດ້ວຍ. ສັນທະສົນແມ່ນພາກສ່ວນທີ່ວ່າດ້ວຍ ສິລະປະໃນການນຳໃຊ້ພາສາຢູ່ທຸກໆຂົງເຂດຂອງສັງຄົມ. ພາສາ ເປັນທັງສາດ ແລະສິນ, ການໃຊ້ພາສາບໍ່ສະເພາະແຕ່ ເພື່ອຄວາມຖືກຕ້ອງ, ຊັດເຈນຕາມຄວາມຄິດທີ່ຢາກສະແດງອອກເທົ່ານັ້ນ, ແຕ່ຫາກຍັງຕ້ອງການ ຄວາມນີ້ມນວນ ອ່ອນຊ້ອຍ, ຈັບອົກຈັບໃຈ ຜູ້ອ່ານຜູ້ຟັງອີກດ້ວຍ. ການໃຊ້ພາສາໃນແຕ່ລະຂົງເຂດເຂດ ແມ່ນມີວິທີ , ວາດ ແລະມີຮູບແບບທີ່ແຕກຕ່າງກັນອອກໄປ ເຊັ່ນ ສັນທະລັກສະນະ, ວາທະສິນໃນຮູບແບບຕ່າງໆ ຫລືສິລະປະໃນການປະພັນບົດເລື່ອງຕ່າງໆ ເປັນຕົ້ນ.

ການປົກປັກຮັກສາ ແລະພັດທະນາພາສາລາວ ໃນແຕ່ລະດ້ານທີ່ກ່າວມານັ້ນ, ມັນເປັນພາລະໜ້າທີ່ຂອງຄົນລາວທຸກຄົນ ຈະຕ້ອງໄດ້ເອົາໃຈໃສ່ເປັນເຈົ້າການນຳກັນ; ແຕ່ແກນຫລັກສຳຄັນໃນການປະຕິວຽກນີ້ ກໍແມ່ນໂຮງຮຽນນັ້ນເອງ.

## III. ໜ້າທີ່ໃນການປົກປັກຮັກສາຄວາມປອດໃສຂອງພາສາຢູ່ຕາມໂຮງຮຽນ

ໂຮງຮຽນເປັນບ່ອນສ້າງຄົນຮຸ່ນໃໝ່ ເພື່ອໃຫ້ກາຍເປັນຄົນທີ່ມີຄວາມຮູ້, ຄວາມສາມາດທາງດ້ານເຕັກນິກວິທະຍາສາດແລະລະດັບວັດທະນະທຳສູງໃນອະນາຄົດ. ສະນັ້ນ ໂຮງຮຽນຈິ່ງມີບົດບາດສຸດແສນສຳຄັນ ໃນການປົກປັກຮັກສາຄວາມປອດໃສ ແລະພັດທະນາພາສາລາວເຮົາ.

ໂຮງຮຽນເປັນຂັ້ນທຳອິດໃນການປູພື້ນ ຫລື ປູກຄວາມສຳນຶກ ໃນການປົກປັກຮັກສາຄວາມປອດໃສ ແລະພັດທະນາພາສາແຫ່ງຊາດ. ເພື່ອຢາກປະຕິບັດໜ້າທີ່ດັ່ງກ່າວນີ້ ໃຫ້ສຳເລັດ, ກ່ອນອື່ນໝົດ ໂຮງຮຽນຕ່າງໆ ຈະຕ້ອງດຳເນີນການສິດສອນພາສາລາວຢູ່ຂັ້ນພື້ນຖານ (ໂຮງຮຽນອະນຸບານ, ປະຖົມ, ມັດທະຍົມ)ຢ່າງເຄັ່ງຄັດ ແລະເປັນລະບົບໜັກແໜ້ນ.

ໂດຍອີງຕາມຈຸດພິເສດຂອງ ແຕ່ລະຊັ້ນຮຽນ ເຊັ່ນ ຊັ້ນອະນຸບານ, ປະຖົມ, ມັດທະຍົມ, ວິຊາຊີບ ຫລື ມະຫາວິທະຍາໄລ ເພື່ອກຳ ນົດເນື້ອໃນຫລັກສູດໃນການສອນພາສາລາວ ໃຫ້ເໝາະກັບແຕ່ລະຊັ້ນ ນັ້ນໆ ຢ່າງເປັນລະບົບຕໍ່ ເນື່ອງຕັ້ງແຕ່ຕ່ຳຫາສູງ. ໂດຍຫລັກການພື້ນຖານແລ້ວ ການສອນພາສາລາວຢູ່ ຕາມໂຮງຮຽນຊັ້ນຕ່າງໆຈະຕ້ອງມຸ່ງຈຸດປະສົງເພື່ອໃຫ້ນັກຮຽນຮູ້ເວົ້າ ແລະ ຂຽນພາສາລາວຖືກຕ້ອງຕາມ ຫລັກໄວຍາກອນ, ຮູ້ໃຊ້ສັບສຳນວນຢ່າງນິ້ມນວນມ່ວນຫູ; ໃຫ້ນັກຮຽນ ນັກສຶກສາ ມີທັກສະໃນການຮູ້ໃຊ້ ພາສາ ເພື່ອສະແດງແນວຄິດອາລົມຈິດຂອງຕົນ ສູ່ຜູ້ອື່ນ ໃຫ້ເໝາະກັບ ກາລະເທສະ, ຖືກຕ້ອງແມ່ນຢຳ ເຮັດໃຫ້ຜູ້ອ່ານ ຜູ້ຟັງເຂົ້າໃຈງ່າຍ ແລະຈັບອົກຈັບໃຈ.

ຈາກຈຸດປະສົງ ແລະລະດັບຄາດໝາຍລວມ ດັ່ງກ່າວມານັ້ນ , ແຕ່ລະຊັ້ນຮຽນ ຕັ້ງແຕ່ຊັ້ນປະຖົມ ຈົນເຖິງຊັ້ນມະຫາວິທະຍາໄລ ຈະຕ້ອງໄດ້ຜັນຂະຫຍາຍໃຫ້ເປັນຈຸດປະສົງ ແລະ ລະດັບຄາດໝາຍສະ ເພາະ, ແທດເໝາະກັບເປົ້າໝາຍ ທີ່ຕົນຮັບຜິດຊອບສິດສອນ.

ສຳລັບເດັກອະນຸບານ ຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດໃນການຝຶກທັກສະໃນການຜັນສຽງໃຫ້ແກ່ ພວກຫລານໃຫ້ຊັດເຈນຕັ້ງແຕ່ເຍົາໄວ,ເຮັດກິດຈະກຳອື່ນໆທີ່ເສີມທັກສະໃນການໃຊ້ພາສາ ໃຫ້ແກ່ພວກ ຫລານ ຢ່າງເຊັ່ນ ເລົ່ານິທານ, ຝຶກຮ້ອງເພງ, ຝຶກແຕ້ມ ເປັນຕົ້ນ.

ຢູ່ໂຮງຮຽນສາມັນ ການສອນພາສາລາວ ກໍຕ້ອງດຳເນີນໄປຢ່າງຕໍ່ເນື່ອງ ຈາກຕ່ຳຫາສູງ, ຈາກງ່າຍ ຫາຍາກຢ່າງເປັນລະບົບ. ໂຮງຮຽນສາມັນ ມີໜ້າທີ່ປະກອບຄວາມຮູ້ ທາງພາສາລາວ ໃຫ້ແກ່ນັກຮຽນຢ່າງ ຖືກຕ້ອງທີ່ສຸດ ເພື່ອໃຫ້ນັກຮຽນຮູ້ໃຊ້ພາທະນຸ(ພາສາ)ເຂົ້າໃນການບັນທຶກ, ເກັບກຳເອົາຄວາມຮູ້ທາງດ້ານ ເຕັກນິກວິທະຍາສາດອື່ນໆໄດ້ດີ ແລະຊັດເຈນ. ເມື່ອຮຽນຈົບປະຖົມ ແລະ ມັດ ທະຍົມປາຍແລ້ວ ບໍ່ສະ ເພາະແຕ່ຮັບປະກັນໃຫ້ແກ່ນັກຮຽນຮູ້ຜັນສຽງຖືກ, ສະກົດຄຳຖືກຕາມຫລັກ ໄວຍາກອນເທົ່ານັ້ນ, ແຕ່ຫາກ ຈະຕ້ອງຮັບປະກັນ ໃຫ້ນັກຮຽນມີທັກສະໃນການນຳໃຊ້ພາສາຢ່າງຄ່ອງແຄ້ວ, ຊັດເຈນແລະນິ້ມນວນມ່ວນ ຫູນຳອີກ; ຄຽງຄູ່ກັນນັ້ນ ຍັງຈະຕ້ອງໄດ້ສອນໃຫ້ນັກຮຽນຮູ້ຮັກ, ທະນຸຖະໜອມ ແລະປົກປັກຮັກສາຄວາມ ປອດໃສຂອງພາສາລາວເຮົາອີກດ້ວຍ.

ຢູ່ຕາມໂຮງຮຽນອາຊີວະຊັ້ນກາງ, ຊັ້ນສູງ ແລະ ມະຫາວິທະຍາໄລ ຄູ ອາຈານຜູ້ທີ່ສິດສອນພາສາ ລາວ ນອກຈາກຈະມີໜ້າສິດສອນສອນພາສາລາວ ໃຫ້ນັກຮຽນ ນັກສຶກສາຮູ້ໃຊ້ພາສາລາວ ຢ່າງຖືກຕ້ອງ ຄ່ອງແຄ້ວແລ້ວ, ຍັງຈະຕ້ອງໄດ້ສອນໃຫ້ເຂົາເຈົ້າຮູ້ວິເຄາະວິໄຈ ເພື່ອຫາແນວທາງໃນ ການພັດທະນາພາ ສາແຫ່ງຊາດໃຫ້ຂະຫຍາຍຕົວ ແລະປອດໃສນຳອີກດ້ວຍ.

ເປັນການແນ່ນອນແລ້ວວ່າ ການປົກປັກຮັກສາຄວາມປອດໃສຂອງພາສາລາວ ຢູ່ຕາມໂຮງຮຽນ ຕ່າງໆນັ້ນ ບໍ່ສະເພາະແຕ່ເປັນພາລະໜ້າທີ່ຂອງຄູອາຈານ ຜູ້ສິດສອນພາສາລາວເທົ່ານັ້ນ, ແຕ່ຫາກຍັງ ເປັນອື່ນໆດ້ວຍ. ຄູ ອາຈານ ບໍ່ວ່າ ຈະສິດສອນຂະແໜງວິທະຍາສາດທຳມະຊາດ ຫລື ສັງຄົມກໍຕາມ ຈະ ຕ້ອງມີສະຕິຢູ່ສະເໝີວ່າ ຕົນເປັນຜູ້ນຶ່ງ ທີ່ໄດ້ຮັບພາລະໜ້າທີ່ ໃນການປົກປັກຮັກສາ ແລະພັດທະນາພາ ສາລາວ ເຊັ່ນດຽວກັນ. ສະນັ້ນບໍ່ວ່າຢູ່ໃນຊົ່ວໂມງຮຽນວິຊາໃດກໍຕາມ ຄູອາຈານມີໜ້າທີ່ໃນການດັດແປງ ຄວາມຜິດພາດ ໃນການໃຊ້ພາສາລາວໃຫ້ແກ່ນັກຮຽນ ນັກສຶກສາຢູ່ສະເໝີ.

ລວມຄວາມແລ້ວ ໂຮງຮຽນມີພາລະໜ້າທີ່ສຳຄັນຍິ່ງ ໃນການສິດສອນ ໃຫ້ນັກຮຽນ-ນັກສຶກສາ ມີ ສະຕິໃນການນຳໃຊ້ ແລະພັດທະນາພາສາລາວ ໃຫ້ປອດໃສ, ອຸດົມຮັ່ງມີຂຶ້ນເລື້ອຍໆ ເພື່ອຕອບສະໜອງ ໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາສັງຄົມລາວໃນປັດຈຸບັນ ກໍຄືອະນາຄົດ.

# ພາກທີ III

# ອັກຂະຫລະລາວ ສະໄໝປັດຈຸບັນ

## ບົດທີ 1

## ເປີດຫົວເລື່ອງ

ພາສາລາວປັດຈຸບັນ ພວມຢູ່ໃນໄລຍະພັດທະນາ ທຸກໆພາກສ່ວນຂອງພາສາລາວ ນັບຕັ້ງແຕ່ອັກຂະຫລະ, ວັດຈະນາຕະຫລອດເຖິງໄວຍາກອນ ພວມໄດ້ຮັບການສໍາມະນາ, ຖົກຖຽງກັນດຸເດືອດ ພໍສົມຄວນ ຢູ່ຕາມໂຮງຮຽນ, ສະຖາບັນ ຫລື ຢູ່ຕາມສະພາ "ກາເຟ" ແຫ່ງຕ່າງໆ. ສິ່ງດັ່ງກ່າວນີ້ມັນສໍ່ສະແດງໃຫ້ພວກເຮົາເຫັນວ່າ ພາສາລາວປັດຈຸບັນໄດ້ຮັບຄວາມສົນໃຈ ຈາກຫລາຍພາກສ່ວນຫລາຍວິຊາຊີບ ນັບທັງຜູ້ທີ່ມີສ່ວນຮັບຜິດຊອບ ແລະຜູ້ທີ່ບໍ່ມີສ່ວນຮັບຜິດຊອບໃນການຄົ້ນຄວ້າ, ປັບປຸງພາສາລາວ; ທັງນີ້ກໍເນື່ອງຈາກວ່າ ສັງຄົມລາວເຮົາປັດຈຸບັນ ພວມຢູ່ໃນທ່ວງທ່າພັດທະນາ ຢ່າງຮອບດ້ານ. ສະນັ້ນ ຄວາມຮຽກຮ້ອງຕ້ອງການໃຫ້ພາສາ ອັນເປັນພາຫະນະອັນນຶ່ງອັນດຽວ ສໍາລັບການຄົບຄ້າສະມາຄົມຢູ່ໃນສັງຄົມນັ້ນ ຈະຕ້ອງໄດ້ຮັບການພັດທະນາ ແລະຂະຫຍາຍໄປຄຽງຄູ່ກັບສັງຄົມ.

ໃນໄລຍະລໍຖ້າໝາກຜົນ ຂອງການ~~ສົມທະນາ~~ ສໍາມະນາ, ຄົ້ນຄວ້າຢ່າງເປັນທາງການນີ້ ພວກເຮົາອາດຈະອີງໃສ່ຕໍາລາຫລັກສູດພາສາລາວ ທີ່ພວກເຮົາມີ ແລະນໍາໃຊ້ສິດສອນຢູ່ໃນໂຮງຮຽນຕ່າງໆໃນປັດຈຸ ບັນມາຄົ້ນຄວ້າວິໄຈນໍາກັນສາກ່ອນ ເພື່ອພ້ອມກັນຊອກຫາວິທີ ໃນການພັດທະນາພາສາລາວເຮົາ ໃຫ້ຄ່ອຍໆຖືກຕ້ອງ ແລະຊັດເຈນເປັນກ້າວໆ. **ອັກຂະຫລະ** ແມ່ນການສັງຮວມສຽງທັງໝົດຂອງພາສາໃດນຶ່ງ ເຊິ່ງກວມເອົາສຽງສະຫລະ, ພະຍັນຊະນະ, ວັນນະຍຸດ ແລະການປະສົມສຽງຕ່າງໆ ນັ້ນເຂົ້າກັນເພື່ອກາຍເປັນພະຍາງ ຫລືຄໍາສັບ, ສໍາລັບປະກອບສ້າງສໍານວນຄວາມເວົ້າຕ່າງໆ. ສຽງສະຫລະ,ພະຍັນຊະນະໃນພາສາລາວແຕ່ລະສຽງ ລ້ວນແຕ່ມີເຄື່ອງໝາຍກໍານົດໄວ້ ເຊິ່ງພວກເຮົາເຄີຍເອີ້ນກັນວ່າ ຕົວອັກສອນນັ້ນເອງ.

ໂດຍອີງຕາມປື້ມໄວຍາກອນ ສະບັບທີ່ໃຊ້ກັນໃນປັດຈຸບັນ. ອັກສອນລາວມີທັງໝົດ 61 ໂຕ. ໃນນີ້ມີພະຍັນຊະນະ 33 ໂຕ, ນັບທັງພະຍັນຊະນະພິເສດ "ຣ" ແລະ ສະຫລະ 28 ໂຕ, ໃນນີ້ບໍ່ໄດ້ນັບ ເຄື່ອງໝາຍວັນນະຍຸດ 4 ຮູບ (x່, x້, x໊, x໋).

### 1 ພະຍັນຊະນະ:

ພະຍັນຊະນະ 33 ໂຕນີ້ ໄດ້ຮຽງໄວ້ຕາມລໍາດັບດັ່ງນີ້: **ກ , ຂ, ຄ, ງ, ຈ, ສ,ຊ,ຍ,ດ, ຕ, ຖ, ທ, ນ, ບ, ປ, ຜ, ຝ, ພ, ຟ, ມ, ຢ, ຣ, ລ, ວ, ຫ, ອ, ຮ.** ພະຍັນຊະນະປະສົມ : **ຫງ , ຫຍ ,ໜ, ໝ, ຫລ, ຫວ.**

ພະຍັນຊະນະ 33 ໂຕນີ້ໄດ້ແບ່ງອອກເປັນ 3 ໝວດຄື : ອັກສອນສູງ, ອັກສອນກາງແລະອັກສອນຕໍ່າດັ່ງຕາຕະລາງລຸ່ມນີ້:

| ອັກສອນສູງ | ອັກສອນກາງ | ອັກສອນຕ່ຳ |
|---|---|---|
| ຂ | ກ | ຄ |
| ສ | ຈ | ງ |
| ຖ | ດ | ຊ |
| ຜ | ຕ | ຍ |
| ຝ | ບ | ທ |
| ຫ | ປ | ນ |
| ພະຍັນຊະນະປະສົມ | ຢ | ພ |
| ຫວ | ອ | ຟ |
| ຫຍ | | ມ |
| ຫນ(ໜ) | | ຣ |
| ຫມ(ໝ) | | ລ |
| ຫລ(ຫຼ) | | ວ |
| ຫວ | | ຮ |

1.1. ພະຍັນຊະນະຄວບ:

ພະຍັນຊະນະຄວບມີ ໂຕດຽວຄື : " ວ " , ພະຍັນຊະນະຄວບນີ້ ໃຊ້ວາງໄວ້ທາງຫລັງ ຖັດຈາກພະຍັນຊະນະເຄົ້າ ເພື່ອເອົາສຽງໄປຄວບກັບສຽງພະຍັນຊະນະທີ່ກ່ຽວຂ້ອງ ໃຫ້ມີສຽງ " ວ " ປົນຢູ່ນຳ.

ການໃຊ້ພະຍັນຊະນະທີ່ມີຕົວ " ວ " ຄວບຢູ່ນຳນັ້ນ ເວລາທີ່ມີເຄື່ອງໝາຍວັນນະຍຸດຈະຕ້ອງວາງໄວ້ ເທິງ ຕົວ " ວ " ຄວບສະເໝີ ເຊັ່ນ:

ກ ກັບ ວ ເປັນ ກວ ຕົວຢ່າງ: ແກວ່ງໄກວ , ກວາງ , ກວຽນ
ຂ ກັບ ວ ເປັນ ຂວ ຕົວຢ່າງ: ຂວານ , ໄຂ່ວ່ຂວ້າງ
ຄ ກັບ ວ ເປັນ ຄວ ຕົວຢ່າງ: ຄວາຍ , ແຄ້ວັນ
ງ ກັບ ວ ເປັນ ງວ ຕົວຢ່າງ: ງົມງວາຍ
ຈ ກັບ ວ ເປັນ ຈວ ຕົວຢ່າງ: ຈວ້າຍກ໊ວ້າຍ
ສ ກັບ ວ ເປັນ ສວ ຕົວຢ່າງ: ສວາຍ, ສວ່າງ
ຊ ກັບ ວ ເປັນ ຊວ ຕົວຢ່າງ: ຊວ້ານ, ຊວາດ
ຍ ກັບ ວ ເປັນ ຍວ ຕົວຢ່າງ: ຍວ່າຍໆ
ດ ກັບ ວ ເປັນ ດວ ຕົວຢ່າງ: ດວ່າງໆ
ຕ ກັບ ວ ເປັນ ຕວ ຕົວຢ່າງ: ກະຕວ້າຍໆ
ຖ ກັບ ວ ເປັນ ຖວ ຕົວຢ່າງ: ຖວາຍ
ທ ກັບ ວ ເປັນ ທວ ຕົວຢ່າງ: ທວາຍ

1.2. ພະຍັນຊະນະພິເສດ:

ຕົກມາໄລຍະຊຸມປີ 80 ເປັນຕົ້ນມາມີຂະບວນການ ໃຊ້ພະຍັນຊະນະ "ຣ" ຫລາຍຂື້ນ, ແຕ່ຄວາມເປັນຈິງແລ້ວ ພາສາລາວເດີມເຮົາບໍ່ມີສຽງນີ້,ແຕ່ເມື່ອເບິ່ງທາງແງ່ວິຊາການແລ້ວ ເຫັນສົມຄວນນຳເອົາພະຍັນຊະນະ "ຣ" ເຂົ້າມາໃຊ້ ໃນລະບົບສຽງພະຍັນຊະນະພາສາລາວຄືນອີກ, ແຕ່ຄວນໃຊ້ໃນກໍລະນີຂຽນທັບສັບເທົ່ານັ້ນ ເຊັ່ນ ຊື່ວັດຖຸອຸປະກອນ ຫລື ຊື່ຄົນຕ່າງປະເທດທີ່ເຫັນວ່າ ໃຊ້ " ລ " ຫລື " ຣ "ແທນຈະພາໃຫ້ເກີດຄວາມ ຜິດພ້ຽນຈາກຄວາມໝາຍເດີມໄປ. ສ່ວນຄຳສັບທີ່ໄດ້ເຄົ້າມາຈາກພາສາບາລີ-ສັນສະກິດທີ່ມີສຽງ "ຣ" ໃຫ້ໃຊ້. "ລ" ຫລື "ຮ" ແທນ ຕາມສຳນຽງສຽງເວົ້າຂອງລາວ ເພື່ອຮັກສາຄວາມປອດໃສຂອງພາສາລາວ. ດ້ວຍເຫດນັ້ນ ພະຍັນຊະນະ "ຣ" ທີ່ນອນຢູ່ໃນລະບົບ ພະຍັນຊະນະລາວ ຈຶ່ງຖືວ່າເປັນພຽງພະຍັນຊະນະພິເສດເທົ່ານັ້ນ.

ກ່ຽວກັບເລື່ອງໂຕຄວບ ໂດຍອີງຕາມໄວຍາກອນມູນເຊື້ອ ພາສາລາວເຮົາມີໂຕ ຄວບພຽງໂຕດຽວຄື "ວ" ເທົ່ານັ້ນ, ແຕ່ຫາກອີງຕາມຄວາມຮຽກຮ້ອງຕ້ອງການ ໃນການນຳໃຊ້ຕົວຈິງຂອງສັງຄົມລາວປັດຈຸບັນ, ຢູ່ໃນປຶ້ມ "ໄວຍາກອນລາວປັດຈຸບັນ ສຳລັບໂຮງ ຮຽນສາມັນສຶກສາ " ໄດ້ອະນຸຍາດໃຊ້ນຳໃຊ້ພະຍັນຊະນະຄວບພິເສດອີກ 2 ໂຕ ຄື "ລ" ແລະ "ຣ" ສຳລັບໃຊ້ຂຽນທັບສັບໂດຍສະເພາະ ( ສັບທີ່ຢືມມາຈາກຕ່າງປະເທດ ທີ່ນອກ ຈາກເຄົ້າສັບທີ່ມາຈາກ ບາລີ-ສັນສະກິດ) ເຊັ່ນ: ປລາສຕິກ, ພລາສເຕີ, ພລາຊາ, ໂປຣແກຣມ , ໂປຣເຈັກ, ເປຣຊິເດັນ ...

1.3. ໂຕສະກົດ:

ໃນຈຳນວນພະຊະນະລາວ 33 ໂຕນັ້ນ, ສາມາດເຮັດໜ້າທີ່ໂຕສະກົດໄດ້ ພຽງ 8 ໂຕເທົ່ານັ້ນ ຄື **ກ, ງ, ຍ, ດ, ນ, ບ, ມ, ວ** ນອກນັ້ນ ບໍ່ສາມາດໃຊ້ເປັນໂຕສະກົດໄດ້. ໃນຈຳນວນໂຕສະກົດທັງ 8 ໂຕນີ້ ເພິ່ນໄດ້ແບ່ງອອກເປັນ 2 ໝວດ ຄື ສະກົດຕາຍ ແລະ ສະກົດເປັນ.

- ສະກົດຕາຍໄດ້ແກ່ : **ກ, ດ, ບ** ພະຍາງໃດ ຫາກມີໂຕສະກົດທັງ 3 ນີ້ ແມ່ນບໍ່ສາມາດໃສ່ເຄື່ອງໝາຍວັນນະຍຸດໄດ້ ເພາະມີສຽງວັນນະຍຸດເອກ ຢູ່ໃນໂຕແລ້ວ; **ຍົກເວັ້ນ**ກໍລະນີ ອັກສອນກາງມີໂຕສະກົດຕາຍ (ກ,ດ,ບ) ແມ່ນສາມາດໃສ່ເຄື່ອງ ໝາຍວັນນະຍຸດໄດ້, ແຕ່ກໍໃຊ້ໄດ້ ພຽງໄມ້ຕີ (x̃) ເທົ່ານັ້ນ ເຊັ່ນ ກ໊າກ, ກົ໊ດໆ, ກ໊າບໆ, ກິ໊ບໆ, ກ໊ອດໆ ເປັນຕົ້ນ.
- ສະກົດເປັນໄດ້ແກ່ : **ງ, ຍ, ນ, ມ, ວ** ສະກົດເຫລົ່ານີ້ ສາມາດໃຊ້ເຄື່ອງໝາຍ ວັນນະຍຸດໄດ້ທຸກຮູບ.

ນອກຈາກໂຕສະກົດທັງ 8 ໂຕ ທີ່ກ່າວມາແລ້ວນີ້, ຢູ່ໃນໄວຍາກອນລາວສະບັບປັດຈຸບັນຍັງອະນຸຍາດໃຫ້ໃຊ້ ໂຕສະກົດພິເສດ ອີກ ຄື ສ, ຟ, ລ ໂຕສະກົດ ເຫລົ່ານີ້ ອະນຸຍາດໃຫ້ໃຊ້ ສຳລັບຂຽນທັບສັບທີ່ຢືມມາຈາກພາສາຕ່າງປະເທດ ເທົ່ານັ້ນ ໂດຍບໍ່ໄດ້ກວມເອົາເຄົ້າສັບທີ່ມາຈາກ ບາລີ-ສັນສະກິດ ເຊັ່ນ ອິສຕຣາລີ, ອັຟການິສຖານ, ...

1.2. ພະຍັນຊະນະພິເສດ:

ຕົກມາໄລຍະຊຸມປີ 80 ເປັນຕົ້ນມາມີຂະບວນການ ໃຊ້ພະຍັນຊະນະ "ຣ" ຫລາຍຂື້ນ, ແຕ່ຄວາມເປັນຈິງແລ້ວ ພາສາລາວເດີມເຮົາບໍ່ມີສຽງນີ້,ແຕ່ເມື່ອເບິ່ງທາງແງ່ວິຊາການແລ້ວ ເຫັນສົມຄວນນຳເອົາພະຍັນຊະນະ "ຣ" ເຂົ້າມາໃຊ້ ໃນລະບົບສຽງພະຍັນຊະນະພາສາລາວຄືນອີກ, ແຕ່ຄວນໃຊ້ໃນກໍລະນີຂຽນທັບສັບເທົ່ານັ້ນ ເຊັ່ນ ຊື່ວັດຖຸອຸປະກອນ ຫລື ຊື່ຄົນຕ່າງປະເທດທີ່ເຫັນວ່າ ໃຊ້ " ລ " ຫລື " ຣ "ແທນຈະພາໃຫ້ເກີດຄວາມ ຜິດພ້ຽນຈາກຄວາມໝາຍເດີມໄປ. ສ່ວນຄຳສັບທີ່ໄດ້ເຄົ້າມາຈາກພາສາບາລີ-ສັນສະກິດທີ່ມີສຽງ "ຣ" ໃຫ້ໃຊ້ "ລ" ຫລື "ຮ" ແທນ ຕາມສຳນຽງສຽງເວົ້າຂອງລາວ ເພື່ອຮັກສາຄວາມປອດໃສຂອງພາສາລາວ. ດ້ວຍເຫດນັ້ນ ພະຍັນຊະນະ "ຣ" ທີ່ນອນຢູ່ໃນລະບົບ ພະຍັນຊະນະລາວ ຈຶ່ງຖືວ່າເປັນພຽງພະຍັນຊະນະພິເສດເທົ່ານັ້ນ.

ກ່ຽວກັບເລື່ອງໂຕຄວບ ໂດຍອີງຕາມໄວຍາກອນມູນເຊື້ອ ພາສາລາວເຮົາມີໂຕ ຄວບພຽງໂຕດຽວຄື "ວ" ເທົ່ານັ້ນ, ແຕ່ຫາກອີງຕາມຄວາມຮຽກຮ້ອງຕ້ອງການ ໃນການນຳໃຊ້ຕົວຈິງຂອງສັງຄົມລາວປັດຈຸບັນ, ຢູ່ໃນປື້ມ "ໄວຍາກອນລາວປັດຈຸບັນ ສຳລັບໂຮງ ຮຽນສາມັນສຶກສາ " ໄດ້ອະນຸຍາດໃຫ້ນຳໃຊ້ພະຍັນຊະນະຄວບພິເສດອີກ 2 ໂຕ ຄື "ລ" ແລະ "ຣ" ສຳລັບໃຊ້ຂຽນທັບສັບໂດຍສະເພາະ ( ສັບທີ່ຢືມມາຈາກຕ່າງປະເທດ ທີ່ນອກ ຈາກເຄົ້າສັບທີ່ມາຈາກ ບາລີ-ສັນສະກິດ) ເຊັ່ນ: ປລາສຕິກ, ພລາສເຕີ, ພລາຊາ, ໂປຣແກຣມ , ໂປຣເຈັກ, ເປຣຊີເດັນ ...

1.3. ໂຕສະກົດ:

ໃນຈຳນວນພະຍັນຊະນະລາວ 33 ໂຕນັ້ນ, ສາມາດເຮັດໜ້າທີ່ໂຕສະກົດໄດ້ ພຽງ 8 ໂຕເທົ່ານັ້ນ ຄື **ກ, ງ, ຍ, ດ, ນ, ບ, ມ, ວ** ນອກນັ້ນ ບໍ່ສາມາດໃຊ້ເປັນໂຕສະກົດໄດ້. ໃນຈຳນວນໂຕສະກົດທັງ 8 ໂຕນີ້ ເພິ່ນໄດ້ແບ່ງອອກເປັນ 2 ໝວດ ຄື ສະກົດຕາຍ ແລະ ສະກົດເປັນ.

- ສະກົດຕາຍໄດ້ແກ່ : **ກ, ດ, ບ** ພະຍາງໃດ ຫາກມີໂຕສະກົດທັງ 3 ນີ້ ແມ່ນບໍ່ສາມາດໃສ່ເຄື່ອງໝາຍວັນນະຍຸດໄດ້ ເພາະມີສຽງວັນນະຍຸດເອກ ຢູ່ໃນໂຕແລ້ວ; **ຍົກເວັ້ນ**ກໍລະນີ ອັກສອນກາງມີໂຕສະກົດຕາຍ (ກ,ດ,ບ) ແມ່ນສາມາດໃສ່ເຄື່ອງ ໝາຍວັນນະຍຸດໄດ້, ແຕ່ກໍໃຊ້ໄດ້ ພຽງໄມ້ຕີ (x̃) ເທົ່ານັ້ນ ເຊັ່ນ ກ໊າກ, ກິ໊ດໆ, ກ໊າບໆ, ກິ໊ບໆ, ກ໊ອດໆ ເປັນຕົ້ນ.
- ສະກົດເປັນໄດ້ແກ່ : **ງ, ຍ, ນ, ມ, ວ** ສະກົດເຫລົ່ານີ້ ສາມາດໃຊ້ເຄື່ອງໝາຍ ວັນນະຍຸດໄດ້ທຸກຮູບ.

ນອກຈາກໂຕສະກົດທັງ 8 ໂຕ ທີ່ກ່າວມາແລ້ວນີ້, ຢູ່ໃນໄວຍາກອນລາວສະບັບປັດຈຸບັນຍັງອະນຸຍາດໃຫ້ໃຊ້ ໂຕສະກົດພິເສດ ອີກ ຄື ສ, ຟ, ລ ໂຕສະກົດ ເຫລົ່ານີ້ ອະນຸຍາດໃຫ້ໃຊ້ ສຳລັບຂຽນທັບສັບທີ່ຢືມມາຈາກພາສາຕ່າງປະເທດ ເທົ່ານັ້ນ ໂດຍບໍ່ໄດ້ກວມເອົາເຄົ້າສັບທີ່ມາຈາກ ບາລີ-ສັນສະກິດ ເຊັ່ນ ອິສຕຣາລີ, ອັຟການິສຖານ, ...

## 2. ສະຫລະ :

ສະຫລະລາວທັງໝົດລວມມີ 28 ໂຕ , ໃນນີ້ ໄດ້ແບ່ງອອກເປັນ ສະຫລະເຄົ້າ, ສະຫລະປະສົມ ແລະ ສະຫລະພິເສດ ດັ່ງໄດ້ຈັດລຽງຕາມລຳດັບໃນຕາຕະລາງລຸ່ມນີ້:

| ສະຫລະເຄົ້າ (12 ໂຕ) | ສະຫລະປະສົມ (12 ໂຕ) | ສະຫລະພິເສດ (4 ໂຕ) |
|---|---|---|
| Xະ | ເXະ | ໄX |
| Xາ | ແXະ | ໃX |
| Xິ | ໂXະ | ເXົາ |
| Xີ | ເXາະ | Xຳ |
| Xຶ | ເXິ | |
| Xື | ເXີ | |
| Xຸ | ເXັຍ | |
| Xູ | ເXຍ | |
| ເX | ເXຶອ | |
| ແX | ເXືອ | |
| ໂX | Xົວະ | |
| Xໍ | Xົວ | |

ການທີ່ອັກຂະຫລະວິທີລາວ ໄດ້ຈັດແບ່ງສະຫລະອອກເປັນ ສະຫລະເຄົ້າ, ສະຫລະປະສົມ ແລະ ສະຫລະພິເສດ ນັ້ນແມ່ນອີງໃສ່ດ້ານຮູບການ ຫລື ທາງດ້ານໂຄງ ສ້າງຫລາຍກວ່າທາງດ້ານສຽງ ເຊັ່ນ: **xະ, xາ, xິ , xີ, xຶ , xື** ... ເປັນສະສະຫລະເຄົ້າຍ້ອນມີແຕ່ຮູບດຽວ , ສ່ວນ **ເxະ, ແxະ , ໂxະ, ເxາະ** ... ເປັນສະຫລະປະສົມ ເນື່ອງຈາກວ່າມີການປະສົມກັບສະຫລະ **xະ** ເປັນຕົ້ນ.

ໃນກໍລະນີ ສະຫລະພິເສດນັ້ນ ເນື່ອງຈາກວ່າ ສະຫລະທັງ 4 ໂຕນີ້ ແມ່ນບໍ່ສາມາດປະກອບກັບ ໂຕສະກົດໄດ້, ເພາະມີສຽງສະກົດຢູ່ໃນໂຕແລ້ວ ແລະ ອີກດ້ານນຶ່ງ ກໍເພາະວ່າ ບໍ່ມີຄູ່ສຽງຍາວ ຄືກັບສະ ຫລະໂຕອື່ນໆ ຈຶ່ງເອີ້ນວ່າ ສະຫລະພິເສດນັ້ນເອງ.

ສະຫລະສຽງສັ້ນ-ຍາວ ທັງ 12 ຄູ່ນັ້ນ ເມື່ອປະກອບກັບໂຕສະກົດ ມີບາງໂຕໄດ້ ປ່ຽນຮູບ ລະອຽດ ດັ່ງນີ້:

xະ + ໂຕສະກົດ ປ່ຽນເປັນ xັx **ເຊັ່ນ** xັກ, xັງ, xັນ, ...
ເxະ + ໂຕສະກົດ ປ່ຽນເປັນ ເxັx **ເຊັ່ນ** ເxັກ, ເxັງ, ເxັນ, ...
ແxະ + ໂຕສະກົດ ປ່ຽນເປັນ ແxັx **ເຊັ່ນ** ແxັກ, ແxັງ, ແxັນ, ...

ໂxະ + ໂຕສະກົດ ປ່ຽນເປັນ xົx ເຊັ່ນ ກົກ, ກົງ, ກົນ, ...

ເxາະ + ໂຕສະກົດ ປ່ຽນເປັນ xັອx ເຊັ່ນ ກັອກ, ກັອງ, ກັອນ, ...

xໍ + ໂຕສະກົດ ປ່ຽນເປັນ xອx ເຊັ່ນ ກອກ, ກອງ, ກອນ, ...

ເxັຍ + ໂຕສະກົດ ປ່ຽນເປັນ xັຽx ເຊັ່ນ ກັຽກ, ກັຽງ, ກັຽນ, ...

ເxີຍ + ໂຕສະກົດ ປ່ຽນເປັນ xຽx ເຊັ່ນ ກຽກ, ກຽງ, ກຽນ, ...

xົວະ + ໂຕສະກົດ ປ່ຽນເປັນ xັວx ເຊັ່ນ ກັວກ, ກັວງ, ກັວນ, ...

xົວ + ໂຕສະກົດ ປ່ຽນເປັນ xວx ເຊັ່ນ ກວກ, ກວງ, ກວນ, ...

## 3. ເຄື່ອງໝາຍວັນນະຍຸດ:

ໃນພາສາລາວມີເຄື່ອງໝາຍວັນນະຍຸດ 4 ຮູບຄື: ໄມ້ເອກ ( x່ ), ໄມ້ໂທ ( x້ ), ໄມ້ຕີ ( x໊ ),ໄມ້ຈັດຕະວາ ( x໋ ). ເຄື່ອງໝາຍວັນນະຍຸດນີ້ ເພິ່ນກໍຖືວ່າ ເປັນແມ່ອັກຂະຫລະປະເພດນຶ່ງຄືກັນ, ທັງນີ້ ກໍເນື່ອງຈາກວ່າ ພະຍາງໃດກໍດີ ຫາກຕື່ມ ເຄື່ອງໝາຍວັນນະຍຸດເຂົ້າໄປ ຈະໄດ້ຄວາມໝາຍໃໝ່ຕ່າງຈາກຄວາມ ໝາຍເດີມອອກໄປ.

ຕົວຢ່າງ: - ຂາ ຂ່າ ຂ້າ

- ກາ ກ່າ ກ້າ ກ໊າ ກ໋າ

- ຄາ ຄ່າ ຄ້າ

ຜ່ານຕົວຢ່າງເທິງນີ້ເຮົາສັງເກດເຫັນວ່າ ເຄື່ອງໝາຍວັນນະຍຸດທີ່ໃຊ້ຫລາຍກວ່າໝູ່ມີແຕ່ໄມ້ເອກ (x່) ກັບໄມ້ໂທ (x້) ເທົ່ານັ້ນ, ເພາະວ່າ ສອງໄມ້ນີ້ສາມາດໃຊ້ກັບທຸກໆໝວດອັກສອນໄດ້, ສ່ວນໄມ້ຕີ (x໊) ກັບໄມ້ຈັດຕະວາ (x໋) ຈຳກັດກວ່າ, ເພາະວ່າ ສອງໄມ້ນີ້ສາມາດໃຊ້ກັບ ອັກສອນກາງ 8 ໂຕເທົ່ານັ້ນ, ບໍ່ສາມາດໃຊ້ກັບໝວດອັກສອນສູງ ແລະຕໍ່າໄດ້; ອາດຈະເວົ້າໄດ້ວ່າ ໄມ້ຕີ ແລະ ໄມ້ຈັດຕະວາ ພຽງແຕ່ເປັນໂຕແປສຽງພະຍາງອັກສອນກາງ ໃຫ້ຄ້າຍກັບພະຍາງອັກສອນຕໍ່າ ແລະສູງເທົ່ານັ້ນ.

ໂດຍອີງຕາມ ຫລັກໄວຍາກອນ ສະບັບ ລາຊະອານາຈັກລາວ ກະຊວງສຶກສາທິການ ຮັບຮອງໂດຍ ຣາຊບັນດິດສະພາ ພິມປີ 1972 ໄດ້ມີລະບຽບການໃຊ້ເຄື່ອງໝາຍວັນນະຍຸດ ດັ່ງນີ້:

ກ່ອນຈະໃຊ້ເຄື່ອງໝາຍວັນນະຍຸດ ຈະຕ້ອງໄດ້ສັງເກດເບິ່ງວ່າ ພະຍາງເປັນ ຫລື ພະຍາງຕາຍ; ພະຍັນຊະນະຕົ້ນພະຍາງ ເປັນອັກສອນສູງ, ກາງ ຫລື ຕໍ່າ; ພະຍາງມີສະຫລະສຽງສັ້ນ ຫລື ສຽງຍາວແລະຕ້ອງຂຽນເຄື່ອງ ໝາຍວັນນະຍຸດໄວ້ເທິງພະຍັນຊະນະ ຕົ້ນພະຍາງສະເໝີ. ຖ້າຫາກແມ່ນພະຍັນຊະນະປະສົມຈະຕ້ອງ ຂຽນເຄື່ອງໝາຍວັນນະຍຸດໄວ້ເທິງພະຍັນຊະນະໂຕທີ່ສອງ, ສຳລັບການໃຊ້ເຄື່ອງໝາຍວັນນະຍຸດ ເພິ່ນໄດ້ກຳນົດລະບຽບໄວ້ 5 ລະບຽບດັ່ງນີ້:

**+ ລະບຽບທີ່1:** ພະຍາງຕາຍ ເຊິ່ງພະຍັນຊະນະຕົ້ນພະຍາງ ແມ່ນອັກສອນກາງ ແລະ ປະກອບກັບສະຫລະສຽງສັ້ນ ໃຊ້ໄດ້ແຕ່ໄມ້ຕີ ເທົ່ານັ້ນ.

ຕົວຢ່າງ: ເກາະ - ເກົ໊າະ ກັກ - ກັ໊ກ

ກັອດ - ກັ໊ອດ ກົບ - ກົ໊ບ

+ **ລະບຽບທີ່ 2:** ພະຍາງຕາຍ ເຊິ່ງພະຍັນຊະນະພະຍາງຕົ້ນແມ່ນອັກສອນກາງແລະ ສະຫລະສຽງຍາວໃຊ້ໄດ້ແຕ່ ໄມ້ໂທ ເທົ່ານັ້ນ.

ຕົວຢ່າງ: ກາກ - ກ້າກ ປາບ - ປ້າບ

ກາດ - ກ້າດ ກາບ - ກ້າບ

+ **ລະບຽບທີ່ 3:** ພະຍາງຕາຍ ເຊິ່ງພະຍັນຊະນະຕົ້ນພະຍາງ ແມ່ນອັກສອນສູງຫລື ອັກສອນຕ່ຳແມ່ນໃຊ້ເຄື່ອງໝາຍວັນນະຍຸດບໍ່ໄດ້ເພາະວ່າມີສຽງເອກໃນຕົວແລ້ວ.

ຕົວຢ່າງ: ສັກ - ຊັກ ສາກ - ຊາກ

ສັບ - ຊັບ ສາບ - ຊາບ

+ **ລະບຽບທີ່ 4:** ພະຍາງເປັນ ເຊິ່ງພະຍັນຊະນະຕົ້ນພະຍາງ ແມ່ນອັກສອນກາງແມ່ນສາມາດໃຊ້ເຄື່ອງໝາຍວັນນະຍຸດທັງ 4 ຮູບໄດ້.

ຕົວຢ່າງ: ປາ ປ່າ ປ້າ ປ໊າ ປ໋າ

ປົງ ປົ່ງ ປົ້ງ ປົ໊ງ ປົ໋ງ

ກອນ ກ່ອນ ກ້ອນ ກ໊ອນ ກ໋ອນ

+ **ລະບຽບທີ່ 5:** ພະຍາງເປັນ ເຊິ່ງພະຍັນຊະນະຕົ້ນພະຍາງ ແມ່ນອັກສອນສູງຫລື ອັກສອນຕ່ຳ ແມ່ນສາມາດໃຊ້ໄດ້ແຕ່ໄມ້ເອກ ແລະ ໄມ້ໂທເທົ່ານັ້ນ.

ຕົວຢ່າງ: ສາ ສ່າ ສ້າ ຂາງ ຂ່າງ ຂ້າງ

ຊາ ຊ່າ ຊ້າ ຄາງ ຄ່າງ ຄ້າງ

ໃນ 5 ລະບຽບການ ວ່າດ້ວຍການໃຊ້ເຄື່ອງໝາຍວັນນະຍຸດທີ່ກ່າວມານີ້, ເຮົາສັງເກດເຫັນວ່າ ລະບຽບທີ 1 ແລະ 2 ມີຂໍ້ຂັດແຍ່ງກັບລະບຽບທີ 3 ; ໃນຄວາມເປັນຈິງແລ້ວ ພະຍາງຕາຍອັກສອນກາງຈະປະກອບກັບສະຫລະສຽງສັ້ນ ຫລື ຍາວ ກໍຕາມ ສາມາດໃຊ້ໄດ້ແຕ່ໄມ້ຕີເທົ່ານັ້ນ, ເພາະສຽງໄມ້ຕີ ເທົ່າກັບສຽງເອກຕ່ຳ.

ຕົວຢ່າງ: (1) ນ້ຳຕົກຕາດສຽງດັງ<u>ທາດໆ</u>.

(2) ສຽງເປັດຮ້ອງ <u>ກ໊າບໆ</u> .

**ທາດໆ** = <u>ກ໊າບໆ</u>

(1) ສຽງດັງບໍ່ຊັດ

(2) ເຊືອກຂາດປຶ໊ດ

<u>ຊັດ</u>(ເຈນ) = <u>ປຶ໊ດ</u>

❋ ສະຫລຸບ: ດັ່ງໄດ້ສະເໜີມາແລ້ວວ່າ ພາສາລາວໃນສະໄໝປັດຈຸບັນ ຢູ່ໄລຍະພັດທະນາຢ່າງໄວວາ ແລະໄດ້ ຮັບຄວາມສົນໃຈຈາກຫລາຍພາກສ່ວນ ບັນຫາພະຍັນຊະນະ, ສະຫລະ ແລະ ການໃຊ້ເຄື່ອງໝາຍວັນນະຍຸດ ຈະຕ້ອງໄດ້ອີງໃສ່ປຶ້ມ " ໄວຍາກອນລາວປັດຈຸບັນ " ( ສຳລັບໂຮງຮຽນສາມັນສຶກສາ ) ໂດຍ ສວສ ກະຊວງສຶກສາ ພິມ 2000 ອຸປະຖຳ ໂດຍ ອົງການ ຢູນີແຊບ ( UNICEF ) ເພື່ອຄວາມເປັນເອກະພາບໃນການນຳໃຊ້ ທົ່ວສັງຄົມ.

# ບົດທີ 2

## ລະບົບຕົວສຽງພາສາລາວໃນປັດຈຸບັນ

ດັ່ງໄດ້ສະເໜີມາໃນບົດເປີດຫົວເລື່ອງແລ້ວວ່າ ພະຍັນຊະນະລາວທັງໝົດມີ 33 ໂຕ ( ນັບທັງພະຍັນຊະນະພິເສດ ຣ ) ແລະ ສະຫລະ 28 ຕົວ ( ນັບທັງສະຫຼະພິເສດ 4 ຮູບ ). ແຕ່ເມື່ອອີງໃສ່ວິຊາ ຕົວສຽງວິທະຍາສາດ ( Phonemics ) ມາເຍືອງເບິ່ງແລ້ວ ໃນພາສາລາວພວກເຮົາປັດຈຸບັນ ມີຕົວສຽງ ພະຍັນຊະນະພຽງແຕ່ 20 ໂຕ ແລະ ສະຫລະ 24 ໂຕ ເທົ່ານັ້ນ.

1. ຕົວສຽງພະຍັນຊະນະ :

ຕົວສຽງ ( Phoneme ) ບໍ່ໄດ້ໝາຍເຖິງໂຕອັກສອນ, ມັນໝາຍເຖິງໜ່ວຍສຽງ ທີ່ມີຢູ່ໃນພາສາໃດນຶ່ງ; ໂຕອັກສອນ ເປັນພຽງແຕ່ເຄື່ອງໝາຍ ເພື່ອບັນທຶກໜ່ວຍສຽງເທົ່ານັ້ນ. ສະນັ້ນ ປະລິມານຕົວອັກສອນຢູ່ໃນພາສານຶ່ງໆ ບາງເທື່ອບໍ່ກົງກັບປະລິມານຂອງຕົວສຽງ. ໃນພາສາລາວຂອງພວກເຮົາ ຈຳນວນພະຍັນຊະນະທັງໝົດ 33 ຕົວ ( ນັບທັງພະຍັນຊະນະພິເສດ ຣ ), ແຕ່ປະລິມານຕົວສຽງພະຍັນຊະນະ ມີພຽງແຕ່ 20 ຕົວ ເທົ່ານັ້ນ, ທັງນີ້ກໍເນື່ອງຈາກວ່າ ພາສາລາວເຮົາ ມີກໍລະນີ **ມີເຄື່ອງໝາຍໂຕອັກສອນຫລາຍໂຕ ແຕ່ເທົ່າກັບຕົວສຽງດຽວ** ເຊັ່ນ ລະຫວ່າງອັກສອນສູງ ແລະ ຕ່ຳ, ຖ້າເຮົາສັງເກດໃນແງ່ຕົວສຽງວິທະຍາແລ້ວ ຄຳວ່າ "ສູງ - ຕ່ຳ" ມັນບໍ່ນອນຢູ່ໃນຂົງເຂດຂອງໂຕອັກສອນ, ແຕ່ຫາກຂຶ້ນກັບສຽງວັນນະຍຸດ (Tone ) ຕ່າງຫາກ. ຫາກເມື່ອເຮົາຫວນຄືນມາເບິ່ງ " ທິດສະດີພາສາ " ແລ້ວ, **ມັນມີຫລາຍກໍລະນີສັບສົນເຊັ່ນ** ກໍລະນີສຽງດຽວນັ້ນ ແຕ່ສະແດງດ້ວຍເຄື່ອງໝາຍໂຕອັກສອນຫລາຍໂຕ ເຫລົ່ານີ້ ເປັນຕົ້ນ.

ດັ່ງນັ້ນ ເພື່ອຫລີກລ່ຽງກໍລະນີສັບສົນດັ່ງກ່າວ, ນັກພາສາສາດທັງຫລາຍຈຶ່ງຊອກວິທີຈົດສຽງໃຫ້ເປັນເອກະພາບ, ໂດຍໄດ້ສ້າງເຄື່ອງໝາຍຈົດສຽງແບບສາກົນຂຶ້ນ ແລະໄດ້ກຳນົດກັນວ່າ ເຄື່ອງໝາຍນີ້ງໃຊ້ ຈົດແຕ່ສຽງດຽວເທົ່ານັ້ນ.

ໂດຍອີງຕາມຫລັກການ ແລະທິດສະດີທີ່ກ່າວມານັ້ນ ຈຶ່ງສາມາດຢືນຢັນວ່າລະບົບຕົວສຽງພະຍັນຊະນະລາວເຮົາມີພຽງແຕ່ 20 ຕົວເທົ່ານັ້ນ:

| | | | | |
|---|---|---|---|---|
| / k / | ເຄື່ອງໝາຍອັກສອນ | ກ | ຕົວຢ່າງ | ກວດກາ, ກົດເກນ |
| / kh / | ເຄື່ອງໝາຍອັກສອນ | ຂ, ຄ | ຕົວຢ່າງ | ຂີດຂຽນ, ຄົ້ນຄວ້າ |
| / ŋ / | ເຄື່ອງໝາຍອັກສອນ | ຫງ, ງ | ຕົວຢ່າງ | ຫງ່ວມເຫງົາ, ໂງເງ |
| / ch / | ເຄື່ອງໝາຍອັກສອນ | ຈ | ຕົວຢ່າງ | ຈັບຈ່າຍ, ຈົດຈຳ |
| / s / | ເຄື່ອງໝາຍອັກສອນ | ສ,ຊ | ຕົວຢ່າງ | ສົດໃສ, ຊົດໃຊ້ |
| / ñ/ | ເຄື່ອງໝາຍອັກສອນ | ຫຍ,ຍ | ຕົວຢ່າງ | ຫຍຸ້ງຍາກ, ຍົກຍ້າຍ |
| / d / | ເຄື່ອງໝາຍອັກສອນ | ດ | ຕົວຢ່າງ | ເດັດດ່ຽວ, ດຸເດືອດ |
| / t / | ເຄື່ອງໝາຍອັກສອນ | ຕ | ຕົວຢ່າງ | ຕົ້ນຕໍ, ຕ່ຳຕ້ອຍ |
| / th / | ເຄື່ອງໝາຍອັກສອນ | ຖ,ທ | ຕົວຢ່າງ | ຖົກຖຽງ, ທັກທາຍ |

10 / n / ເຄື່ອງໝາຍອັກສອນ ໜ,ນ ຕົວຢ່າງ ໜັກໜ່ວງ, ເນື້ອໃນ

11 / b / ເຄື່ອງໝາຍອັກສອນ ບ ຕົວຢ່າງ ບົດບາດ, ບິດເບືອນ

12 / p / ເຄື່ອງໝາຍອັກສອນ ປ ຕົວຢ່າງ ປົດປ່ອຍ, ປົກປິດ

13 / ph / ເຄື່ອງໝາຍອັກສອນ ຜ, ພ ຕົວຢ່າງ ຜິດພາດ, ພັກພວກ

14 / f / ເຄື່ອງໝາຍອັກສອນ ຝ, ຟ ຕົວຢ່າງ ໃຝ່ຝັນ, ຟົດຟື້ນ

15 / m / ເຄື່ອງໝາຍອັກສອນ ໝ, ມ ຕົວຢ່າງ ໝົກໝົ້ນ, ມືດມົວ

16 / y / ເຄື່ອງໝາຍອັກສອນ ຢ ຕົວຢ່າງ ຢຸດຢ່ອນ, ຢືນຢັນ

17 / l / ເຄື່ອງໝາຍອັກສອນ ຫລ,ລ ຕົວຢ່າງ ຫລວງຫລາຍ, ລວດລາຍ

18 / v / ເຄື່ອງໝາຍອັກສອນ ຫວ,ວ ຕົວຢ່າງ ໄຫວຫວັ່ນ, ວິນວຽນ

19 / h / ເຄື່ອງໝາຍອັກສອນ ຫ,ຮ ຕົວຢ່າງ ຫຸນຫວາຍ, [illegible]

20 / r / ເຄື່ອງໝາຍອັກສອນ ຣ ຕົວຢ່າງ ຝຣັ່ງ, ໂປຣແກຣມ

ສຳລັບພະຍັນະນະ "ອ" ໂດຍອີງຕາມຫລັກວິຊາສຽງແລ້ວ ແມ່ນບໍ່ອາດຈັດເຂົ້າໃນໝວດລະບົບຕົວສຽງພະຍັນຊະນະໄດ້ ເນື່ອງຈາກວ່າ ຈຸດພິເສດພະຍັນຊະນະ "ອ" ມີຈຸດພິເສດຄ້າຍກັບຈຸດພິເສດສະຫລະຫລາຍກວ່າ, ອາດຈັດເຂົ້າໃນໝວດ ເຄິ່ງສະຫລະ ແລະເຄິ່ງພະຍັນຊະນະເຊິ່ງມີເຄື່ອງໝາຍຈິດສຽງສາກົນ ຄື / ʔ /

ຕາຕະລາງເຄື່ອງໝາຍຈິດສຽງພະຍັນຊະນະລາວ

| ຈຸດຜະລິດສຽງ / ວິທີຜັນສຽງ | | | ຮີມສົບ | | ລີ້ນ | | | | ບ້ອງຄໍ |
|---|---|---|---|---|---|---|---|---|---|
| | | | ຄູ່ | ແຂ້ວເທິງ | ປາຍລີ້ນ ແຂ້ວ | ປາຍລີ້ນ ເຫືອກ | ກາງລີ້ນ | ກົກລີ້ນ | |
| ອັດ | ຜື່ວ | ບໍ່ກ້ອງ | ph | | | th | | kh | |
| ອັດ | ບໍ່ຜື່ວ | ບໍ່ກ້ອງ | p | | t | | ch | k | |
| ອັດ | ບໍ່ຜື່ວ | ກ້ອງ | b | | | d | | | |
| ອັດ | ສຽງອອກທາງດັງ | | m | | | n | ñ | ŋ | |
| ຫູ | ບໍ່ກ້ອງ | | | f | | | s | | h |
| ຫູ | ກ້ອງ | | | v | | | y | | |
| ຫູ | ຂ້າງລີ້ນ(ກ້ອງ) | | | | | l | | | |
| ສຽງສັ່ນ | | | | | | r | | | |
| ເຄິ່ງສະຫຼະ ເຄິ່ງພະຍັນຊະນະ | | | w | | | | i | | ʔ |

2. ຕົວສຽງສະຫລະ

ສະຫລະລາວສະໄໝປັດຈຸບັນລວມມີ 28 ຕົວ ໃນນີ້ໄດ້ແບ່ງອອກເປັນ ສະຫລະສຽງສັ້ນ 12 ໂຕ, ສຽງຍາວ 12 ໂຕ ແລະສະຫລະພິເສດ 4 ໂຕ. ແຕ່ເມື່ອມາສັງເກດໃນແງ່ຕົວສຽງວິທະຍາ( phonemics ) ແລ້ວ ໃນພາສາລາວເຮົາມີສຽງສະຫລະພຽງແຕ່ 24 ໂຕເຊິ່ງປະກອບເປັນຄູ່ ສັ້ນ-ຍາວ 12 ຄູ່ເທົ່ານັ້ນ.

ສ່ວນອັນທີ່ພວກເຮົາເອີ້ນວ່າ ສະຫລະພິເສດນັ້ນ ເປັນພຽງແຕ່ແມ່ນສະຫລະປະກອບກັບຕົວສະກົດ ແຕ່ຫາກມີ ເຄື່ອງໝາຍພິເສດເທົ່ານັ້ນ ເຊັ່ນ: **ໄx, ໃx (x̆ຍ); ເx̆າ (x̆ວ); xໍາ (x̆ມ)**

ຕົວສຽງສະຫລະ 12ຄູ່ ( ສັ້ນ-ຍາວ ) ໄດ້ຂຽນດ້ວຍເຄື່ອງໝາຍຈິດສຽງ ແບບສາກົນໄວ້ດັ່ງນີ້:

| | | | |
|---|---|---|---|
| /a/ /a:/ | xະ, xາ | ຕົວຢ່າງ | ສະອາດ, ຄັດຄ້ານ |
| /i/ /i:/ | xິ, xີ | ຕົວຢ່າງ | ພິຈິດ, ຂີດຂຽນ |
| /ɯ/ /ɯ:/ | xຶ, xື | ຕົວຢ່າງ | ຈຶກຈັກ, ພືດຜົນ |
| /u/ /u:/ | xຸ, xູ | ຕົວຢ່າງ | ບຸກລຸກ, ປູກຝັງ |
| /e/ /e:/ | ເxະ, ເx | ຕົວຢ່າງ | ເຕະບານ, ປິ່ນເປ |
| /ɛ/ /ɛ:/ | ແxະ, ແx | ຕົວຢ່າງ | ງົດແງະ, ແປປ່ຽນ |
| /o/ /o:/ | ໂxະ, ໂx | ຕົວຢ່າງ | ໂຕະຕັ່ງ, ໂງເງ |
| /ɔ/ /ɔ:/ | ເxາະ, xໍ | ຕົວຢ່າງ | ຂໍເກາະ, ເຄາະກໍາ |
| /ɤ/ /ɤ:/ | ເxິ, ເxີ | ຕົວຢ່າງ | ເປີເປື້ອນ, ເກີນສ່ວນ |
| /ie/ /ie:/ | ເx̆ຍ, ເxຍ | ຕົວຢ່າງ | ເຂັຍໆ, ອ່ອນເພຍ |
| /ɯɤ/ /ɯɤ:/ | ເxຶອ, ເxືອ | ຕົວຢ່າງ | ທາເປືອ, ຄັດເລືອກ |
| /uo/ /uo:/ | xົວະ, xົວ | ຕົວຢ່າງ | ຕົວະຕົ້ມ, ເມົາມົວ |

ຈຸດພິເສດຂອງສະຫຼະ ເພື່ອຈໍາແນກສະຫຼະຕົວອື່ນໆ ຫຼື ພະຍັນຊະນະມີດັ່ງນີ້: ທີ່ຕັ້ງຂອງລີ້ນ ( ແຖວໜ້າ,ແຖວກາງ ຫຼື ແຖວຫລັງ); ລະດັບອ້າຂອງປາກ ຫລື ຍັງເອີ້ນວ່າ ລະດັບຍົກຂອງລີ້ນ, ຖ້າລີ້ນຍົກຂຶ້ນສູງ ປາກຈະແຄບລົງ ແລະກົງກັນຂ້າມ; ຮູບຮ່າງຂອງສົບ ສົບມົນ ຫຼືບໍ່ມົນກໍເຮັດໃຫ້ສຽງແຕກຕ່າງກັນຫຼາຍ. ນອກຈາກສາມຈຸດນີ້ແລ້ວ ເພິ່ນຍັງສັງເກດເບິ່ງລະດັບເຄັ່ງຂອງອະໄວຍະວະຜະລິດສຽງຕື່ມອີກວ່າເຄັ່ງຫຼາຍຫຼື ເຄັ່ງໜ້ອຍ ແລະ ມີສຽງສັ້ນຫຼືສຽງຍາວ.

ເພື່ອສະດວກໃນການສັງເກດຈຸດພິເສດຂອງສະຫຼະເພິ່ນໄດ້ສັງຮວມບັນດາຈຸດຈໍາແນກຂອງສະຫຼະໄວ້ໃນຮູບຄາງໝູປີ້ນດັ່ງນີ້:


ແຖວໜ້າ
ແຖວກາງ
ແຖວຫລັງ
ປາກແຄບ
ປາກອ່າວແຄບ
ປາກອ່າວກວ້າງ
ກວ້າງ
ສົບ
ບໍ່
ມົນ
ສົບ
ມົນ


/i/ /i:/
/ɯ/ /ɯ:/
/u/ /u:/
/ie/ /ie:/
/uo/ /uo:/
/e/ /e:/
/o/ /o:/
/ɯɤ/ /ɯɤ:/
/ɛ / /ɛ:/
/ɤ/ /ɤ:/
/ɔ/ /ɔ:/
/a/ /a:/

# ບົດທີ່ 3

## ພະຍາງພາສາລາວ

### I. ຈຸດພິເສດຂອງພະຍາງ

ຕາມທຳມະດາ **ໃນທຸກພາສາ**ເວລາຄົ້ນຄວ້າ ເພິ່ນເຄີຍຕັດສຳນວນຄວາມເວົ້າອອກເປັນພະຍາງ, ເນື່ອງຈາກວ່າ ພະຍາງເປັນໜ່ວຍຜັນສຽງນ້ອຍທີ່ສຸດຂອງຄວາມເວົ້າ. **ການຄົ້ນຄວ້າພະຍາງ** ກໍໝາຍເຖິງການຄົ້ນຄວ້າການຮວມຕົວຂອງໝູ່ຕົວສຽງ (phoneme) ຢູ່ໃນສຳນວນຄວາມເວົ້າ. ພາສາລາວເຮົາເປັນພາສາຄຳໂດດ, ສະນັ້ນ **ຈຸດພິເສດຂອງພາສາລາວເຮົາ** ກໍບໍ່ຄືກັບພະຍາງໃນພາສາ ອິນດູ-ຢູຣົບ ທີ່ມີການຈຳແນກກັນຢ່າງຈະແຈ້ງ ລະຫວ່າງພະຍາງ, ຕົວຄຳ (morpheme) ແລະຄຳສັບ. ສ່ວນພາສາລາວເຮົາພັດຕ່າງ ສ່ວນຫຼວງຫຼາຍ **ພະຍາງ**, ຕົວຄຳ ແລະ ຄຳສັບອັນດຽວກັນ.

ຕົວຢ່າງ: " **ພວກເຮົາແມ່ນຄົນລາວ** " ( ມີ 5 ພະຍາງ, ໝາຍເຖິງຫົວໜ່ວຍຜັນສຽງນ້ອຍສຸດ ແລະກໍມີ 5 ຕົວຄຳ ເຊິ່ງເປັນຫົວໜ່ວຍປະກອບສ້າງສັບ).

" ໂຮງຮຽນກິນນອນ" ( ມີ 4 ພະຍາງ, 4 ຕົວຄຳ ແລະ ມີຄວາມໝາຍເທົ່າກັບສັບໜຶ່ງ.

" РуКа" ( ພາສາລັດເຊຍ: ມື ) ມີສອງຄຳ /ruk-a/ ແລະມີສອງພະຍາງ /ru-ka/

"travailler" ( ພາສາຝຣັ່ງ: ເຮັດວຽກ ) ມີສອງຕົວຄຳ /tra-vaje/ ແລະມີສາມພະຍາງ /tra-va-je/

"friends" ( ພາສາອັງກິດ: ເພື່ອນຫຼາຍຄົນ ) ມີສອງຕົວຄຳ /friend - z/ ແຕ່ມີພະຍາງດຽວ /friendz/

ຈຸດພິເສດອີກອັນນຶ່ງ ຂອງພະຍາງໃນພາສາລາວ ເວລາໃດພະຍາງກໍຕິດແໜ້ນກັບສຽງວັນນະຍຸດສະເໝີ ( ໄມ້ສູນ, ໄມ້ເອກ (x່), ໄມ້ໂທ (x້), ໄມ້ຕີ (x໊), ໄມ້ຈັດຕະວາ (x໋). ທັງນີ້ກໍເພາະວ່າ ພາສາລາວເຮົາເປັນພາສາທີ່ມີສຽງວັນນະຍຸດ ຫຼືເອີ້ນກັນວ່າ "ພາສາທີ່ມີດົນຕີ" ເຊິ່ງແຕກຕ່າງກັບພາສາຕ່າງໆ ໃນຕະກຸນ ອິນດູ-ຢູຣົບ. ພາສາລາວ ວັນນະຍຸດໄດ້ປະກອບສ່ວນອັນສຳຄັນ ເຂົ້າໃນການປະກອບສ້າງພະຍາງເພື່ອເຮັດໜ້າທີ່ຈຳແນກສຽງ, ຄວາມໝາຍຂອງພະຍາງ ແລະ ກໍເປັນສັນຍາລັກຂອງພະຍາງອີກດ້ວຍ ເຊັ່ນ: ປາ, ປ້າ, ປ໊າ, ປ່າ. . .ວັນນະຍຸດໃນພາສາລາວມີບົດບາດເທົ່າທຽມກັບຕົວສຽງ (phoneme) ນຶ່ງເຊິ່ງຕິດ ພັນ ແລະສະແດງອອກກວມເອົາພະຍາງນັ້ນທັງໝົດ.

ຈາກຈຸດພິເສດຂອງພະຍາງດັ່ງກ່າວມານີ້ ເຮັດໃຫ້ພະຍາງມີບົດບາດສຳຄັນເປັນພິເສດຕໍ່ກັບການຄົ້ນຄວ້າອັກຂະຫຼະລາວຂອງພວກເຮົາ, ພວກເຮົາຢາກກຳນົດຕົວສຽງພາສາລາວໄດ້ ກໍຈະຕ້ອງເລີ່ມຈາກການຄົ້ນຄວ້າພະຍາງ. ກົງກັນຂ້າມຖ້າທຽບໃສ່ພາສາອື່ນ ໂດຍສະເພາະພາສາໃນຕະກຸນ ອິນດູ - ຢູຣົບ ພະຍາງບໍ່ມີຄວາມສຳຄັນເທົ່າກັບຕົວຄຳ ( morpheme) ແລະ ຕົວສຽງ (phoneme).

### II. ໂຄງສ້າງຂອງພະຍາງລາວ

ພະຍາວພາສາລາວຈະຕ້ອງປະກອບດ້ວຍພະຍັນຊະນະ, ສະຫຼະ ແລະ ວັນນະຍຸດ,ລຳພັງແຕ່ພະຍັນຊະນະ, ສະຫຼະ ບໍ່ເອີ້ນວ່າ ພະຍາງໄດ້ ເຊັ່ນ: ກ, ຂ,ຄ. . . xະ, xາ, xິ. . . ບໍ່ເອີ້ນວ່າພະຍາງໄດ້, ເອີ້ນວ່າພະຍາງໄດ້ ກໍຕໍ່ເມື່ອປະກອບມີ: ກໍ, ຂໍ, ຄໍ ແລະ ອະ, ອາ, ອິ...... ພະຍາງພາສາລາວທີ່ສົມບູນທີ່ສຸດ

ແມ່ນພະຍາງທີ່ປະກອບມີ 5 ພາກສ່ວນຄື: ວັນນະຍຸດ, ຕົວແກນ, ຕົວຄວບ, ສະຫຼະ ແລະຕົວສະກົດ ເຊິ່ງສາມາດຂຽນເປັນໂຄງສ້າງໄດ້ ດັ່ງລຸ່ມນີ້:

| ວັນນະຍຸດ | | | |
|---|---|---|---|
| ໂຕແກນ | ໂຕຄວບ | ສະຫລະ | ໂຕສະກົດ |

ຕົວຢ່າງ:

| ພະຍາງຕົວຢ່າງ | ວັນນະຍຸດ | | | |
|---|---|---|---|---|
| ຄວາຍ [ Khwa:i ]$^{2}$ | / kh/ | /w/ | /a/ | /i/ |
| ດິນ [ din ]$^{2}$ | /d/ | - | /i/ | /n/ |
| ຟ້າ [ fa ]$^{3}$ | /f/ | - | /a/ | - |
| ນ້ຳ [ nam ]$^{3}$ | /n/ | - | /a/ | /m/ |
| ແດດ [ dɛ:t ]$^{5}$ | /d/ | - | /ɛ/ | /t/ |

ຈາກຕົວຢ່າງເທິງນີ້ ເຮົາສັງເກດເຫັນວ່າ ພະຍາງພາສາລາວສູງສຸດປະກອບມີ 5 ພາກສ່ວນ ແລະຕ່ຳສຸດບໍ່ຫລຸດ 3 ພາກສ່ວນ, ນອກຈາກນີ້ບໍ່ເອີ້ນວ່າພະຍາງໄດ້.

- ການຈັດປະເພດ ຫຼື ຊະນິດຂອງພະຍາງ ເພິ່ນອາດອີງໃສ່ບາງເງື່ອນໄຂດັ່ງນີ້:

+ ຖ້າຫາກອີງຕາມການສະກົດຄຳ ເພິ່ນໄດ້ແບ່ງພະຍາງພາສາລາວອອກເປັນສອງປະເພດຄື ພະຍາງເປັນ ແລະ ພະຍາງຕາຍ. ພະຍາງເປັນໄດ້ແກ່ພະຍາງ ທີ່ປະກອບດ້ວຍສະຫຼະສຽງຍາວ ຫຼື ມີຕົວສະກົດເປັນ " ງ, ນ, ມ, ຍ, ວ " ທັງໝົດ; ສ່ວນພະຍາງຕາຍ ໄດ້ແກ່ພະຍາງທີ່ປະກອບດ້ວຍສະຫຼະສຽງສັ້ນ ຫຼືຕົວສະກົດຕາຍ " ກ, ດ, ບ " ທັງໝົດ.

+ ຖ້າອີງຕາມໂຄງປະກອບສ້າງຂອງພະຍາງ ອາດແບ່ງພະຍາງອອກເປັນສອງປະເພດຄື ພະຍາງໄຂ ແລະ ພະຍາງອັດ. ພະຍາງໄຂໄດ້ແກ່ພະຍາງ ທີ່ບໍ່ມີຕົວສະກົດທັງໝົດ, ສ່ວນພະຍາງອັດໄດ້ແກ່ພະຍາງທີ່ມີຕົວສະກົດທັງໝົດ.

ໂດຍສົມທົບສອງວິທີຈັດແບ່ງພະຍາງດັ່ງກ່າວມາເທິງນີ້ ເຮົາອາດສ້າງເປັນແຜ່ນວາດດັ່ງນີ້:

| ຕົວຢ່າງ | ວັນນະຍຸດ | | | | | | ປະເພດ ພະຍາງ |
|---|---|---|---|---|---|---|---|
| | ຕົວ ແກນ | ຕົວ ຄວບ | ສະຫລະ | | ຕົວສະກົດ | | |
| | | | ສັ້ນ | ຍາວ | ຕາຍ | ເປັນ | |
| ຄວາຍ [khwa:i]$^{2}$ | + | + | - | + | - | + | ອັດ - ເປັນ |
| ກວາດ [khwa:t]$^{5}$ | + | + | - | + | + | - | ອັດ - ຕາຍ |
| ກິນ [kin]$^{2}$ | + | - | + | - | - | + | ອັດ - ເປັນ |
| ປາ [pa:]$^{2}$ | + | - | - | + | - | + | ໄຂ - ເປັນ |
| ນອນ [nɔ:n]$^{2}$ | + | - | - | + | - | + | ອັດ - ເປັນ |

| | | | | | | | | |
|---|---|---|---|---|---|---|---|---|
| ສະ [sa]$^5$ | + | - | + | - | + | - | ໄຂ - ຕາຍ |
| ສາ [sa:]$^1$ | + | - | - | + | - | + | ໄຂ - ເປັນ |
| ສາດ [sat]$^5$ | + | - | - | + | + | - | ອັດ - ຕາຍ |
| ຄິດ [khit]$^4$ | + | - | + | - | + | - | ອັດ - ຕາຍ |
| ໄກວ [kwai]$^2$ | + | + | + | - | - | + | ອັດ - ເປັນ |
| ໃກ້ [kai]$^3$ | + | - | + | - | - | + | ອັດ - ເປັນ |
| ອາດ [a:t]$^5$ | + | - | - | + | + | - | ອັດ - ຕາຍ |

ການຈຳແນກປະເພດຂອງພະຍາງ ມັນຊ່ວຍໃຫ້ພວກເຮົາສາມາດກຳນົດລະບົບຕົວສຽງຂອງພາສາລາວ, ກຳນົດຄວາມໝາຍຄວາມສຳຄັນຂອງແຕ່ລະພາກສ່ວນທີ່ປະກອບເປັນພະຍາງໄດ້ເປັນຢ່າງດີ.

1. ໂຕແກນ ( ພະຍັນຊະນະແກນ ):

ໂຕແກນຂອງພະຍາງເວລາໃດ ກໍແມ່ນພະຍັນຊະນະ ສະຫຼະບໍ່ສາມາດເປັນໂຕແກນໃຫ້ແກ່ພະຍາງໄດ້[12]. ພະຍັນຊະນະລາວປັດຈຸບັນລວມມີ 33 ໂຕ ( ນັບທັງພະຍັນຊະນະພິເສດ ຣ) ສາມາດເປັນໂຕແກນໃຫ້ແກ່ພະຍາງໄດ້ໝົດທຸກໂຕ. ການວິໄຈຕົວສຽງພະຍັນຊະນະ ເພິ່ນເຄີຍອີງໃສ່ 2 ດ້ານຄື ວິທີຜັນສຽງ ແລະ ຈຸດຜະລິດສຽງ. ໂດຍອີງຕາມວິທີຜັນສຽງ ເພິ່ນໄດ້ແບ່ງໂຕສຽງພະຍັນຊະນະອອກເປັນ 4 ໝວດຄື: ໝວດອັດ, ໝວດຖູ, ໝວດສັ່ນ, ໝວດເຄິ່ງສະຫຼະ ແລະພະຍັນຊະນະ.

ກ. ໝວດພະຍັນຊະນະອັດ: ໃນໝວດພະຍັນຊະນະທີ່ມີສຽງອັດນີ້ ເພິ່ນໄດ້ແຍກອອກເປັນ 3 ຈຸນ້ອຍອີກຄື: ຈຸອັດ-ຜິວ, ອັດ - ບໍ່ຜິວ ແລະ ຈຸອັດ-ສຽງອອກທາງດັງ:

+ ຈຸອັດ-ຜິວ (ສຽງບໍ່ກ້ອງ) ລວມມີ: **/ ph /** (ຜ,ພ), **/ th /** (ຖ, ທ) , **/ kh /** (ຂ,ຄ )

+ ຈຸອັດ-ບໍ່ຜິວ:

- ອັດ-ບໍ່ຜິວ(ສຽງບໍ່ກ້ອງ) ລວມມີ: **/p/** (ປ) , **/ t /**(ຕ) , **/ch/** (ຈ) ,**/ k/**(ກ)
- ອັດ-ບໍ່ຜິວ (ສຽງກ້ອງ) ລວມມີ: **/ b/**(ບ) , **/ d/** (ດ)

+ ຈຸອັດ-ສຽງທາງດັງ (ສຽງກ້ອງ) ລວມມີ: **/ m /** (ໝ,ມ) , **/ n /** (ໜ,ນ), **/ ñ/** (ຫຍ,ຍ), **/ ŋ /** (ຫງ,ງ)

ຂ. ໝວດພະຍັນຊະນະສຽງຖູ: ໃນໝວດນີ້ ເພິ່ນໄດ້ແບ່ງອອກເປັນ 3 ຈຸນ້ອຍຄື: ຖູບໍ່ມີສຽງກ້ອງ, ຖູມີສຽງກ້ອງ ແລະຖູຂ້າງລີ້ນມີສຽງກ້ອງ:

- ຖູບໍ່ມີສຽງກ້ອງ ລວມມີ: **/ f /** ( ຝ, ຟ), **/ s /** (ສ,ຊ) , **/ h /** (ຫ,ຮ)
- ຖູມີສຽງກ້ອງ ລວມມີ: **/ v /** ( ຫວ, ວ ), **/ y /** (ຢ)

---

12 . ນີ້ແມ່ນອີງຕາມທັດສະນະຂອງໄວຍາກອນມູນເຊື້ອ, ແຕ່ອີງຕາມວິຊາອັກຂະຫະວິທະຍາແລ້ວ ໂຕແກນຂອງພະຍາງຄື ສະຫຼະ ເພາະສະຫຼະເປັນຈອມຂອງພະຍາງແລະ ສຽງຂອງສະຫຼະເປັນໂຕຫຼັກທີ່ເຮັດໃຫ້ສຽງຂອງພະຍາງປ່ຽນໄປ.

ຕາຕະລາງການວິໄຈພະຍັນຊະນະລາວ

| ຈຸດຜະລິດສຽງ / ວິທີຜັນສຽງ | | | ຮີມສົບ | | ລີ້ນ | | | | ບ້ອງຄໍ |
|---|---|---|---|---|---|---|---|---|---|
| | | | ຄູ່ | ແຂ້ວເທິງ | ປາຍລີ້ນ | | ກາງລີ້ນ | ກົກລີ້ນ | |
| | | | | | ແຂ້ວ | ເຫືອກ | | | |
| ອັດ | ຜົ່ວ | ບໍ່ກ້ອງ | ph | | | th | | kh | |
| | ບໍ່ຜົ່ວ | ບໍ່ກ້ອງ | p | | t | | ch | k | |
| | | ກ້ອງ | b | | | d | | | |
| | ສຽງອອກທາງດັງ | | m | | | n | ñ | ŋ | |
| ຖູ | ບໍ່ກ້ອງ | | | f | | | s | | h |
| | ກ້ອງ | | | v | | | y | | |
| | ຂ້າງລີ້ນ(ກ້ອງ) | | | | | l | | | |
| ສຽງສັ່ນ | | | | | | r | | | |
| ເຄິ່ງສະຫຼະ ເຄິ່ງພະຍັນຊະນະ | | | w | | | | i | | ? |

2. ໂຕຄວບ:

ໂຕຄວບໃນພາສາລາວມີພຽງໂຕດຽວຄື " ວ " / w / ເຊິ່ງເປັນໂຕສຽງ ທີ່ປາກົດອອກຢູ່ລະຫວ່າງ ກາງໂຕແກນ ແລະ ສະຫຼະ. ມັນມີບົດບາດເອົາສຽງຂອງຕົນໄປຄວບກັບໂຕແກນ ເພື່ອມີສຽງ "ວ" /w/ ປົນຢູ່ນຳ. ໂຕຄວບ ບໍ່ມີພາລະບົດບາດເປັນຈອມຂອງພະຍາງໄດ້, ມັນພຽງແຕ່ເຮັດໜ້າທີ່ປັບປ່ຽນສີສັນ ຂອງພະຍາງເທົ່ານັ້ນ. ສະນັ້ນ ໂຕຄວບບໍ່ມີລັກສະນະພະຍາງ.

ໂຕ " ວ " ເຮັດ 3 ໜ້າທີ່ຄື: ໂຕແກນຂອງພະຍາງ, ໂຕຄວບ ແລະໂຕສະກົດ . ຍ້ອນແນວນັ້ນ ເພິ່ນ ຈຶ່ງເອີ້ນວ່າ ເຄິ່ງສະຫຼະ ແລະເຄິ່ງພະຍັນຊະນະ. ເວລາເຮັດໜ້າທີ່ເປັນໂຕແກນ ເຄື່ອງໝາຍຈິດສຽງ ສາກົນ ແມ່ນ / v/ . ເວລາເປັນໂຕຄວບ ເຄື່ອງໝາຍຈິດສຽງສາກົນແມ່ນ / w / . ເວລາເຮັດໜ້າທີ່ເປັນ ໂຕສະກົດ ເຄື່ອງໝາຍສາກົນແມ່ນ/ u / ຫຼື / o /.

ຕົວຢ່າງ:
- ເຮັດໜ້າທີ່ເປັນໂຕແກນ : ເວົ້າ, ໄຫວ້, ເຄືອຫວາຍ . . .
- ເຮັດໜ້າທີ່ເປັນໂຕຄວບ : ຄວາຍ, ແຂວງ, ຫຸນຫວາຍ. . .
- ເຮັດໜ້າທີ່ເປັນໂຕສະກົດ : ຂາວ, ຫິວ, ແມວ. . .

ໂຕຄວບ "ວ" ສາມາດຄວບກັບໂຕແກນໄດ້ເກືອບທຸກໂຕ. ແຕ່ປະລິມານຄຳສັບທີ່ໃຊ້ "ວ" ຄວບ ແລະໄດ້ຄວາມໝາຍນັ້ນມີໜ້ອຍ (ເບິ່ງຕົວຢ່າງໃນບົດທີ່1). ເທົ່າທີ່ສັງເກດແລ້ວເຫັນວ່າ ໂຕຄວບ "ວ" ຈະປາກົດແຕ່ຢູ່ທາງໜ້າຂອງສະຫຼະ " xະ - xາ ແລະ ແxະ - ແx " ເຊິ່ງເປັນສະຫຼະສົບອ້າວກວ້າງ, ກວ້າງ ແລະ ສົບບໍ່ມົນເທົ່ານັ້ນ; ສ່ວນສະຫຼະໝວດອື່ນ ບໍ່ປາກົດມີໃນພາສາລາວ.

ຕົວຢ່າງ:

- ຫູຂ້າງລີ້ນ ມີສຽງກ້ອງມີ:  /l/ (ຫລ, ລ)

ຄ. ໝວດສຽງສັ່ນ :  ໃນພາສາລາວມີຕົວສຽງ /r/ (ຣ) ໂຕດຽວ ເຊິ່ງພວກເຮົາຖືວ່າ ໂຕສຽງນີ້ ໃນພາສາລາວເດີມບໍ່ມີ ພວກເຮົານຳເຂົ້າມາໃຊ້ ໃນຖານະເປັນພະຍັນຊະນະພິເສດສຳລັບບັນທຶກປະມວນຄຳ ສັບທີ່ມາຈາກຕ່າງປະເທດ(ໂດຍບໍ່ນັບເຄົ້າສັບທີ່ມາຈາກພາສາບາລີ-ສັນສະກິດ) ທີ່ເຫັນວ່າໃຊ້ "ຣ" ຫຼື "ລ"ແທນຈະບໍ່ຮັບປະກັນຄວາມຊັດເຈນທາງດ້ານຄວາມໝາຍ.

ງ. ໝວດເຄິ່ງສະຫຼະ ແລະ ເຄິ່ງພະຍັນຊະນະ ໝາຍເຖິງໂຕອັກສອນທີ່ເຮັດໜ້າທີ່ທັງສອງຢ່າງ, ບາງເທື່ອເຮັດໜ້າທີ່ເປັນພະຍັນຊະນະ ແຕ່ບາງເທື່ອເຮັດໜ້າທີ່ເປັນສະຫຼະ. ໝວດນີ້ໃນພາສາລາວ ເຮົາມີ 3 ຕົວຄື:  " ຍ, ວ, ອ "

- " ຍ"  ເວລາເຮັດໜ້າເປັນພະຍັນຊະນະ ເຄື່ອງໝາຍຈິດສຽງສາກົນແມ່ນ / ñ/  ເວລາເຮັດໜ້າທີ່ ເປັນສະຫຼະ ແລະ ໂຕສະກົດແມ່ນ / i / .
- " ວ" ເວລາເຮັດໜ້າທີ່ເປັນພະຍັນຊະນະເຄື່ອງໝາຍຈິດສຽງສາກົນແມ່ນ / v/ ເວລາເຮັດໜ້າທີ່ເປັນສະຫຼະແມ່ນ / u,o /,  ເວລາເປັນໂຕຄວບແມ່ນ / w /
- "ອ"  ເວລາເຮັດໜ້າທີ່ເປັນພະຍັນຊະນະ ເຄື່ອງໝາຍຈິດສຽງສາກົນ ບໍ່ຈຳເປັນໃຊ້ເຄື່ອງໝາຍຫຍັງ, ເວລາເຮັດໜ້າທີ່ສະຫຼະແມ່ນ /ɔ/.

ໂດຍອີງຕາມຈຸດຜະລິດສຽງ  ເພິ່ນແບ່ງພະຍັນຊະນະອອກເປັນ 3 ໝວດຄື  ໝວດຮີມສົບ,  ລີ້ນ ແລະ ບ້ອງຄໍ.

ກ. ໝວດພະຍັນຊະນະຮີມສົບ:

- ຮີມສົບຄູ່ມີ:   / ph / (ຜ, ພ ), / p / ( ປ ), / b / (ບ ), / m / ( ໝ, ມ )
- ຮີມສົບ - ແຂ້ວເທິງມີ:  / f / ( ຝ, ຟ ), / v / ( ຫວ, ວ )

ຂ. ໝວດພະຍັນຊະນະລີ້ນ:

- ປາຍລີ້ນ - ແຂ້ວເທິງ ມີ:  / t / (ຕ )
- ປາຍລີ້ນເທືອກ ມີ: / th / (ຖ, ທ), / d /( ດ ), / n / ( ໜ, ນ ),/ l / (ຫລ, ລ), / r / ( ຣ )
- ກາງລີ້ນ ມີ:  /ch/ ( ຈ ), / ñ/ ( ຫຍ, ຍ ), /s/ ( ສ, ຊ), /y/ ( ຢ )
- ກົກລີ້ນ ມີ:  /kh/ ( ຂ, ຄ ), /k/ ( ກ ), / ŋ / ( ຫງ, ງ )

ຄ. ໝວດບ້ອງຄໍ ມີ:   /h/ ( ຫ,ຮ ) ,  /ʔ/ ອ

24 / VII
ຫ້າມຈຳໜ່າຍ

xະ(x̆x) [a] ໃນ ໄກວ [kwai] , . . .

xາ (xາx) [a] ໃນ ກວ່າ [kwa], ຂວາງ [khwa:ŋ],ຖວາຍ [thaw:i] ...

ແx (ແxx) /ɛ/ ໃນ ແຄວັນ /khwɛn/, ແຂວງ /khwɛ:ŋ / ...

3. ສະຫຼະ

ສະຫຼະເປັນສຽງຫລັກໃນພະຍາງ, ບໍ່ສະເພາະແຕ່ພະຍາງເທົ່ານັ້ນ, ນັບຕັ້ງແຕ່ພະຍັນຊະນະຈະອອກ ສຽງໄດ້ ກໍຕ້ອງສົມມຸດເອົາສະຫຼະສຽງໃດນຶ່ງ ມາປະສົມຈຶ່ງອອກສຽງໄດ້, ດັ່ງພາສາລາວໄດ້ສົມມຸດເອົາສະ ຫຼະ ( xໍ ) ມາອອກສຽງພະຍັນຊະນະທຸກຕົວເຊັ່ນ: ກ , ຂ , ຄ , ງ , ຈ. . . ໃນພະຍາງສະຫລະມີບົດບາດເປັນຈອມ ຂອງພະຍາງ.ສະຫລະລາວທີ່ໃຊ້ໃນປັດຈຸບັນທັງໝົດມີ 28 ຕົວ, ດັ່ງມີເຄື່ອງໝາຍອັກສອນຈັດລຽງລຳດັບໄວ້ດັ່ງນີ້:

xະ xາ xິ xີ xຶ xື xຸ xູ ເxະ ເx ແxະ ແx ໂxະ ໂx ເxາະ xໍ ເxິ ເxີ

ເxັຍ ເxຍ ເxືອ ເxືອ xົວະ xົວ ໄx ໃx ເxົາ xຳ

ຕາມໄວຍາກອນມູນເຊື້ອ ໃນຈຳນວນສະຫຼະ 28 ຕົວນີ້ ໄດ້ແບ່ງອອກເປັນສະຫຼະເຄົ້າ 14 ຕົວ ແລະ ສະຫຼະປະສົມ 14 ຕົວ.

+ ສະຫຼະເຄົ້າ : xະ, xາ, xິ, xີ, xຶ, xື, xຸ, xູ, ເx, ແx, ໂx, xໍ, ໄx ,ໃx

+ ສະຫຼະປະສົມ : ເxະ, ແxະ, ໂxະ, ເxາະ, ເxິ, ເxີ, ເxັຍ, ເxຍ,ເxືອ, ເxືອ, xົວະ, xົວ, ເxົາ, xຳ

ການທີ່ໄວຍາກອນມູນເຊື້ອໄດ້ຈັດແບ່ງສະຫຼະອອກເປັນສອງປະເພດຄືດັ່ງກ່າວມານີ້ ຕົ້ນຕໍແມ່ນອີງໃສ່ແຕ່ດ້ານຮູບການເປັນຫຼັກເທົ່ານັ້ນ[13], ຖ້າເຮົາອີງໃສ່ຫຼັກອັກຂະຫຼະວິທີມາເບິ່ງເບິ່ງແລ້ວຈະເຫັນວ່າລະບົບສຽງສະຫຼະລາວປັດຈຸບັນ ໂດຍອີງໃສ່ສຽງເປັນບ່ອນອີງໃນການຈັດແບ່ງຈະເຫັນວ່າ ສະຫຼະປະສົມມີ ພຽງແຕ່ 3 ຄູ່ (ສັ້ນ-ຍາວ)ເທົ່ານັ້ນ. ນອກນັ້ນ ເປັນສະຫຼະເຄົ້າທັງນັ້ນ, ເຖິງວ່າຮູບຂຽນຂອງມັນຈະມີລັກສະນະປະສົມກໍຕາມ ແຕ່ສຽງຂອງມັນມີພຽງແຕ່ສຽງດຽວເທົ່ານັ້ນເຊັ່ນ:

| + ສະຫຼະເຄົ້າ: | | + ສະຫຼະປະສົມ: | |
|---|---|---|---|
| xະ xາ | /a/ /a:/ | ເxັຍ ເxຍ | /ie/ /ie:/ |
| xິ xີ | /i/ /i:/ | ເxືອ ເxືອ | /ɯɤ/ /ɯɤ:/ |
| xຶ xື | /ɯ/ /ɯ:/ | xົວະ xົວ | /uo/ /uo:/ |
| xຸ xູ | /u/ /u:/ | | |

13 ການທີ່ໄວຍາກອນມູນເຊື້ອຈັດ ສະຫຼະ " ແx , ໄx , ໃx " ເຂົ້າໃນໝວດສະຫຼະເຄົ້ານັ້ນ, ທາກອີງຕາມຮູບການແມ່ນບໍ່ເໝາະສົມ, ຄວນຈະຈັດ "ແx" ເຂົ້າໝວດປະສົມ ແລະ " ໄx, ໃx" ເປັນສະຫຼະພິເສດ.

ເxະ ເx /e/ /e:/

ແxະ ແx /ɛ/ /ɛ:/

ໂxະ ໂx /o/ /o:/

ເxາະ xໍ /ɔ/ /ɔ:/

ເxິ ເxີ /ɤ/ /ɤ:/

ສະຫຼະປະສົມ: ເxຍ /ie:/ , ົxວ/uo:/, ເxືອ /ɯɤ:/ (ສະຫຼະເຫຼົ່ານີ້ ເວລາອ່ານຈະອອກສຽງສະຫຼະທັງສອງໂຕພ້ອມກັນ ແລະສະເໝີກັນ).

ເພື່ອສະດວກໃຫ້ແກ່ການວິໄຈສະຫລະ ເພິ່ນໄດ້ແຈກຢາຍສະຫລະໄວ້ຕາມແຜນວາດລຸ່ມນີ້:




ສຳລັບ ໄx, ໃx, ເxົາ, xຳ ບໍ່ຖືວ່າເປັນສະຫຼະໄດ້ ເພາະມັນນອນຢູ່ໃນກຳລະນີ ສະຫຼະປະກອບກັບໂຕສະກົດແລ້ວ. ດ້ວຍເຫດນີ້ ຖ້າພະຍາງໃດໃຊ້ສະຫຼະເຫຼົ່ານີ້ແລ້ວ ແມ່ນບໍ່ສາມາດໃສ່ໂຕສະກົດໄດ້ອີກ. ສະນັ້ນ ເພິ່ນຈຶ່ງເອີ້ນວ່າ ສະຫຼະປະກອບກັບໂຕສະກົດແລ້ວ.

## 4. ໂຕສະກົດ:

ຫາກພວກເຮົາ ເອົາພຽງແຕ່ສະຫຼະປະສົມກັບພະຍັນຊະນະເປັນອັກສອນແກນເທົ່ານັ້ນ ແມ່ນບໍ່ພຽງພໍກັບຄວາມຕ້ອງການ ທີ່ຈະບັນທຶກປະມວນສັບໃນພາສາລາວຂອງພວກເຮົາໄດ້. ສະນັ້ນ ຈະຕ້ອງໃຊ້ໂຕສະກົດອີກຈຳນວນນຶ່ງ ເພື່ອໃຫ້ອັກຂະຫຼະລາວສາມາດ ບັນທຶກທຸກໆຄຳສັບໃນພາສາລາວໄດ້. ໂຕສະກົດໃນພາສາລາວປັດຈຸບັນໂດຍອີງຕາມຫຼັກການ ການຂຽນຕາມສຽງມີທັງໝົດ 8 ໂຕຄື: **ກ, ດ, ບ, ງ, ນ,ມ, ຍ, ວ.**

ໂດຍອີງຕາມພາລະກຳຂອງໂຕສະກົດໃນພະຍາງເພິ່ນໄດ້ແບ່ງໂຕສະກົດອອກເປັນ 2 ໝວດຄື: ໂຕສະກົດເປັນ ແລະ ໂຕສະກົດຕາຍ.

+ ໂຕສະກົດເປັນ ໝາຍເຖິງຕົວສະກົດ ທີ່ສາມາດຜັນສຽງໄປຕາມເຄື່ອງໝາຍວັນນະຍຸດ

( x̀, x̆,x̃, ẋ ) ເກືອບໄດ້ທຸກກໍລະນີ [14] , ໂຕສະກົດເຫຼົ່ານີ້ໄດ້ແກ່: ງ, ນ, ມ, ຍ, ວ. ສຳລັບ " ຍ, ວ" ນອກຈາກຈະເຮັດໜ້າທີ່ເປັນໂຕສະກົດ ແລະໂຕແກນແລ້ວ ມັນຍັງເຮັດໜ້າທີ່ເປັນສະຫຼະນຳອີກ ເຊັ່ນ ໃນກໍລະນີປະສົມກັບສະຫຼະຕົວອື່ນ ຄື : ເກີຍ - ເຂຍ, ຫົວະ-ຫິວ ເປັນຕົ້ນ. **ດັ່ງນັ້ນ** ເພິ່ນຈຶ່ງເອີ້ນພະຍັນຊະນະສອງໂຕນີ້ເປັນເຄິ່ງພະຍັນຊະນະແລະເຄິ່ງສະຫຼະ.

**+ ໂຕສະກົດຕາຍ** ໝາຍເຖິງໂຕສະກົດທີ່ເຮັດໜ້າທີ່ເຮັດໃຫ້ພະຍາງມີສຽງອັດ ໂດຍບໍ່ສາມາດຜັນໄປຕາມສຽງຂອງວັນນະຍຸດໄດ້ທຸກກໍລະນີ, ໂຕສະກົດເຫຼົ່ານີ້ໄດ້ແກ່( ກ, ດ, ບ ), ຫາກພະຍາງໃດມີໂຕສະກົດເຫຼົ່ານີ້ ແມ່ນບໍ່ສາມາດໃຊ້ເຄື່ອງໝາຍວັນນະຍຸດໄດ້ **ຍົກເວັ້ນ**ກໍລະນີ ພະຍາງຕາຍອັກສອນກາງ, ແຕ່ກໍໃຊ້ໄດ້ແຕ່ໄມ້ຕີ ( x̃ ) ເທົ່ານັ້ນ[15] ເຊັ່ນ: ກົ໊ບ, ກົ໊ກ, ກ໊າດ, ກ໊ອດ, ກ໊າບ .... ເຊິ່ງມີສຽງເທົ່າກັບສຽງຂອງອັກສອນຕ່ຳມີໄມ້ເອກ (x̀) ຂອງສຽງໄທພວນຊຽງຂວາງ.

ໃນປັດຈຸບັນລາວເຮົາໄດ້ມີການພົວພັນກັບນາໆຊາດຫຼາຍຂຶ້ນ; ຄວາມຈຳເປັນໃນການກູ້ຢືມຄຳສັບຕ່າງປະເທດເຂົ້າມາໃນພາສາລາວ ກໍນັບມື້ນັບຫຼາຍຂຶ້ນເຊັ່ນດຽວກັນ. ສະນັ້ນ, ມັນຮຽກຮ້ອງໃຫ້ການບັນທຶກຄຳສັບ ທີ່ຢືມມານັ້ນມີຄວາມໝາຍຊັດເຈນຍິ່ງຂຶ້ນ, ຍ້ອນແນວນັ້ນຈຶ່ງເກີດມີຄວາມເປັນໃນການໃຊ້ໂຕສະກົດກາງຄຳ ແລະອັກສອນຈຽງບາງຕົວ ( ຄຳສັບທີ່ເວົ້າມານີ້ບໍ່ໄດ້ໝາຍເຖິງຄຳສັບທີ່ໄດ້ເຄົ້າມາຈາກພາສາປາລີ- ສັນສະກິດເຊິ່ງເປັນພາສາຕາຍແລ້ວ ແລະກໍຖືວ່າເປັນພາສາລາວແລ້ວ ) , ຄຳສັບທີ່ເວົ້າມານີ້ໝາຍເຖິງ ປະເພດຄຳນາມສະເພາະທີ່ມີລັກສະນະສາກົນ ເຊັ່ນ: ສຕາດເຕີ (starter) , ວິສກີ (Wisky) , ອິສຕຣາລີ (Australia),ອັຟການິສຖານ(Afgrhanistan) ເຫຼົ່ານີ້ເປັນຕົ້ນ.

ສຳລັບໂຕສະກົດພິເສດ ເຊັ່ນ ໄວຣັສ ( virus ), ແຊລ(sell), ເມຕາລ(Metal) ເຫຼົ່ານີ້ເປັນຕົ້ນ, ບໍ່ຈຳເປັນໃຊ້ກໍໄດ້ຂຽນວ່າ "ໄວຣັດ, ແຊນ, ເມຕານ " ຄົນລາວກໍຟັງອອກແລ້ວ. ຫາກຈະນຳໃຊ້ໂຕສະກົດພິເສດ ດັ່ງໄວຍາກອນມູນເຊື້ອກຳນົດໄວ້ນັ້ນ ຈະເຮັດໃຫ້ການຂຽນພາສາລາວເຮົາມີຄວາມສັບສົນ ແລະຂາດຄວາມເປັນເອກະພາບໃນຫຼັກການຂຽນຫວາຍ.

## 5. ສຽງວັນນະຍຸດ:

ສຽງວັນນະຍຸດ ໝາຍເຖິງຄວາມອາດສາມາດໃນການຜັນສຽງ ຂຶ້ນ, ລົງ, ສູງ, ຕ່ຳ ຂອງພາສາໃດນຶ່ງ. ພາສາລາວເຮົານອນຢູ່ໃນປະເພດພາສາທີ່ມີສຽງວັນນະຍຸດ. ວັນນະຍຸດແມ່ນພາກສ່ວນນຶ່ງທີ່ມີຄວາມສຳຄັນທີ່ສຸດຂອງການປະກອບສ້າງຂອງພະຍາງ. ໃນພາສາລາວວັນນະຍຸດ ເຮັດໜ້າທີ່ຈຳແນກຄວາມໝາຍ ຂອງຄຳສັບ ຫຼືພະຍາງ ແລະ ກໍທັງເປັນສັນຍລັກຂອງພະຍາງ.ສຽງວັນນະຍຸດມີພາລະກຳເທົ່າກັບຕົວສຽງນຶ່ງໆ (phoneme) ເຊິ່ງເວລາໃດ ກໍຕິດພັນກັບພະຍາງສະເໝີ ແລະບໍ່ສາມາດຕັດແຍກອອກຈາກ

---

[14] ກໍລະນີພະຍາງເປັນ (ໃຊ້ໂຕສະກົດເປັນ ແລະ ປະກອບກັບສະຫຼະສຽງຍາວ) ສາມາດໃຊ້ເຄື່ອງໝາຍ ວັນນະຍຸດໄດ້ທຸກຮູບມີແຕ່ໝວດອັກສອນກາງ 8 ໂຕເທົ່ານັ້ນ, ສ່ວນໝວດອັກສອນ ສູງ ແລະຕ່ຳ ໃຊ້ໄດ້ ແຕ່ໄມ້ ເອກ (x̀) ແລະ ໄມ້ໂທ(x̆) ເທົ່ານັ້ນ.

[15] ໃນໄວຍາກອນມູນເຊື້ອ, ພະຍາງຕາຍອັກສອນກາງ ທີ່ປະກອບກັບສະຫລະສຽງຍາວ ສາມາດໃຊ້ໄມ້ ໂທ (x̆) ໄດ້ ເຊັ່ນ :ກ້າບໆ, ກ້າກໆ, ກ້າດ ໆ . . .

ພະຍາງໄດ້.

ພາສາລາວມີເຄື່ອງໝາຍວັນນະຍຸດ 4 ຮູບຄື ໄມ້ເອກ (x̀), ໄມ້ໂທ (x̂), ໄມ້ຕີ (x̃) ແລະ ໄມ້ຈັດຕະວາ (ẋ). ແຕ່ປະລິມານ ຫລື ຈຳນວນສຽງວັນນະຍຸດມີເທົ່າໃດສຽງນັ້ນ ຍັງມີຫຼາຍທັດສະນະທີ່ບໍ່ຍັງເອກະພາບກັນເທື່ອ.

ໂດຍອີງຕາມປຶ້ມ " ໄວຍາກອນລາວ " ຂອງທ່ານ ພູມີ ວົງວິຈິດ (ພິມປີ 1967) ໄດ້ຂຽນໄວ້ວ່າ ພາສາລາວເຮົາມີ 6 ສຽງຄື:

1. ສຽງສູງ ໄດ້ແກ່ພະຍາງທີ່ມີອັກສອນສູງເປັນໂຕແກນ ບໍ່ໃສ່ໄມ້ຫຍັງເຊັ່ນ: ສາ, ຂານ, ຂອງ. . .
2. ສຽງສູງເອກ ໄດ້ແກ່ພະຍາງທີ່ມີອັກສອນສູງ - ກາງເປັນໂຕແກນໃສ່ໄມ້ເອກ ເຊັ່ນ: ສ່າ, ກ່າ, ໄຂ່, ໄກ່ . . .
3. ສຽງສູງໂທ ໄດ້ແກ່ພະຍາງອັກສອນສູງເປັນໂຕແກນມີໄມ້ໂທ ເຊັ່ນ: ສ້າ, ສ້າງ, ໝ້ຽງ. . .
4. ສຽງຕ່ຳ ໄດ້ແກ່ພະຍາງອັກສອນຕ່ຳ-ກາງເປັນຕົວແກນບໍ່ມີໄມ້ຫຍັງ ເຊັ່ນ: ນາ, ບານ, ການ, ບາຍ . . .
5. ສຽງຕ່ຳເອກ ໄດ້ແກ່ພະຍາງອັກສອນຕ່ຳເປັນໂຕແກນ ມີໄມ້ເອກ ເຊັ່ນ: ຄ່າ, ເລື່ອງ, ຊ່ອນ, ຄ່ອງ ...
6. ສຽງຕ່ຳໂທ ໄດ້ແກ່ພະຍາງອັກສອນຕ່ຳ-ກາງມີໄມ້ໂທເຊັ່ນ: ຊ້າ, ກ້າ, ຊ້າງ,ປ້ອງ, . . .

ຢູ່ໃນປຶ້ມ "ໄວຍາກອນລາວ" ສະບັບລາຊະບັນດິດສະພາລາວ, ຣາຊະອານາຈັກລາວ (1972) ພາກອັກຂະຫຼະວິທີ ເວົ້າວ່າ ພາສາລາວ ມີ 7 ສຽງຄື ພະຍາງຕາຍມີສອງສຽງ ແລະ ພະຍາງເປັນມີ 5 ສຽງ.

| ຕົວຢ່າງ: | ພະຍາງຕາຍ | | ພະຍາງເປັນ | | | | |
|---|---|---|---|---|---|---|---|
| | ເບາະ | ເບົາະ | ບໍ | ບໍ່ | ບໍ້ | ບ໊ | ບ໋ |
| | ເສາະ | ເຊາະ | ສໍ | ສໍ່ | ສໍ້ | | |
| | ຊໍ | ຊໍ່ | ຊໍ້ | | | | |

ນອກນີ້ ຍັງມີຫຼາຍທັດສະນະ ທີ່ເວົ້າເຖິງປະລິມານສຽງຂອງວັນນະຍຸດໃນພາສາລາວ ໂດຍສະເພາະແມ່ນສຳນຽງວຽງຈັນ ເຊັ່ນ: ທັດສະນະຂອງ ດຣ.ຟ້າມ-ດຶກ-ເຢືອງ (Pham Duc Duong - ຄົນຫວຽດນາມ) ເວົ້າວ່າ ສຽງວຽງຈັນມີ 5 ສຽງ; ທັດສະນະຂອງທ່ານ ອາຍ ເລນ ແຄ (Allen D. Kerr - ຄົນອາເມລິກາ) ຢູ່ໃນ " Lao - EnglishDictionary" ວ່າ ສຽງວຽງຈັນມີ 6 ສຽງ.; ທັດສະນະຂອງທ່ານ ຣຸດ-ແຊນ-ຄຸດ (Russell Marcus - ຄົນອາເມລິກາ) ກໍເວົ້າວ່າມີ 6ສຽງ ຄືກັນ; ທັດສະນະຂອງທ່ານ ເຈມ-ຊຳ-ເບີ-ເລນ (James R. Chamberlain - ຄົນອາເມລິກາ ) ເວົ້າວ່າມີ 7 ສຽງ; ຢູ່ໃນສາລະນຸກົມພາສາ ອີສານ-ໄທ-ອັງກິດ ເວົ້າວ່າ ສຽງວຽງຈັນກໍມີ 7 ສຽງຄືກັນ. ຍັງມີຫຼາຍທັດສະນະອີກເຊິ່ງບໍ່ສາມາດນຳມາອ້າງອີງໄດ້ໝົດ. ດັ່ງນັ້ນ ເພື່ອຄວາມເປັນເອກະພາບ ແລະເປັນແນວທາງໃນການຄົ້ນຄວ້າໃນຄັ້ງຕໍ່ໄປ, ຄະນະອາຈານໃນໜ່ວຍງານພາສາສາດ, ພະແນກວັນນະຄະດີ-ພາສາສາດ ອະດີດ ມ.ສ.ຄ ວຽງຈັນ ຈຶ່ງໄດ້ຈັດກອງປະຊຸມສຳມະນາ ໂດຍພາຍໃຕ້ຫົວຂໍ້ວ່າ " ສຽງວັນນະຍຸດ ທ້ອງຖິ່ນວຽງຈັນ " ຂຶ້ນໃນວັນທີ 31/1 -2/2/1996. ຜ່ານກອງປະຊຸມສຳມະນາຄັ້ງນີ້ ໄດ້ເປັນເອກະສັນ ແລະຮັບຮອງເອົາມະຕິຂອງກອງປະຊຸມທີ່ວ່າ " ພາສາຖິ່ນວຽງຈັນມີ 8 ສຽງ " ລາຍລະອຽດດັ່ງນີ້:

1. ສຽງຕ່ຳສະເໝີ: ແມ່ນຈຳພວກພະຍາງອັກສອນກາງ ບໍ່ມີໄມ້ຫຍັງ ເຊັ່ນ: ກາ,ກິນ, ດອມ, . . .
2. ສຽງກາງສະເໝີ: ແມ່ນຈຳພວກພະຍາງອັກສອນສູງ, ກາງ, ຕ່ຳ ມີໄມ້ເອກ ເຊັ່ນ: ຂ່າ, ຄ່າ, ກ່ານ, ຄ່າງ,...
3. ສຽງສູງຂຶ້ນ: ແມ່ນຈຳພວກພະຍາງອັກສອນຕ່ຳ ບໍ່ໃສ່ໄມ້ຫຍັງ ເຊັ່ນ: ຄາ,ຄາງ, ມັນ, ວຽງ. . .
4. ສຽງຕ່ຳຂຶ້ນ: ແມ່ນຈຳພວກພະຍາງອັກສອນສູງ ບໍ່ໃສ່ໄມ້ຫຍັງ ແລະພະຍາງອັກສອນກາງ ໃສ່ໄມ້ຈັດຕະວາ (ẋ) ເຊັ່ນ: ຂາ, ຂານ, ປ໋າ, ຈ໋ອມ. . .
5. ສຽງສູງຕົກ: ແມ່ນຈຳພວກພະຍາງອັກສອນກາງ-ຕ່ຳ ມີໄມ້ໂທ ແລະ ພະຍາງອັກສອນຕ່ຳ ມີສະຫຼະສຽງຍາວມີໂຕສະກົດຕາຍ(ກ, ດ, ບ ) ເຊັ່ນ: ປ້າ, ປັ້ນ, ຄ້າ, ຄັ້ນ, ຄາດ, ຊາບ, . . .
6. ສຽງກາງຕົກ: ແມ່ນຈຳພວກພະຍາງອັກສອນສູງມີໄມ້ໂທ ແລະ ສູງ-ກາງ ມີສະຫຼະສຽງຍາວມີໂຕສະກົດຕາຍ (ກ,ດ, ບ ) ເຊັ່ນ: ຂ້າ, ຂັ້ນ, ສ້າງ, ກາດ, ກີບ, ສາດ, ສອບ.. .
7. ສຽງຕ່ຳອັດ: ແມ່ນຈຳພວກພະຍາງອັກສອນສູງ-ກາງ ປະກອບກັບສະຫຼະສຽງສັ້ນ ຫຼືມີໂຕສະກົດຕາຍເຊັ່ນ: ກະ, ສະ, ກັດ, ສັດ. . .
8. ສຽງສູງອັດ: ແມ່ນຈຳພວກພະຍາງອັກສອນຕ່ຳ ປະກອບກັບສະຫຼະສຽງສັ້ນ ຫຼື ມີໂຕສະກົດຕາຍ ແລະພະຍາງ ຕາຍອັກສອນກາງມີໄມ້ຕີ ເຊັ່ນ: ຄະ, ຊະ, ຄັດ, ຊັບ, ເບ໊າະ, ...

♣ **ໃສ່ໃຈ :** ການໃຊ້ເຄື່ອງໝາຍວັນນະຍຸດ (x̃) ແລະ (ẋ) . ໄມ້ຕີ (x̃) ໃຊ້ໄດ້ກັບ ແຕ່ພະຍາງອັກສອນກາງທັງພະຍາງເປັນ ແລະພະຍາງຕາຍ ເຊັ່ນ: ກ໊ບ, ກ໊າບ, ກ໊າງ, ປ໊າງ, ໂຕໂຍ໊ຕ໊າ, ... ສ່ວນໄມ້ຈັດຕະວາ (ẋ) ກໍໃຊ້ໄດ້ກັບແຕ່ພະຍາງອັກສອນກາງຄືກັນ ແຕ່ເປັນພຽງພະຍາງເປັນເທົ່ານັ້ນ, ສ່ວນພະຍາງຕາຍໃຊ້ບໍ່ໄດ້ ເຊັ່ນ : ຈຸ໋ມ, ຈ໋ອມ (ສຽງໂຕນນ້ຳ) , ... ເຊິ່ງມີສຽງເທົ່າກັບພະຍາງອັກສອນສູງບໍ່ມີເຄື່ອງໝາຍຫຍັງ

## ຕາລາງສະຫຼຸບສຽງວັນນະຍຸດຕາມສຳນຽງວຽງຈັນ

| ສະຫຼະ, ວັນນະຍຸດ ແລະ ໂຕສະກົດ / ພະຍັນຊະນະ | ສ/ລ ສັ້ນ-ຍາວ + ສ/ກ ເປັນ: ງ,ນ,ມ,ຍ,ວ | ສ/ລ ຍາວ + ສະກົດຕາຍ | ສະຫຼະສັ້ນ ຫຼື ສ/ກ ຕາຍ | x̀ | x̂ | ສ/ລສັ້ນ-ຍາວ ຫຼື ກ,ດ,ບ ຫຼື ໄມ້ x̃ | ẋ |
|---|---|---|---|---|---|---|---|
| ອ/ສ ສູງ: ຂ ສ ຖ ຜ ຝ ຫ ຫງ ຫຍ ໜ ໝ ຫລ ຫວ | 4 | 6 | 7 | 2 | 6 | – | – |
| ອ/ສ ກາງ : ກ ຈ ດ ຕ ບ ປ ຢ ອ | 1 | 6 | 7 | 2 | 5 | 8 | 4 |
| ອ/ສ ຕ່ຳ: ຄ ງ ຍ ຊ ທ ນ ພ ຟ ມ ລ ວ ຮ | 3 | 5 | 8 | 2 | 5 | – | – |

## ເອກະສານອ້າງອີງ


1. ພູມີ ວົງວິຈິດ *ໄວຍາກອນລາວ* ພິມຈຳໜ່າຍໂດຍ ພະແນກສຶກສາສູນກາງ 1967
2. ລາຊບັນດິດສະພາລາວ *ໄວຍາກອນລາວ* ພາກ1,2,3 (ອັກຂະຫຼະວິທີ, ວະຈີວິພາກ ແລະວາກະຍະສຳພັນ) ວຽງຈັນ 1972
3. ສະຖາບັນຄົ້ນຄວ້າ ວິທະຍາສາດ ການສຶກສາແຫ່ງຊາດ *ໄວຍາກອນລາວປັດຈຸບັນ* (ສຳລັບ ໂຮງຮຽນສາມັນສຶກສາ ) ພາກທີ 1, 2 , 3 (ອັກຂະຫຼະວິທີ, ວະຈີວິພາກ ແລະວາກະຍະສຳພັນ) ອຸປະຖຳໂດຍອົງການອຸຍນີເຊັບ 2000
4. ວິທະຍາສານ ມໍລະດົກລ້ານຊ້າງ ປີທີ 1 ສະບັບທີ 2 ມີນາ 1996, ທຸມພັນ ລັດຕະນະວົງ " ອັກສອນກຸ່ຍເຈົາ"
5. ຄຳຮຸ່ງ ແສນມະນີ *ທິດສະດີພາສາ* ສຳລັບ ວິທະຍາໄລວິທະຍາສາດພື້ນຖານ 2002
6. ສີລາ ວີຣະວົງສ໌ *ປະຫວັດໂຕອັກສອນລາວ* ວຽງຈັນ 1972
7. ດຣ. ທອງຄຳ ອ່ອນມະນີສອນ *ວັດຈະນານຸກົມລາວ* ທຶນອຸປະຖຳຂອງມູນນິທິໂຕໂຢຕາ 1992
8. RUSSELL MARCUD *ວັຈນານຸກົມ ອັງກິດ-ລາວ: ລາວ-ອັງກິດ* first published by Tuttle in 1970
9. Allen D. KERR *LAO - ENGLISH DICTIONARY* WHITE LOTUS BANGKOK second Printing 1992